# ການພັດທະນາທັກສະການອ່ານຄຳສັບ ອັກສອນທຳໂດຍໃຊ້ແບບເຝິກທັກ
# ສະສຳລັບນັກສຶກສາ ສາຍ ພາສາລາວ ລະບົບ 12+4 ປີທີ 2 ທີ່
# ວິທະຍາໄລຄູສາລະວັນ

ນາງ ອໍລະວັນ ສີຫາຈັກ

ວິທະຍາໄລຄູສາລະວັນ
ສົກຮຽນ 2019

ບົດລາຍງານນີ້ເປັນສ່ວນໜຶ່ງຂອງການສຶກສາຫລັກສູດສາມັນ ແລະ ສ້າງຄູ
ເນັ້ນເລື່ອງການຈັດການຮຽນ ການສອນ
ວິທະຍາໄລຄູສາລະວັນ

ລິຂະສິດຂອງວິທະຍາໄລຄູສາລະວັນ

# ການພັດທະນາທັກສະການອ່ານຄຳສັບອັກສອນທຳໂດຍ ການໃຊ້ແບບເຝິກທັກສະ ສຳລັບນັກສຶກສາ ສາຍ ພາສາລາວ ປີທີ 2

ຜູ້ວິໄຈ: ນາງ ອໍລະວັນ ສີຫາຈັກ
ທີ່ປຶກສາ: ປອ ໂພທອງ ພົງສິງຄາມ
ປທ ຄຳຂິງ ຈັນທະວົງສັກ

ວິທະຍາໄລຄູສາລະວັນ
ສົກປີ 2019

# ໃບກຽດຕິຄຸນ

ໃນການເຮັດບົດລາຍງານການວິໄຈຂອງຂ້າພະເຈົ້າສໍາເລັດສົມບູນກໍຍ້ອນວ່າໄດ້ຮັບຄວາມຊ່ວຍເຫຼືອຈາກຫຼາຍພາກສ່ວນ, ຫຼາຍທ່ານໂດຍສະເພາະແມ່ນ ທ່ານ ປອ ໂພທອງ ພົງສີງຄາມ ແລະ ທ່ານ ປທ ຄໍາຂິງ ຈັນທະວົງສັກ ທີ່ເປັນທັງຜູ້ຊີ້ນໍາ ແລະ ເປັນທັງທີ່ປຶກສາເຊິ່ງທ່ານ ທັງສອງແມ່ນໄດ້ໃຫ້ວິທີການສຶກສາຄົ້ນຄວ້າໂດຍກົງພ້ອມນັ້ນຍັງ ໄດ້ໃຫ້ຄໍາແນະນໍາໃຫ້ຄໍາປຶກສາຢ່າງໃກ້ຊິດ ແລະ ຍັງໄດ້ສະຫຼະເວລາອັນມີຄ່າຊ່ວຍປັບປຸງດັດແກ້ໃນຂໍ້ຂາດຕົກບົກຜ່ອງເປັນຢ່າງດີຈົນເຮັດໃຫ້ບົດລາຍງານສະບັບນີ້ປະສົບຜົນສໍາເລັດດ້ວຍດີ, ໃນນີ້ຜູ້ໄຈຮູ້ສຶກມີຄວາມຊາບຊຶ້ງໃນຄວາມກະລູນາຂອງທ່ານເປັນຢ່າງຍິ່ງ ພ້ອມນີ້, ຂ້າພະເຈົ້າຈຶ່ງຂໍສະແດງຄວາມຂອບໃຈເປັນຢ່າງສູງ ມານະໂອກາດນີ້ດ້ວຍ

ຂໍສະແດງຄວາມຂອບໃຈມາຍັງທ່ານ ຜູ້ອໍານວຍການວິທະຍາໄລຄູສາລະວັນທີ່ໄດ້ໃຫ້ຄໍາແນະນໍາ ແກ່ບົດຂ້າພະເຈົ້າ ເພື່ອເຮັດໃຫ້ບົດຂອງຂ້າພະເຈົ້າສົມບູນຍິ່ງຂຶ້ນ

ຂໍສະແດງຄວາມຂອບໃຈມາຍັງການຈັດຕັ້ງວິທະຍາໄລຄູທຸກພາກສ່ວນທີ່ສະໜັບສະໜູນທຶນຮອນ ແລະ ໃຫ້ຄວາມສະດວກໃນການດໍາເນີນການວິໄຈຄັ້ງນີ້ໄດ້ສໍາເລັດ ແລະ ລຸ່ລ່ວງໄປໂດຍດີ.

**ວັນທີ.....ເດືອນ......ປີ.......**

**ຜູ້ວິໄຈ**

ນ. ອໍລະວັນ ສີຫາຈັກ

# ບົດຄັດຫຍໍ້


ການວິໄຈຄັ້ງນີ້ມີຈຸດປະສົງ: 1) ເພື່ອພັດທະນາແບບເຝິກທັກສະການອ່ານຄຳສັບອັກສອນທຳ ສຳລັບນັກສຶກສາ ສາຍພາສາລາວ ປີທີ 2 ວິທະຍາໄລຄູສາລະວັນ ມີປະສິດທິພາບຕາມເກນ 75/75. 2) ເພື່ອປຽບທຽບຜົນສຳເລັດທາງການຮຽນກ່ອນ ແລະ ຫຼັງຮຽນໂດຍໃຊ້ແບບເຝິກທັກສະການອ່ານ ຄຳສັບອັກສອນທຳສຳລັບນັກສຶກສາ ສາຍ ພາສາລາວ ປີທີ 2 ວິທະຍາໄລຄູສາລະວັນ 3) ເພື່ອຫາດັດສະນີປະສິດທິຜົນຂອງແບບເຝິກທັກສະການອ່ານ ຄຳສັບອັກສອນທຳ ສຳລັບນັກສຶກສາ ສາຍ ພາສາລາວ ປີທີ 2 ທີ່ ວິທະຍາໄລຄູສາລະວັນ ກຸ່ມຕົວຢ່າງທີ່ໃຊ້ໃນການວິໄຈຄັ້ງນີ້ແມ່ນນັກສຶກສາສາຍພາສາລາວ.

ເຄື່ອງມືທີ່ໃຊ້ໃນການວິໄຈປະກອບດ້ວຍ: 1)ແບບເຝິກທັກສະການອ່ານ ຄຳສັບອັກສອນທຳຈຳນວນ 5 ແບບ,ແບບລະ 10 ຊຸດ 2) ແບບທົດສອບວັດຜົນສຳເລັດການອ່ານຄຳສັບອັກສອນທຳ ເປັນແບບທົດສອບແບບປາລະໄນ ຊະນິດແບບຕື່ມຄຳ ຈຳນວນ 10 ຂໍ້ ແລະ ແບບອ່ານຄຳສັບຈຳນວນ 10 ຄຳສັບ. ແລະ ແບບທົດສອບອ່ານພ້ອມດ້ວຍແປ່ຄວາມໝາຍຈຳນວນ 1 ສະບັບ ສະຖິຕິໃນການວິເຄາະຂໍ້ມູນແມ່ນ ສ່ວນຮ້ອຍ(p) ຄ່າສະເລ່ຍ ($\overline{X}$) ຄ່າປະສິດທິພາບ ($E_1$ / $E_2$) ແລະ ຄ່າດັດສະນີປະສິດທິຜົນ (EI)

**ຜົນການວິໄຈພົບວ່າ:**

1. ການພັດທະນາແບບເຝິກທັກສະການອ່ານ ຄຳສັບອັກສອນທຳ ສຳລັບ ນັກສຶກສາ ສາຍ ພາສາລາວ ປີທີ 2 ທີ່ ວິທະຍາໄລຄູສາລະວັນເຫັນວ່າມີປະສິດທິພາບເທົ່າກັບ 77,76 /86,92

2. ຜົນສຳເລັດການຮຽນດ້ານທັກສະການອ່ານຄຳສັບອັກສອນທຳລະຫວ່າງກ່ອນຮຽນ ແລະ ຫຼັງຮຽນ ພົບວ່າ ຫຼັງຮຽນສູງກວ່າກ່ອນຮຽນເຊິ່ງມີຄະແນນສະເລ່ຍກ່ອນຮຽນເທົ່າກັບ 4,76 ແລະ ຫຼັງຮຽນເທົ່າກັບ 8.69

3. ຄ່າດັດສະນີປະສິດທິຜົນຂອງການຮຽນຮູ້ທັກສະການອ່ານ ຄຳສັບອັກສອນທຳ ຂອງ ນັກສຶກສາ ສາຍ ພາສາລາວ ປີທີ 2 ເຫັນວ່າ: ມີຄ່າດັດສະນີປະສິດທິຜົນເທົ່າກັບ0.75 ເຊິ່ງເປັນໄປຕາມເກນທີ່ຕັ້ງໄວ້.

# ສາລະບານ

ໜ້າ


ໃບກຽດຕິຄຸນ ງ
ບົດຄັດຫຍໍ້ ຈ
ສາລະບານ ສ
ສາລະບານຕາຕະລາງ ຊ
ບົດທີ 1 ພາກສະເໜີ 1
ຄວາມເປັນມາ ແລະ ຄວາມສຳຄັນຂອງບັນຫາ 1
ຈຸດປະສົງຂອງການວິໄຈ 2
ສົມມຸດຖານການວິໄຈ 2
ຂອບເຂດການວິໄຈ 3
ນິຍາມສັບສະເພາະ 4
ປະໂຫຍດທີ່ຄາດວ່າຈະໄດ້ຮັບ 4
ບົດທີ 2 ເອກະສານ ແລະ ງານວິໄຈທີ່ກ່ຽວຂ້ອງ 5
ການອ່ານ 5
ພາກອັກຂະຫຼະວິທີ 13
ການຈັດການຮຽນການສອນໂດຍໃຊ້ແບບເຝິກ 24
ການວັດ ແລະ ປະເມີນຜົນ 29
ງານວິໄຈທີ່ກ່ຽວຂ້ອງ 46
ບົດທີ 3 ວິທີດຳເນີນການວິໄຈ 47
ລະບຽບວິທີວິໄຈ 47
ປະຊາກອນ ແລະ ກຸ່ມຕົວຢ່າງ 47
ເຄື່ອງມືທີ່ໃຊ້ໃນການວິໄຈ 47
ການເກັບລວບລວມຂໍ້ມູນ 49
ການວິເຄາະຂໍ້ມູນແລະສະຖິຕິທີ່ໃຊ້ 49
ບົດທີ 4 ຜົນການວິເຄາະຂໍ້ມູນ 51
ສັນຍາລັກທີ່ໃຊ້ໃນການສະເໜີຜົນການວິເຄາະ 51
ລຳດັບຂັ້ນຕອນໃນການສະເໜີຜົນການວິເຄາະ 51
ຜົນການວິເຄາະຂໍ້ມູນ 51
ບົດທີ 5 ສະຫຼຸບຜົນການວິໄຈ, ອະພິປາຍຜົນ ແລະ ຂໍ້ສະເໜີແນະ 58
ສະຫຼຸບຜົນການວິໄຈ 58

ອະພິປາຍຜົນ 59
ຂໍ້ສະເໜີແນະ 60
ເອກະສານອ້າງອີງ 61
ພາກເພີ່ມເຕີມ 62
ກ. ເຄື່ອງມືໃນການວິໄຈ 64
ຂ. ແບບເຝິກທັກສະ 65
ຄ . ແບບທົດສອບ 115
ຄ. ຄຳຕອບແບບເຝິກທັກສະ 121

# ສາລະບານຕາຕະລາງ

ໜ້າ

ຕາຕະລາງທີ 4.1 ຄະແນນສະເລ່ຍລະຫວ່າງຮຽນຫາປະສິດທິພາບຂອງແບບເຝິກ......... 88
ຕາຕະລາງທີ 4.2 ຄະແນນໄດ້ຈາກການສອບວັດຜົນສຳເລັດທາງການຮຽນ 89
ຕາຕະລາງທີ 4.3 ປະສິດທິພາບຂອງແບບເຝິກທີ່ພັດທະນາຂຶ້ນ 90
ຕາຕະລາງທີ 4.4 ຄະແນນທັດສອບທີ່ໄດ້ຈາກການທົດສອບກ່ອນການຮຽນ 90
ຕາຕະລາງທີ 4.5 ປຽບທຽບທົດສອບກ່ອນຮຽນ ແລະ ຫຼັງຮຽນ 91
ຕາຕະລາງທີ 4.6 ຜົນການວິເຄາະຫາຄ່າດັດສະນີປະສິດທິຜົນຂອງການຮຽນຮູ້ 92

# ບົດທີ 1
# ພາກສະເໜີ

## ຄວາມເປັນມາ ແລະ ຄວາມສຳຄັນຂອງບັນຫາ

ການສຶກສາ ແມ່ນຂະບວນການວິວັດແຫ່ງການຮຽນ-ການສອນທາງດ້ານວິທະຍາສາດ-ທຳມະຊາດສັງຄົມ ແລະ ການຄົ້ນຄວ້າທິດສະດີ, ພຶດຕິກຳເພື່ອສ້າງຄົນໃຫ້ມີການຂະຫຍາຍຕົວຮອບດ້ານ ມີຄຸນສົມບັດສິນທຳປະຕິວັດ, ມີຄວາມຮູ້ຄວາມສາມາດ, ມີວິຊາຊີບ, ມີສຸຂະພາບພາລາມາໄມ, ມີຄວາມສີວິໄລທາງດ້ານຈິດໃຈ, ມີສິລະປະ, ມີລະບຽບວິໄນ, ມີນ້ຳໃຈຮັກຊາດ, ຮັກລະບອບປະຊາທິປະໄຕປະຊາຊົນ. (ກົດໝາຍວ່າດ້ວຍການສຶກສາ 2008)

ໃນນັ້ນຄົນເຮົາກ່ອນຈະມີພ້ອມຄວາມຮູ້ຄວາມສາມາດແມ່ນຕ້ອງໄດ້ພັດທະນາຕົນເອງເຊິ່ງການພັດທະນານັ້ນຕ້ອງອາໄສການເຝິກປະຕິບັດຫຼາຍຢ່າງ ໂດຍຍສະເພາະການເຝິກປະຕິບັດກ່ຽວກັບກັບອ່ານ ເຊິ່ງວ່າການເຝິກດານອ່ານນັ້ນແມ່ນການປະຕິບັດແບບໜຶ່ງທີ່ເຮັດໃຫ້ຄົນເຮົາມີຄວາມຊຳນິຊຳນານ ມີຄວາມຈື່ຈຳ, ຄວາມເຂົ້າໃຈກ່ຽວກັບສິ່ງທີ່ຕົນໄດ້ເຝິກອ່ານເຊິ່ງກົງກັບທິດສະດີຂອງ ( ສະສິທອນ ທັນລັກຄະນາໃນ  1999 ) ທີ່ໄດ້ໃຫ້ນິຍາມຂອງແບບເຝິກທີ່ວ່າ: ແບບເຝິກການອ່ານແມ່ນແບບເຝິກທີ່ຊ່ວຍເສີມທັກສະຄວາມເຂົ້າໃຈ ເຝິກທັກສະຕ່າງໆ ແລະ ທົດສອບຄວາມສາມາດຂອງນັກຮຽນຕາມບົດຮຽນທີ່ຄູສອນວ່ານັກຮຽງເຂົາໃຈ ແລະ ສາມາດນຳໄປໃຊ້ໄດ້ຫຼາຍໜ້ອຍຊໍ່າໃດ.

ການສຶກສາຂອງຊາດມີຈຸດມຸ້ງໝາຍພັດທະນາຊັບພະຍາກອນມະນຸດໃຫ້ຈະເລີນງອກງາມທຸກໆດ້ານ, ການສຶກສາແມ່ນປັດໄຈໜຶ່ງທີ່ເປັນເຄື່ອງມືພັດທະນາຊັບພະຍາກອນມະນຸດໂດຍເລັ່ງໃສ່ການສຶກສາໃຫ້ມີຄວາມກຽມພ້ອມທີ່ຈະເປັນທ່າແຮງໃນການພັດທະນາເສດຖະກິດ-ສັງຄົມວັດທະນະທຳ ແລະ ການເມືອງຂອງປະເທດ. ການສຶກສາເປັນປັດໄຈພື້ນຖານສຳຄັນທີ່ເຮັດໃຫ້ການພັດທະນາຄຸນນະພາບຊີວິດ ແລະ ສັງຄົມ, ໂດຍພັດທະນາໃຫ້ມີຄວາມຮູ້, ຄວາມສາມາດ, ມີທັດສະນະຄະຕິທີ່ດີຕໍ່ຊາດ.

ໃນນັ້ນ, ພາສາລາວແມ່ນມໍລະດົກອັນລ້ຳຄ່າທາງວັດທະນະທຳ ອັນກໍ່ໃຫ້ເກີດມີຄຸນນະພາບຂອງຄົນໃນຊາດໃຫ້ມີຄວາມເປັນຊາດ, ເປັນເຄື່ອງມືໃນການຕິດຕໍ່ສື່ສານເພື່ອຄວາມເຂົ້າໃຈ.

ສະນັ້ນ, ບຸກຄົນໃດທີ່ສາມາດໃຊ້ພາສາໄດ້ດີຍ່ອມດຳລົງຊີວິດຢ່າງມີຄວາມສຸກ ແລະ ສາມາດດຳເນີນກິດຈະກຳຕ່າງໆໄດ້ຢ່າງມີປະສິດທິພາບ, ຜູ້ທີ່ຈະໃຊ້ພາສາໄດ້ດີກໍ່ຕ້ອງມີຄວາມເຂົ້າໃຈ ແລະ ສຶກສາຫຼັກເກນທາງພາສາ, ພ້ອມທັງເຝິກຝົນໃຫ້ມີທັກສະພື້ນຖານທາງພາສາ ຄື: ທັກສະການຟັງ, ທັກສະການເວົ້າ, ທັກສະການອ່ານ ແລະ ທັກສະການຂຽນຢ່າງມີປະສິດທິພາບເພື່ອນຳໄປໃຊ້ໃນຊີວິດປະຈຳວັນ. ເຊິ່ງໃນນັ້ນຕົວອັກສອນ ແລະ ພາສາຂອງແຕ່ລະເຜົ່າລ້ວນແຕ່ມີບົດບາດ ແລະ ໜ້າທີ່ໃນຕົວຂອງມັນເອງໃນການບັນທຶກ ແລະ ຖ່າຍທອດເລື່ອງລາວຕ່າງໆຂອງໃນແຕ່ລະຍຸກແຕ່ລະສະໄໝ. ໃນນັ້ນຊາດລາວກໍ່ເປັນຊາດໜຶ່ງທີ່ເກົ່າແກ່ທີ່ມີອາລິຍະທຳເປັນຂອງຕົນຢ່າງມີເອກະລັກໂດຍສະເພາະແມ່ນຕົວອັກສອນເຊິ່ງໃນສະໄໝກ່ອນລາວເຮົາມີອັກສອນໃຊ້ 2 ແບບ ຄື: ອັກສອນລາວບູຮານ ແລະ ອັກສອນລາວເດີມ, ອັກສອນລາວບູຮານອັກສອນຂອງຊົນຊາດລາວບັນດາເຜົ່າໃຊ້ກັນມາຄູ່ກັບຊົນຊາດລາວ, ໃນປີ ຄສ 1910 ສະພາຈັນທະບູລີໄດ້ກຳເນີດເກີດຂຶ້ນ ແລະ ກຳນົດໃຫ້ອັກສອນລາວບູຮານໃຫ້ຂຽນ ອັກສອນທາງພຸດທະຈັກ ( ພຸດທະສາສາໜາ) ແຕ່ນັ້ນມາອັກສອນເຫຼົ່ານີ້ຈຶ່ງຮູ້ຈັກໃນນາມ ອັກສອນທຳ, ເຊິ່ງອັກສອນທຳນີ້ໃນສະໄໝອານາຈັກລາວລ້ານຊ້າງຍັງເປັນອັກສອນທີ່ສຳຄັນໃນການບັນທຶກເຫດການທາງປະຫວັດສາດ ແລະ ການບັນທຶກຄວາມຮູ້ທ້ອງຖິ່ນພູມປັນຍາ  ແລະ ອາລິຍະທຳຂອງແຕ່ລະທ້ອງຖິ່ນ.

ອັກສອນທຳໄດ້ກາຍເປັນວິຊາຮຽນໜຶ່ງທີ່ໄດ້ຈັດເຂົ້າໃນຫຼັກສູດການຮຽນ - ການສອນຂອງນັກສຶກສາສາຍພາສາລາວປີທີ 2 ເຊິ່ງເປັນວິຊາທີ່ເວົ້າເຖິງຕົວອັກສອນດັ່ງເດີມຂອງລາວ ເປັນອັກສອນຊະນິດໜຶ່ງຂອງລາວທີ່ເພິ່ນໄດ້ໃຊ້ໃນສະໄໝຂອງເຈົ້າຟ້າງຸ່ມມະຫາລາດໃຊ້ບັນທຶກຫຼັກທຳຄຳສອນຂອງພະພຸດທະເຈົ້າ, ໜັງສື,  ນິທານ,  ບູຮານຄະດີຕ່າງໆ ທີ່ເປັນພູມປັນຍາຂອງບັນພະບູລຸດລາວເຮົາໃນສະໄໝກ່ອນກໍຄືສະໄໝປະຈຸບັນ ເພື່ອເປັນການປົກປັກຮັກສາ

ແລະ ເສີມຂະຫຍາຍຕົວອັກສອນທຳໃຫ້ຢູ່ຄ່ຽງຄູ່ກັບຄົນລາວທຸກຍຸກທຸກສະໄໝເຮົາຈຳເປັນຕ້ອງໄດ້ພັດທະນານັກສຶກສາສາຍພາສາລາວໃຫ້ມີຄວາມຮູ້ເລິກເຊິ່ງ ແລະ ເຝິກທັກສະຕ່າງໆກ່ຽວກັບອັກສອນທຳ ໂດຍສະເພາະທັກສະທາງດ້ານການອ່ານອັກສອນທຳເພື່ອໃຫ້ມີຄວາມຊຳນິຊຳນານທາງດ້ານການອ່ານຄຳສັບອັກສອນທຳເພື່ອຈະໄດ້ນຳໄປເຜີຍແຜ່, ນຳໄປໃຊ້ໃນອະນາຄົດ ພ້ອມທັງເປັນການປົກປັກຮັກສາອັກສອນລາວເດີມຂອງເຮົາໄວ້. ດັ່ງນັ້ນຄູສອນວິຊາອັກສອນທຳຈຳເປັນຕ້ອງປັບປຸງລັກສະນະການຈັດການຮຽນ-ການສອນ ແລະ ເລືອກໃຊ້ສື່ເປັນອົງປະກອບສຳຄັນໃນການພັດທະນາທັກສະທາງພາສາ ເຊິ່ງການສອນນີ້ມີຜູ້ສະເໜີແນະການຈັດການຮຽນ-ການສອນທີ່ໜ້າສົນໃຈວິທີໜຶ່ງຄື: ການສອນໂດຍໃຊ້ແບບເຝິກ ເພາະແບບເຝິກ ແມ່ນສື່ການຮຽນ - ການສອນທີ່ສ້າງຂຶ້ນເພື່ອພັດທະນາ ແລະ ເສີມທັກສະຕ່າງໆ ໃຫ້ຜູ້ຮຽນມີປະສົບການ ສາມາດນຳຄວາມຮູ້ໄປໃຊ້ຢ່າງຖືກຕ້ອງ ເຊິ່ງຜູ້ຮຽນໄດ້ຮຽນຮູ້ຈາກການປະຕິບັດຕົວຈິງ ເຮັດໃຫ້ການຈົດຈຳສິ່ງທີ່ຮຽນໄດ້ດີຍິ່ງຂຶ້ນ ແບບເຝິກມີຄວາມສຳຄັນຢ່າງຍິ່ງໃນການພັດທະນາການຮຽນ - ການສອນທຸກວິຊາ ໂດຍສະເພາະການເຝິກທັກສະທາງພາສາທຸກໆດ້ານ ເປັນເຄື່ອງມືຊ່ວຍໃຫ້ເກີດການຮຽນຮູ້, ເກີດແຮງຈູງໃຈ , ສາມາດກວດສອບຜົນການຮຽນເຮັດໃຫ້ຮູ້ຄວາມກ້າວໜ້າ ແລະ ຂໍ້ບົກຜ່ອງອັນສົ່ງຜົນຕໍ່ປະສິດທິພາບໃນການຮຽນໄດ້ເປັນຢ່າງດີ. ແບບເຝິກມີຄວາມສຳຄັນຕໍ່ຜູ້ຮຽນເພາະຊ່ວຍເສີມສ້າງທັກສະການຮຽນຮູ້ໃຫ້ແກ່ຜູ້ຮຽນ ເຮັດໃຫ້ຜູ້ຮຽນເກີດການຮຽນຮູ້ໄດ້ໄວ ແລະ ຊັດເຈນຂຶ້ນຍິ່ງຂຶ້ນ. ສິ່ງຜົນໃຫ້ການສອນຂອງຄູຜູ້ສອນ ແລະ ຜົນການຮຽນຂອງນັກຮຽນປະສົບຜົນສຳເລັດຢ່າງມີປະສິດທິພາບ( ສຸຄົນ ສິນທະພານົນ 2010) ແບບເຝິກສາມາດລົດພາລະຂັ້ນຕອນຂອງຄູ ແຕ່ຊ່ວຍເພີ່ມປະສິດທິພາບການຮຽນຮູ້ ເປັນເຄື່ອງມືຊ່ວຍໃຫ້ເກີດການຮຽນຮູ້ ເກີດແຮງຈູງໃຈ ແລະ ສາມາດກວດສອບຜົນການຮຽນເຮັດໃຫ້ຮູ້ຄວາມກ້າວໜ້າ ແລະ ຂໍ້ບົກຜ່ອງອັນສົ່ງຜົນປະສິດທິພາບໃນການຮຽນໄດ້ເປັນຢ່າງດີ ( ວິລະໄທພານິດ 1985 ) ໄດ້ກ່າວເຖິງປະໂຫຍດຂອງການໃຊ້ແບບເຝິກໄວ້ວ່າ: ແບບເຝິກເປັນເຄື່ອງມືທີ່ຈະຊ່ວຍໃຫ້ເກີດການຮຽນຮູ້ ທີ່ເກີດຈາກການກະທຳຈິງເປັນປະສົບການກົງທີ່ຜູ້ຮຽນມີຈຸດມຸ້ງໝາຍທີ່ແນ່ນອນ ເຮັດໃຫ້ນັກຮຽນເຫັນຄຸນຄ່າຂອງສິ່ງທີ່ຮຽນ ສາມາດຮຽນຮູ້ແລະຈົດຈຳສິ່ງທີ່ຮຽນໄດ້ດີ ແລະນຳການຮຽນຮູ້ນັ້ນໄປໃຊ້ ແບບເຝິກມີປະໂຫຍດຕໍ່ນັກຮຽນຢ່າງຍິ່ງ ເປັນເຄື່ອງມືຊ່ວຍໃຫ້ນັກຮຽນເກີດການຮຽນຮູ້ໄດ້ໄວຂຶ້ນ ແລະເຮັດໃຫ້ນັກຮຽນເກີດທັກສະ ມີຄວາມຊຳນານ, ມີຄວາມຄ່ອງແຄ້ວ ແລະ ມີຄວາມເຂົ້າໃຈ ກໍ່ໃຫ້ເກີດຄວາມສຳເລັດໃນການຮຽນຮູ້ໄດ້ອີກດ້ວຍ.

## ຈຸດປະສົງຂອງການວິໄຈ

1. ເພື່ອພັດທະນາແບບເຝິກທັກສະການອ່ານຄຳສັບອັກສອນທຳ
2. ເພື່ອປຽບທຽບຜົນສຳເລັດທາງການຮຽນກ່ອນ ແລະ ຫຼັງຮຽນໂດຍນຳໃຊ້ແບບເຝິກທັກສະການອ່ານຄຳສັບ ສຳລັບນັກສຶກສາ ລະບົບ 12+4 ສາຍພາສາລາວປີທີ 2
3. ເພື່ອຫາດັດສະນີປະສິດທິຜົນ ຂອງແບບເຝິກທັກສະ ການອ່ານຄຳອັກສອນທຳ ຂອງນັກສຶກສາ ສາຍພາສາລາວ ປີທີ 2 ວິທະຍາໄລຄູສາລະວັນ.

## ສົມມຸດຖານການວິໄຈ

1. ແບບເຝິກທັກສະການການອ່ານຄຳສັບອັກສອນທຳ ສຳລັບນັກສຶກສາສາຍພາສາລາວ ປີທີ 2 ວິທະຍາໄລຄູສາລະວັນ.
2. ຜົນສຳເລັດທາງການຮຽນເລື່ອງການອ່ານຄຳສັບອັກສອນທຳ ສຳລັບນັກສຶກສາ ສາຍພາສາລາວ ປີທີ2 ວິທະຍາໄລຄູສາລະວັນ ຫຼັງຮຽນສູງກວ່າກ່ອນຮຽນ.
3. ເພື່ອຫາດັດສະນີປະສິດທິຜົນຂອງແບບເຝິກທັກສະການອ່ານຄຳສັບອັກສອນທຳຂອງນັກສຶກສາ ສາຍ ພາສາລາວ ປີທີ 2 ວິທະຍາໄລຄູສາລະວັນ.

## ຂອບເຂດຂອງການວິໄຈ

### ຂອບເຂດທາງດ້ານເນື້ອໃນ

ຂອບເຂດທາງດ້ານເນື້ອໃນສໍາລັບການວິໄຈໃນຫົວຂໍ້ "ການພັດທະນາທັກສະການອ່ານຄໍາສັບອັກສອນທໍາ ໂດຍນໍາໃຊ້ແບບເຝິກທັກສະສໍາລັບນັກສຶກສາ ສາຍ ພາສາລາວ ປີທີ 2 ແມ່ນສຶກສາການນໍາໃຊ້ແບບເຝິກທັກສະເຂົ້າໃນການຈັດການຮຽນ-ການສອນການອ່ານອັກສອນທໍາຂອງ ແມ່ ອາ, ແມ່ ອິກ, ແມ່ ອິງ, ແມ່ ອິດ, ແມ່ ອິນ , ແມ່ ອິບ, ແມ່ ອິມ, ແມ່ ເອີຍ, ແມ່ ເອົາ, ບົດອ່ານສິນທ້າ ແລະ ບົດອ່ານປັນຍາປາລະມີ.

### ຂອບເຂດທາງດ້ານປະຊາກອນ ແລະ ກຸ່ມຕົວຢ່າງ

ປະຊາກອນ ແລະ ກຸ່ມຕົວຢ່າງສໍາລັບການວິໄຈໃນຫົວຂໍ້ "ການພັດທະນາທັກສະການອ່ານຄໍາສັບອັກສອນທໍາ ໂດຍນໍາໃຊ້ແບບເຝິກທັກສະ ສໍາລັບ ນັກສຶກສາລະບົບ 12+4 ສາຍ ພາສາລາວປີທີ 2 ວິທະຍາໄລຄູສາລະວັນ, ຜູ້ວິໄຈໄດ້ສະເພາະເຈາະຈົງເອົານັກສຶກສາຄູສາຍ ພາສາລາວ ປີທີ 2 ເຊິ່ງມີຈໍານວນພົນທັງໝົດ 26 ຄົນ, ຍິງ 16 ຄົນ.

### ຂອບເຂດທາງດ້ານເວລາ

ສໍາລັບການວິໄຈໃນຫົວຂໍ້ "ການພັດທະນາທັກສະການອ່ານຄໍາສັບອັກສອນທໍາ ໂດຍນໍາໃຊ້ແບບເຝິກທັກສະ ສໍາລັບ ນັກສຶກສາ ລະບົບ 12+4 ສາຍ ພາສາລາວປີທີ 2 ເລີ່ມລົງມືດໍາເນີນການວິໄຈນັບແຕ່ວັນທີ 1/9/2019 ເຖິງ 1/ 2 / 2020 ເປັນເວລາ 6 ເດືອນ.

### ຂອບເຂດທາງດ້ານສະຖານທີ

ສະຖານທີ່ສໍາລັບດໍາເນີນການວິໄຈໃນຫົວຂໍ້ " ການພັດທະນາທັກສະການອ່ານຄໍາສັບອັກສອນທໍາ ໂດຍໃຊ້ແບບເຝິກທັກສະ ແມ່ນດໍາເນີນຢູ່ວິທະຍາໄລຄູສາລະວັນເກັບກໍາຂໍ້ມູນທີ່ຫ້ອງພາສາລາວ ປີທີ 2.

### ຂອບເຂດທາງດ້ານຕົວປ່ຽນ

ຜູ້ວິໄຈໄດ້ກໍານົດຕົວປ່ຽນສໍາລັບດໍາເນີນການວິໄຈໃນຫົວຂໍ້ " ການພັດທະນາທັກສະການອ່ານຄໍາສັບອັກສອນທໍາ ໂດຍໃຊ້ແບບເຝິກທັກສະສໍາລັບນັກສຶກສາລະບົບ 12+4 ສາຍ ພາສາລາວ ປີທີ 2 ວິທະຍາໄລຄູສາລະວັນ ໄວ້ດັ່ງນີ້:

**ຕົວປ່ຽນຕົ້ນ**

ແບບເຝິກທັກສະການອ່ານຄໍາສັບອັກສອນທໍາ

→

**ຕົວປ່ຽນຕາມ**

- ປະສິດທິພາບຂອງແບບເຝິກທັກສະສູງກວ່າເກນທີ່ກໍານົດໄວ້
- ຜົນສໍາເລັດການຮຽນຮູ້ດ້ານການອ່ານຄໍາສັບອັກສອນທໍາທີ່ມີຄະແນນ ສູງກວ່າເກນທີ່ກໍານົດໄວ້.

## ຜົນປະໂຫຍດທີ່ຄາດວ່າຈະໄດ້ຮັບ

1. ໄດ້ແບບເຝິກທັກສະການອ່ານສະກົດຄຳອັກສອນທຳ ສຳລັບນັກສຶກສາ ລະບົບ 12+4 ສາຍ ພາສາລາວປີທີ 2
2. ນັກສຶກສາສາຍພາສາລາວມີທັກສະໃນການອ່ານສະກົດຄຳອັກສອນທຳໄດ້ດີຂຶ້ນ
3. ນັກສຶກສາສາຍພາສາລາວມີຜົນສຳເລັດທາງການຮຽນເລື່ອງການອ່ານຄຳສັບອັກສອນທຳສູງຂຶ້ນ

## ນິຍາມສັບສະເພາະ

- ອັກສອນທຳ: ໝາຍເຖິງອັກສອນຊັ້ນສູງ , ອັກສອນສັກສິດ, ອັກສອນທີ່ໃຊ້ບັນທຶກຈົດກ່າຍຫຼັກທຳຄຳສອນຂອງພະພຸດທະເຈົ້າ.

- ການພັດທະນາທັກສະການອ່ານຄຳສັບອັກສອນທຳ: ໝາຍເຖິງການປ່ຽນແປງການອ່ານຄຳສັບອັກສອນທຳໄປໃນທາງທີ່ດີຂຶ້ນ ຫຼື ປ່ຽນແປງໄປໃນທາງທີ່ຈະເລີ່ນ ແລະ ກ້າວໜ້າເຊິ່ງເປັນຂະບວນການຮູ້ການແປ່ຕົວອັກສອນທີ່ສະຫຼັບສັບຊ້ອນເພື່ອສ້າງ ຫຼື ເອົາຄວາມໝາຍເຊິ່ງກໍໃຫ້ເກີດຄວາມຊຳນິຊຳນານ

- ແບບເຝິກທັກສະການອ່ານໝາຍເຖິງ:ແບບເຝິກທັກສະການອ່ານຄຳສັບທີ່ຖືສ້າງຂຶ້ນໂດຍມີຮູບແບບກິດຈະກຳທີ່ຫຼາກຫຼາຍ ມີຈຸດປະສົງເພື່ອໃຫ້ນັກຮຽນມີຄວາມຮູ້, ຄວາມເຂົ້າໃຈບົດຮຽນໄດ້ດີຍິ່ງຂຶ້ນເຊິ່ງຜູ້ວິໄຈສ້າງຂຶ້ນຈຳນວນ 5 ຊຸດ.

- ປະສິດທິພາບຂອງແບບເຝິກ ໝາຍເຖິງ ແບບເຝິກການອ່ານຄຳສັບກຸ່ມການຮຽນຮູ້ຂອງນັກສຶກສາສາຍພາສາລາວ ປີທີ 2 ທີ່ມີປະສິດທິພາບຕາມເກນ 75/75

75 ຕົວທຳອິດໝາຍເຖິງ: ຄະແນນສະເລ່ຍສ່ວນຮ້ອຍທີ່ໄດ້ຈາກການການເຮັດແບບທົດລະຫວ່າງທີ່ນຳໃຊ້ແບບເຝິກທັກສະການອ່ານຄຳສັບອັກສອນທຳແຕ່ລະຄັ້ງ.

**75** ຕົວຫຼັງ ໝາຍເຖິງ ຄະແນນສະເລ່ຍສ່ວນຮ້ອຍທີ່ໄດ້ຈາກການທົດສອບວັດຜົນສຳເລັດທາງການຮຽນດ້ານການອ່ານຄຳສັບອັກສອນທຳຫຼັງຮຽນ.

- ຜົນສຳເລັດທາງການຮຽນ ໝາຍເຖິງ ຄວາມຮູ້ ຄວາມສາມາດ ແລະ ການພັດທະນາການຮຽນຂອງນັກຮຽນໃນການອ່ານຄຳສັບອັກສອນທຳທີ່ໄດ້ຄະແນນສະສົມໃນລະດັບ 80 ສ່ວນຮ້ອຍຂອງຄະແນນທັງໝົດ.

# ບົດທີ2
# ແນວຄິດ, ທິດສະດີ, ເອກະສານ ແລະ ງານວິໄຈທີ່ກ່ຽວຂ້ອງ

ການວິໄຈໃນຫົວຂໍ້: ການພັດທະນາທັກສະການ ອ່ານຄໍາສັບອັກສອນທໍາ ສໍາລັບນັກສຶກສາ ລະບົບ 12+4 ປີທີ2 ສາຍ ພາສາລາວ ວິທະຍາໄລຄູສາລະວັນ ຜູ້ວິໄຈໄດ້ທໍາການສຶກສາຄົ້ນຄວ້າບັນດາທິດສະດີ, ເອກກະສານ ແລະ ງານວິໄຈທີ່ກ່ຽວຂ້ອງ ເຊິ່ງຈະໄດ້ນໍາສະເໜີດັ່ງລຸ່ມນີ້:

1. ການອ່ານ
   - 1.1 ຄວາມໝາຍຂອງການອ່ານ
   - 1.2 ຄວາມສໍາຄັນຂອງການອ່ານ
   - 1.3 ຈຸດປະສົງຂອງການອ່ານ
   - 1.4 ຄຸນຄ່າຂອງການອ່ານ
   - 1.5 ປະເພດຂອງການອ່ານ
   - 1.6 ວິທີສອນອ່ານຕົວອັກສອນທໍາ
   - 1.7 ຂັ້ນຕອນໃນການສອນອ່ານອັກສອນທໍາ
2. ຄວາມໝາຍຂອງອັກຂະຫຼະວິທີ
   - 2.1 ຕົວອັກສອນ, ວັນນະຍຸດ
   - 2.2 ໜ້າທີ່ຂອງພະຍັນຊະນະ
3. ການຈັດການຮຽນ - ການສອນໂດຍໃຊ້ແບບເຝິກ
   - 3.1 ຄວາມໝາຍຂອງແບບເຝິກ
   - 3.2 ຄວາມສໍາຄັນຂອງແບບເຝິກ
   - 3.3 ຫຼັກການສ້າງແບບເຝິກ
   - 3.4 ລັກສະນະຂອງແບບເຝິກທີ່ດີ
   - 3.5 ປະໂຫຍດຂອງແບບເຝິກ
4. ການວັດ ແລະ ປະເມີນຜົນ
   - 4.1 ຄວາມໝາຍຂອງການວັດ ແລະ ປະເມີນຜົນ
   - 4.2 ຂໍ້ສອບແບບປາລະໄນ ແລະ ອັດຕະໄນ
   - 4.3 ການຂຽນຂໍ້ສອບດ້ານພຶດຕິກໍາ
5. ງານວິໄຈທີ່ກ່ຽວຂ້ອງ

## ການອ່ານ

### 1.1 ຄວາມໝາຍຂອງການອ່ານ

ການອ່ານແມ່ນມີຄວາມສໍາຄັນໃນຊີວິດປະຈໍາວັນ ໂດຍສະເພາະແມ່ນການສຶກສາວິຊາການຕ່າງໆ. ການອ່ານເຮັດໃຫ້ເຮົາມີຄວາມຮູ້ສຶກນຶກຄິດເຖິງອະດີດ ແລະປັດຈຸບັນ, ຊ່ວຍເພີ່ມພູນສະຕິປັນຍາ, ຮູ້ຂໍ້ຄວາມເປັນຈິງ. ສະນັ້ນ, ມີຄວາມຈໍາປັນຕ້ອງໄດ້ເຝິກທັກສະການອ່ານເປັນຢ່າງດີ.

ການອ່ານໝາຍເຖິງຂະບວນການຕີຄວາມໝາຍ ຫຼື ສ້າງຄວາມເຂົ້າໃຈຈາກຕົວອັກສອນອື່ນໆ. ຊ່ວຍໃຫ້ຜູ້ອ່ານເຂົ້າໃຈຫຼາຍຂຶ້ນ. ຂະບວນການຕ່າງໆທີ່ກໍ່ໃຫ້ເກີດຄວາມເຂົ້າໃຈທີ່ຮຽກວ່າ ສິລະປະການອ່ານ

ທ່ານ ຣູດທູດ (Ruth Tooze 2009 ) ໄດ້ກໍານົດຄວາມໝາຍຂອງການອ່ານໄວ້ ໂດຍສະຫຼຸບວ່າ ການອ່ານໝາຍເຖິງສິ່ງຕໍ່ໄປນີ້:

- ການເຂົ້າສູ່ແຫຼ່ງທີ່ມີຊີວິດຢູ່ ແລະ ການຮຽນຮູ້ທີ່ສົມບູນ.

- ການພາໃຫ້ເກີດຄວາມສະບາຍໃຈ ແລະ ຈິດໃຈແຈ່ມໃສ.

- ການອ່ານເປັນອົງປະກອບສຳຄັນທີ່ສຸດ ໃນດ້ານສິລະປະກ່ຽວກັບພາສາສາດເຊິ່ງມີຢູ່ 4 ດ້ານຄື: ການຟັງ, ການເວົ້າ. ການອ່ານ ແລະ ການຂຽນ.

- ການອ່ານແມ່ນການສົ່ງເສີມຕົນເອງ, ປັບປຸງຕົນເອງໃຫ້ຈະເລີນເຕີບໂຕເປັນຜູ້ໃຫຍ່ທີ່ສົມບູນ.

- ການອ່ານເປັນການສົ່ງເສີມອາລົມຈິດຂອງແຕ່ລະຄົນໃຫ້ສຳພັນກັບຜູ້ອື່ນ ເປັນການປັບປຸງຕົນເອງໃຫ້ເຂົ້າກັບຄົນອື່ນໄດ້.

ທ່ານ ເບີມາດ ໄອ ສະມິດ Bermard I Schmidt ( 2009 ) ໄດ້ໃຫ້ຄຳຈຳກັດຄວາມຂອງການອ່ານໄວ້ວ່າ" ແມ່ນ ຂະບວນການທີ່ສະຫຼັບຊັບຊ້ອນ,ຫຍຸ້ງຍາກ ຍັງບໍ່ມີຄວາມໝາຍທີ່ແນ່ນອນ,ອາດເວົ້າໄດ້ວ່າ ເປັນທຸກສິ່ງທຸກຢ່າງຈາກຄຳທີ່ຈຳໄດ້ໄປສູ່ຄວາມສຳນຶກຄິດຕ່າງໆ. ການອ່ານຂອງແຕ່ລະຄົນຍ່ອມແຕກຕ່າງກັນໄປຕາມສະພາບຮ່າງກາຍ, ສະຕິປັນຍາ ແລະ ອາລົມ.

ທ່ານ ອັນເຟຣດ ສະເຕັຟເຟີຣຸດ(Alfred Stefferud 2009 ) ໄດ້ໃຫ້ຄຳຈຳກັດຄວາມໝາຍຂອງການອ່ານໄວ້ວ່າ"ເປັນການຮອບຮອມຄວາມຄິດ, ຕີຄວາມໝາຍ ແລະ ປະເມີນຄ່າຄວາມຄິດທີ່ປະກົດໃນແຕ່ລະໜ້າພິມ"

ທ່ານ ເອດເກີເດລ ( Edger Dale 2009) ໃຫ້ຄວາມໝາຍວ່າການອ່ານໝາຍເຖິງຂະບວນການຄົ້ນຄ້ວາຫາຄວາມໝາຍຈາກສິ່ງພິມ, ເປັນການເພີ່ມພູນປະສົບການຂອງຜູ້ອ່ານ. ການອ່ານບໍ່ໄດ້ໝາຍຄວາມວ່າ ເບິ່ງຜ່ານສະພາບແຕ່ລະປະໂຫຍກ ຫຼື ແຕ່ລະຫຍໍ້ໜ້າເທົ່ານັ້ນ. ແຕ່ວ່າຜູ້ອ່ານຕ້ອງເຂົ້າໃຈຄວາມຄິດນັ້ນໆດ້ວຍ.

ທ່ານ ຈອດດີສະປາດ ແລະ ພອນຊີເບີກ (2009) ກ່າວວ່າ: ການອ່ານເປັນການປະສົມປະສານລະຫວ່າງທັກສະຫຼາຍຊະນິດ ເພື່ອສ້າງຄວາມເຂົ້າໃຈໂດຍເປັນໄປຕາມຈຸດປະສົງຄວາມຕ້ອງການ ແລະ ວິທີການຂອງຜູ້ອ່ານ.

ຈາກຄຳຈຳກັດຄວາມທີ່ກ່າວມາຂ້າງເທິງນັ້ນ ແລ້ວຍັງມີບາງບັນຫາເພີ່ມເຕີມດັ່ງນີ້:

- ການອ່ານ ແມ່ນຂະບວນການຄົ້ນຄວ້າຫາຄວາມໝາຍໃນສິ່ງທີ່ອ່ານ

- ການອ່ານ ແມ່ນຂະບວນການຈັບໃຈຄວາມຈາກສິ່ງທີ່ອ່ານໄດ້.

- ການອ່ານ ແມ່ນຂະບວນການທີ່ເຂົ້າໃຈພາສາຂຽນ

- ການອ່ານ ແມ່ນຂະບວນການຖອດຄວາມໝາຍຈາກພາສາຂຽນມາເປັນພາສາໃນການຄົ້ນຄິດ.

- ການອ່ານ ແມ່ນການຮ່ວມທັກສະຕ່າງໆເຂົ້າກັນ ເຊັ່ນ: ທັກສະໃນການຄົ້ນຄິດ ແລະ ທັກສະທາງໄວຍາກອນ ມີ ສຽງ, ສັບ, ໂຄງສ້າງ ແລະ ຄວາມໝາຍ.

- ການອ່ານ ເປັນຂະບວນການຄົ້ນຫາຄວາມໝາຍໃນສິ່ງພິມ ຫຼື ຂໍ້ຂຽນ, ຈັບໃຈຄວາມ, ຕີຄວາມເພື່ອພັດທະນາຕົນເອງດ້ານສະຕິປັນຍາ, ອາລົມ ແລະ ສັງຄົມ.

ສະຫຼຸບແລ້ວການອ່ານໝາຍເຖິງ ການຕີຄວາມໝາຍຈາກຄຳສັບ ຫຼື ຈາກຕົວອັກສອນທີ່ການເປັນຂະບວນການຄົ້ນຄິດຄົ້ນຄວ້າ ຫາ ຄວາມໝາຍຈາກສິ່ງທີ່ຜູ້ຂຽນຕ້ອງການຖ່າຍທອດ,ພ້ອມທັງເປັນການຮອບຮອມແນວຄິດຄວາມຮູ້ສຶກຂອງຜູ້ຂຽນ ແຕ່ອະດີດ ຈົນຮອດປັດຈຸບັນ, ພ້ອມນັ້ນການອ່ານຍັງເປັນການຖ່ານທອດຄວາມໝາຍຈາກພາສາຂຽນມເປັນພາສາໃນການຄົ້ນຄິດພິຈາລະນາຫາເນື້ອໃນໃຈຄວາມເພື່ອຈະໄດ້ນຳເຂົ້າມາພັດທະນາຕົນເອງທາງດ້ານສະຕິປັນຍາ, ອາລົມ ແລະ ສາມາດນຳໄປໃຊ້ໄດ້ໃນທາງສັງຄົມ.

### 1.2 ຄວາມສຳຄັນຂອງການອ່ານ

- ການອ່ານ ເປັນພື້ນຖານຂອງການຮຽນວິຊາຕ່າງໆ ເພາະການສຶກສາຄວາມຮູ້ ຕ້ອງອາໄສທັກສະການອ່ານເປັນເຄື່ອງຊ່ວຍ.

- ການອ່ານ ຊ່ວຍໃຫ້ຖ່າຍທອດຄວາມຮູ້ສຶກ ແລະ ຄວາມຕ້ອງການລະຫວ່າງຄົນກັບຄົນ.

- ການອ່ານ ຊ່ວຍໃຫ້ປະສົບຄວາມສຳເລັດໃນການປະກອບອາຊີບ.

- ການອ່ານ ຊ່ວຍໃຫ້ດຳລົງຊີວິດຢູ່ຮ່ວມກັນໃນສັງຄົມຢ່າງມີຄວາມສຸກ.

- ການອ່ານ ເປັນການສືບທອດມໍລະດົກທາງດ້ານວັດທະນະທຳຂອງຄົນລາວສູ່ຄົນຮຸ່ນໃໝ່ຕໍ່ໆໄປ.

- ການອ່ານ ພາໃຫ້ເກີດຄວາມມ່ວນຊື່ນ, ໃຫ້ຄວາມຮູ້ ແລະ ມີປະສົບການຢ່າງກວ້າງຂວາງ.

- ການອ່ານເປັນວິທີການໜຶ່ງໃນການພັດທະນາລະບົບການສື່ສານ ແລະ ການໃຊ້ເຄື່ອງມືທາງເອເລັກໂທນິກ

- ການອ່ານຊ່ວຍໃຫ້ຄົນເຮົາສາມາດປັບຕົວໄດ້ທັນກັບເຫດການ, ນຳເອົາຄວາມຮູ້ໄປພັດທະນາຕົນເອງ ແລະ ສັງຄົມ, ຊ່ວຍໃຫ້ຊີວິດມີຄວາມສຸກ ແລະ ປະສົບຜົນສຳເລັດ. ທັງຮັກສາຄຸນຄ່າດ້ານປະເພນີ, ວັດທະນະທຳ, ພາສາ ແລະ ອັກສອນລາວໄວ້ອີກດ້ວຍ.

## 1.3. ຈຸດປະສົງຂອງການອ່ານ

ການອ່ານຂອງແຕ່ລະຄົນ ຕ້ອງມີຈຸດປະສົງຂອງຕົນເອງ, ຄົນທີ່ອ່ານຂໍ້ຄວາມດຽວກັນອາດມີຈຸດປະສົງ ແລະ ຄວາມຄິດຕ່າງກັນ. ໂດຍທົ່ວໄປຈຸດປະສົງຂອງການອ່ານມີ 3 ຢ່າງຄື:

**ກ. ການອ່ານເພື່ອຄວາມຮູ້**

ເປັນການອ່ານໜັງສືປະເພດຕຳລາ, ສາລະຄະດີ, ວາລະສານ, ໜັງສືພິມ ແລະ ຂໍ້ຄວາມຕ່າງໆເພື່ອໃຫ້ເນື້ອເລື່ອງທີ່ໃຫ້ຄວາມຮູ້ ຫຼື ເຫດການບ້ານເມືອງ. ການອ່ານເພື່ອຄວາມຮອບຮູ້ ເປັນການອ່ານທີ່ຈຳເປັນທີ່ສຸດສຳລັບນັກຮຽນເພາະຄວາມຮູ້ຕ່າງໆມີການປ່ຽນແປງທຸກເວລາ.

**ຂ. ການອ່ານເພື່ອຄວາມຄິດ**

ແນວຄິດທາງປັດຊະຍາ, ວັດທະນະທຳ, ຈະລິຍະທຳ ແລະ ຄວາມຄິດເຫັນທົ່ວໄປ ມັກແຊກຢູ່ໃນໜັງສືເກືອບທຸກເລື່ອງ, ບໍ່ສະເພາະໜັງສືປະເພດປັດຊະຍາ ຫຼື ຈະລິຍະທຳໂດຍກົງເທົ່ານັ້ນການສຶກສາແນວຄິດຂອງຜູ້ອື່ນເປັນແນວທາງຄວາມຄິດຂອງຕົນເອງ ແລະ ອາດນຳມາປະຕິບັດໃນການດຳລົງຊີວິດ ຫຼື ແກ້ບັນຫາຕ່າງໆ. ຜູ້ອ່ານຕ້ອງພິຈາລະນາຄັດເລືອກເອົາຄວາມຄິດທີ່ນຳມາໃຊ້ໃຫ້ເປັນປະໂຫຍດ.

**ຄ. ການອ່ານເພື່ອຄວາມບັນເທີງ**

ເປັນການອ່ານເພື່ອຂ້າເວລາ, ລະຫວ່າງລໍຖ້າໝູ່, ເພື່ອນ, ຄອຍເວລາທີ່ລົດຈະອອກເປັນຕົ້ນ. ອ່ານໜັງສືປະເພດ ບັນເທີງໃນເວລາຫວ່າງ, ບາງຄົນທີ່ມີນິດໄສມັກອ່ານຫາກຮູ້ສຶກເບື່ອໜ່າຍຕໍ່ການອ່ານໜັງສືເພື່ອຄວາມຮູ້, ອາດອ່ານໜັງສືປະເພດເບົາສະໝອງ ເພື່ອຜ່ອນຄາຍຄວາມເຄັ່ງຕຶງ. ໜັງສືປະເພດເບົາສະໝອງດັ່ງກ່າວມີຈຳນວນຫຼາຍເຊັ່ນ: ເລື່ອງສັ້ນ, ນະວະນິຍາຍ, ກາຕູນ ແລະ ວັນນະຄະດີທີ່ຜ່ອນຄາຍອາລົມ. ໜັງສືໃນປັດຈຸບັນມີຫຼາຍປະເພດຕ່າງກັນ. ເພື່ອຕອບສະໜອງຈຸດປະສົງຂອງຜູ້ອ່ານ, ປະເພດໜັງສືກໍມີການຈຳແນກຫຼາຍວິທີຄື:

- ຈຳແນກຕາມລັກສະນະຄຳປະພັນແບບຄຳຮ້ອຍແກ້ວ ແລະ ຮ້ອຍກອງ.

- ຈຳແນກຕາມຮູບແບບການປະພັນມີບົດລະຄອນ, ເລື່ອງສັ້ນ, ນະວະນິຍາຍ, ຈົດໝາຍ, ບົດລາຍງານ, ສາລະຄະດີ, ຕຳລາ...

- ຈຳແນກຕາມເນື້ອຫາມີເລື່ອງສົມມຸດ ແລະ ເລື່ອງຈິງເລື່ອງສົມມຸດມີຄືນິຍາຍ, ນິທານ. ເລື່ອງຈິງມີສາລະຄະດີ, ຕຳລາ, ເລື່ອງຊີວິດຈິງ...

- ຈຳແນກຕາມເນື້ອຫາວິຊາເຊັ່ນ: ເລື່ອງເສດຖະກິດ, ວັດທະນະທຳ, ການເມືອງສັງຄົມ...

- ຈຳແນກຕາມກຳນົດເວລາທີ່ພິມເຊັ່ນ: ໜັງສືພິມລາຍວັນ, ວາລະສານ, ນິຕະຍະສານ...

- ຈຳແນກຕາມລັກສະນະໜັງສືທີ່ເປັນເຫຼັ້ມ, ໜັງສືຮ່ວມງານຂອງນັກຂຽນຫຼາຍຄົນ.

- ຈຳແນກຕາມລັກສະນະຂອງໜັງສືທີ່ເຮົາພົບເຫັນໃນປັດຈຸບັນຄືເລື່ອງສັ້ນ, ນະວະນິຍາຍນິທານ, ນິຍາຍ ແລະ ເລື່ອງອ່ານຫຼິ້ນທົ່ວໄປອ່ານເພື່ອຄວາມຮູ້ ແລະ ຄວາມຄິດຕ່າງໆ ໜັງສືພິມໝາຍເຖິງໜັງສືພິມລາຍວັນທີ່ເຮົາອ່ານຫຼາຍທີ່ສຸດໃນປັດຈຸບັນ.

- ໜັງສືລາຍສັບປະດາ, ລາຍເດືອນ, ເປັນວາລະສານ, ນິຕະຍະສານຕ່າງໆ.

- ກາຕູນເປັນໜັງສືປະເພດໜຶ່ງທີ່ແຜ່ຫຼາຍ, ມີທັງກາຕູນເລື່ອງຊີວິດຄົນ, ສັດ, ວິທະຍາສາດ, ການເມືອງ ແລະ ປະກອບຢູ່ໃນໜັງສືປະເພດຕ່າງໆ.

- ຕຳລາເປັນເລື່ອງວິຊາການໂດຍກົງເຊັ່ນ: ວິຊາຂຽນປື້ມວິຊາການຕ່າງໆ.

- ສາລະຄະດີເປັນເລື່ອງຄວາມຮູ້ຕ່າງໆດ້ານວິຊາການຄ້າຍຄືຕຳລາແຕ່ວ່າຂຽນໃຫ້ມີຄວາມມ່ວນຊື່ນສາລະຄະດີ ວິຊາການລ້ວນໆ.

- ໜັງສືອະນຸສອນເປັນໜັງສືພິມແຈກຢາຍເນື່ອງໃນໂອກາດຕ່າງໆ.

- ໜັງສືພາບເປັນໜັງສືລວບລວມພາບ ມີຄຳບັນລະຍາຍປະກອບເຊັ່ນ: ໜັງສືຮູບພາບວາງສະແດງ, ໜັງສືປະມວນພາບງານສະຫຼອງ...

- ໜັງສືອ້າງອີງເປັນໜັງສືທີ່ໃຊ້ຄົ້ນຫາຄວາມຮູ້, ມີຫຼັກຖານອ້າງອີງຄືວັດຈະນານຸກົມເປັນຕົ້ນສື່ອີເລັກໂທຣນິກຄື ໄມໂຄຣຟີມຟີມສະຕຣີບ ຊຶ່ງໃຊ້ເນື້ອທີ່ນ້ອຍ ແລະ ເກັບຮັກສາໄວ້ດົນໂດຍສະເພາະໜັງສືເກົ່າໃນຫ້ອງສະໝຸດ, ມັກເກັບຖ່າຍໄວ້ໃນຟີມເພື່ອບໍ່ໃຫ້ຕົ້ນສະບັບຊຸດໂຊມເປັນສື່ທີ່ຈະໃຊ້ຫາຫຼາຍໃນອະນາຄົດ.

**1.4 ຄຸນຄ່າຂອງການອ່ານ.**

ໃນການສົ່ງເສີມການອ່ານ, ຄູຄວນຊີ້ໃຫ້ນັກຮຽນເຫັນຄຸນຄ່າຂອງການອ່ານເພື່ອຈະໃຫ້ແນວທາງໃນການເລືອກໜັງສືທີ່ມີຄຸນຄ່າມີດັ່ງນີ້:

**ກ. ຄຸນຄ່າທາງອາລົມ**

ໜັງສືທີ່ໃຫ້ຄຸນຄ່າທາງອາລົມເປັນວັນນະຄະດີທີ່ມີ ຄວາມງາມທາງຖ້ອຍຄຳ, ນ້ຳສຽງ, ເນື້ອໃນ, ອາດຮຽກວ່າມີລົດວັນນະຄະດີຊຶ່ງຕຳລາສັນສະກິດກ່າວວ່າມີ ๙ ລົດຄື:

- ລົດແຫ່ງຄວາມຮັກຫຼືຄວາມຍິນດີ.
- ລົດແຫ່ງຄວາມລື່ນເລີງ.
- ລົດແຫ່ງຄວາມສົງສານ.
- ລົດແຫ່ງຄວາມຮ້າຍກາດ.
- ລົດແຫ່ງຄວາມກ້າຫານ.
- ລົດແຫ່ງຄວາມຢ້ານ.
- ລົດແຫ່ງຄວາມຄຽດຊັງ.
- ລົດແຫ່ງຄວາມປະຫຼາດໃຈ
- ລົດແຫ່ງຄວາມສະຫງົບ.

ລົດຊາດດັ່ງກ່າວຈະສະແດງອອກທາງດ້ານການຊົມຄວາມງາມ, ການສະແດງຄວາມຮັກ, ຄວາມຮ້າຍກາດ ແລະ ການຄ່ຳຄວນຕາມລຳດັບ, ຊຶ່ງນັກຮຽນເຄີຍອ່ານ ແລະ ສຶກສາມາແລ້ວ.

**ຂ. ຄຸນຄ່າທາງສະຕິປັນຍາ**

ໜັງສືດີຍ່ອມໃຫ້ຄຸນຄ່າທາງສະຕິປັນຍາເຊັ່ນ: ຄວາມຮູ້ຄວາມຄິດສ້າງສັນ, ບໍ່ເປັນແນວຄິດແບບທຳລາຍ. ນອກຈາກຄວາມຮູ້ທາງວິຊາການແລ້ວ, ຍັງມີຄວາມຮູ້ທາງການເມືອງ, ສັງຄົມ, ພາສາ ແລະ ອື່ນໆທີ່ເປັນປະໂຫຍດແກ່ຜູ້ອ່ານສະເໝີ, ການທີ່ຈັບໜັງສືມາອ່ານພຽງສອງສາມນາທີ, ຜູ້ອ່ານກໍ່ຈະໃຫ້ຮັບຄຸນຄ່າທາງສະຕິປັນຍາດ້ານໃດດ້ານໜຶ່ງ, ໜັງສືອາດຈະປາກົດໃນຮູບເສດເຈ້ຍ ຫຼື ຖົງເຈ້ຍແຕ່ວ່າຈະໃຫ້ບາງສິ່ງບາງຢ່າງແກ່ຜູ້ອ່ານ, ບາງຄັ້ງອາດຈະຊ່ວຍແກ້ບັນຫາທີ່ແກ້ບໍ່ຕົກເປັນເວລານານ, ທັງນີ້ສຸດແຕ່ຈະພິຈາລະນາພື້ນຖານຂອງຜູ້ອ່ານ. ບາງຄົນອາດເບິ່ງຜ່ານໄປໂດຍບໍ່ສົນໃຈ, ແຕ່ວ່າບາງຄົນອາດເບິ່ງເລິກລົງໄປຈະເຫັນຄຸນຄ່າຂອງໜັງສືນັ້ນເປັນຢ່າງດີ, ຄຸນຄ່າທາງສະຕິປັນຍາຈຶ່ງບໍ່ຂຶ້ນຢູ່ກັບໜັງສື ແຕ່ວ່າຂຶ້ນຢູ່ກັບຜູ້ອ່ານເອງ.

**ຄ. ຄຸນຄ່າທາງສັງຄົມ**

ການອ່ານເປັນມໍລະດົກທາງວັດທະນະທຳທີ່ສືບຕໍ່ກັນມາແຕ່ບູຮານນະການ, ຫາກມະນຸດບໍ່ມີນິດໄສໃນການອ່ານ. ວັດທະນະທຳຄົງສູນສິ້ນໄປ, ຈະບໍ່ສືບທອດຈົນຮອດທຸກວັນນີ້. ວັດທະນະທຳທາງພາສາ, ການເມືອງ, ການປະກອບອາຊີບ, ການສຶກສາ, ກົດໝາຍ ໆລໆ ເຫຼົ່ານີ້ອາໄສໜັງສື ແລະ ການອ່ານເປັນເຄື່ອງມືໃນການເຜີຍແຜ່ ແລະ ພັດທະນາໃຫ້ຄຸນຄ່າແກ່ສັງຄົມ. ໜັງສື ແລະ ຜູ້ອ່ານຈຶ່ງອາໄສຊຶ່ງກັນ ແລະ ກັນເປັນເລື່ອງສືບທອດວັດທະນະທຳຂອງມະນຸດ, ໃນສັງຄົມທີ່ຈະເລີນແລ້ວຈະເຫັນໄດ້ວ່າໃນກຸ່ມຄົນທີ່ບໍ່ມີພາສາຂຽນ, ບໍ່ມີໜັງສື, ບໍ່ມີການອ່ານ, ວັດທະນະທຳຂອງສັງຄົມນັ້ນຈະຫຼ້າຫຼັງປາສະຈາກການພັດທະນາ.

**ຄຸນລັກສະນະຂອງນັກອ່ານທີ່ດີ**

ການເຝິກຕົນເອງໃຫ້ເປັນນັກອ່ານທີ່ດີມີຂໍ້ປະຕິບັດດັ່ງນີ້:

- ສ້າງນິດໄສຮັກການອ່ານ, ອ່ານປຶ້ມທຸກໆຊະນິດເທົ່າທີ່ມີເວລາ ແລະ ໂອກາດຈົນເກີດເປັນກິດຈະວັດ.
- ຮູ້ຈັກປະເພດປຶ້ມເຊັ່ນ: ປຶ້ມວັນນະຄະດີ, ສາລະຄະດີ, ວາລະສານ, ໜັງສືພິມ, ບົດຄວາມ, ບົດຮ້ອຍກອງ... ແລະ ຮູ້ຈັກສ່ວນປະກອບຂອງປຶ້ມເຊັ່ນ ຄຳນຳ, ສາລະບານ...
- ມີສະມາທິໃນການອ່ານ, ພະຍາຍາມຈັບໃຈຄວາມສຳຄັນຂອງເລື່ອງໃຫ້ໄດ້.
- ເຝິກອ່ານໄວ ເພື່ອກຳໃຈຄວາມສຳຄັນ ແລະ ອ່ານຊ້າເພື່ອຄວາມລະອຽດຕາມຄວາມຕ້ອງການ ຫຼື ຈຸດມຸ້ງໝາຍຂອງການອ່ານ.
- ຫຼັງຈາກການອ່ານເລື່ອງຍາວໆ, ຄວນຈົດສະຫຼຸບເນື້ອເລື່ອງນັ້ນເປັນບົດ ຫຼື ຖ້ອຍຄຳສຳນວນຂອງຕົນເອງ.
- ເຝິກນັ່ງໃຫ້ຖືກວິທີເຊັ່ນ: ນັ່ງຕັ້ງໂຕໃຫ້ທ່ຽງ, ບໍ່ນັ່ງຫຼັງກົ່ງ.
- ມີມາລະຍາດໃນການອ່ານໂດຍສະເພາະແມ່ນການອ່ານໃນໃຈບໍ່ຄວນອ່ານໃຫ້ມີສຽງດັ່ງລົບກວນສະມາທິຂອງຄົນອື່ນ.
- ຄວນມີວັດຈະນານຸກົມຢູ່ໃກ້ຕົວສະເໝີເພື່ອເປີດເບິ່ງຄຳສັບທີ່ບໍ່ເຂົ້າໃຈຄວາມໝາຍ.
- ຮັກສາສຸຂະພາບຂອງຕາເຊັ່ນອ່ານຢູ່ໃນບ່ອນມີແສງສະຫວ່າງພໍດີເໝາະ,ໃຫ້ໜັງສືຫ່າງຈາກສາຍຕາພໍປະມານ.
- ການອ່ານປຶ້ມທຸກປະເພດຄວນແຍກໃຫ້ອອກວ່າເຫຼັ້ມໃດຢູ່ໃນປະເພດໃດດີ ຫຼື ບໍ່ດີ.
- ສ້າງລົດນິຍົມໃນການເລືອກອ່ານໜັງສືທີ່ເຫັນວ່າໄດ້ຮັບການຍົກຍ້ອງວ່າດີມີຄຸນຄ່າ,ບໍ່ເລືອກອ່ານປຶ້ມທີ່ຕົນເອງມັກຢ່າງດຽວ.

## 1.5 ປະເພດຂອງການອ່ານ

ການອ່ານແມ່ນການສື່ສານປະເພດໜຶ່ງທີ່ໃຊ້ຕົວອັກສອນເຂົ້າໃນການສື່ສານເຊິ່ງໃນນັ້ນ ເພິ່ນໄດ້ຈັດແບ່ງປະເພດຂອງການອ່ານ ອອກເປັນ 2 ປະເພດຄື: ການອ່ານໃນໃຈ ແລະ ການອ່ານອອກສຽງ

**ກ. ການອ່ານໃນໃຈ**

( ອະນຸສານ 1993) ການອ່ານໃນຈຄືການແປຄວາມໝາຍຂອງຕົວອັກສອນອອກມາເປັນຄວາມຄິດ, ຄວາມເຂົ້າໃຈເພິ່ນໄດ້ຈັດແບ່ງປະເພດຂອງການອ່ານໄວ້ດັ່ງນີ້:

❖ **ການອ່ານຈັບໃຈຄວາມ**

ການອ່ານຈັບໃຈຄວາມເປັນພື້ນຖານຂອງການອ່ານໃນໃຈທີ່ມີຄຸນຄ່າທາງສະຕິປັນຍາເຊິ່ງການອ່ານປະເພດນີ້ແບ່ງອອກເປັນ 2 ຊະນິດຄື:

**🌢 ການອ່ານຈັບໃຈຄວາມສ່ວນລວມ**

ການອ່ານຈັບໃຈຄວາມສ່ວນລວມເປັນກາອ່ານເພື່ອເຂົ້າໃຈເນື້ອຫາສ່ວນລວມເປັນປະໂຫຍດຕໍ່ຜູ້ທີ່ມັກອ່ານໄວ້.

**ວິທີການອ່ານຈັບໃຈຄວາມແບບສ່ວນລວມ**

ສັງເກດສ່ວນປະກອບຂອງບົດເລື່ອງເຊັ່ນ: ຊື່ເລື່ອງ, ຄຳນຳ, ຈຸດປະສົງ, ວິເຄາະຈຸດປະສົງ, ຈັດລຽງລຳດັບ

ເນື້ອໃນຕາມຄວາມສຳຄັນ, ໃຊ້ການຕັ້ງຄຳຖາມກວ່າງໆວ່າມີໃຜ, ເຮັດຫຍັງ, ຢູ່ໃສ ເພື່ອຫາຄວາມສຳພັນຂອງເນື້ອເລື່ອງ.

**ການອ່ານຈັບໃຈຄວາມສຳຄັນ**

ການອ່ານຈັບໃຈຄວາມສຳຄັນຄືໃຈຄວາມລັກຂອງເລື່ອງເປັນການອ່ານທີ່ລະອຽດຫຼາຍຂຶ້ນເພື່ອຈັບໃຈຄວາມສຳຄັນຂອງການຂຽນແຕ່ລະຫຍໍ້ໜ້າ.

**ວິທີການອ່ານຈັບໃຈຄວາມສຳຄັນ**

ວິທີການອ່ານຈັບໃຈຄວາມທີ່ສຳຄັນຄືຕ້ອງອ່ານວິເຄາະປະໂຫຍກ ຫຼື ຂໍ້ຄວາມດ້ວຍການຕີຄວາມໝາຍຂອງຄຳສັບທີ່ຍາກໃນການຂຽນ, ວິເຄາະຫາຈຸດປະສົງຂອງການຂຽນວ່າຂຽນດ້ວຍຈຸດປະສົງໃດ

❖ **ການອ່ານຕີຄວາມໝາຍ**

ການອ່ານຕີຄວາມໝາຍຄືການອ່ານທີ່ຜູ້ອ່ານຕ້ອງໃຊ້ສະຕິປັນຍາຕີຄວາມໝາຍຂອງຄຳ ແລະ ຂໍ້ຄວາມທັງໝົດໂດຍພິຈາລະນາເຖິງຄວາມໝາຍທີ່ແທ້ຈິງ ຫຼື ຄວາມໝາຍແຝງທີ່ຜູ້ຂຽນຕ້ອງການຂຽນຄວາມໝາຍເຊິ່ງໃນນັ້ນຜູ້ອ່ານຈະຕີຄວາມໝາຍຂອງຄຳສັບສຳນວນໄດ້ຢ່າງຖືກຕ້ອງ ຫຼື ບໍ່ນັ້ນຕ້ອງໄດ້ອາໃສຄວາມຮູ້ ຫຼື ປະສົບການເປັນເຄື່ອງມືຕັດສິນ.

**ຂໍ້ຄວນປະຕິບັດໃນການອ່ານຕີຄວາມໝາຍ.**

ອ່ານເລື່ອງໃຫ້ລະອຽດໂດຍພະຍາຍາມຈັບປະເດັນທີ່ສຳຄັນຂອງເລື່ອງໃຫ້ໄດ້, ຫາເຫດຜົນໃຫ້ຮອບຄອບເພື່ອພິຈາລະນາວ່າມີຄວາມໝາຍເຖິງສິ່ງໃດແນ່ນອນ, ທຳຄວາມເຂົ້າໃຈກັບຖ້ອຍຄຳທີ່ໄດ້ຈາກການຕີຄວາມໝາຍ, ຮຽບຮຽງຖ້ອຍຄຳໃຫ້ມີຄວາມໝາຍຊັດເຈນ ແລະ ມີເຫດຜົນເປັນຫຼັກສຳຄັນ.

❖ **ການອ່ານຢ່າງມີວິຈາລະຍານ**

ການອ່ານຢ່າງມີວິຈາລະຍານການອ່ານຊະນິດນີ້ເປັນການອ່ານທີ່ຂ້ອນຂ້າງຍາກເພາະຕ້ອງໃຊ້ເຫດຜົນເຂົ້າມາໃນການອ່ານຫຼາຍທີ່ສຸດ.

**ຂໍ້ຄວນປະຕິບັດໃນການອ່ານຢ່າງມີວິຈາລະຍານຄື:**

- ພິຈາລະນາຄວາມໝາຍຂອງຂໍ້ຄວາມທີ່ໄດ້ອ່ານ
- ພິຈາລະນາຄວາມຕໍ່ເນື່ອງຂອງປະໂຫຍກວ່າມີເຫດຜົນສອດຄ່ອງກັນຫຼືບໍ່
- ພິຈາລະນາຄວາມຕໍ່ເນື່ອງຂອງໃຈຄວາມຫຼັກ ແລະ ໃຈຄວາມສຳຮອງ
- ໄຈ້ແຍກຄວາມຈິງອອກຈາກຄວາມຄິດເຫັນ ແລະ ຄວາມຮູ້ສຶກ
- ພິຈາລະນາວ່າມີຄວາມຮູ້ເນື້ອຫາ ຫຼື ມີຄວາມຄິດແປກໃໝ່ໜ້າສົນໃ ຈຫຼື ບໍ່

❖ **ການອ່ານວິເຄາະ**

ການອ່ານວິເຄາະເປັນການອ່ານທີ່ມີການພິຈາລະນາຢ່າງຖີ່ຖ້ວນເປັນການໄຈແຍກ ແລະ ທຳຄວາມເຂົ້າໃຈອົງປະກອບ ຫຼື ໂຄງສ້າງຂອງໜັງສືແຕ່ລະປະເພດ.

ຂໍ້ຄວນປະຕິບັດໃນການອ່ານວິເຄາະຄື:

- ສຶກສາຮູບແບບຂອງງານປະພັນວ່າມີຮູບແບບໃດ
- ແຍກເນື້ອເລື່ອງອອກເປັນສ່ວນໆໃຫ້ເຫັນວ່າໃຜເຮັດຫຍັງ, ຢູ່ໃສ, ເວລາໃດ
- ພິຈາລະນາວິທີໃນການນຳສະເໜີ

❖ **ການອ່ານເພື່ອປະເມີນຄ່າ**

ການອ່ານເພື່ອປະເມີນຄ່າແມ່ນການອ່ານທີ່ຜູ້ອ່ານ ໃຊ້ອາລົມຄວາມຮູ້ສຶກສ່ວນຕົວໃນການປະເມີນຄ່າຂອງການຂຽນເຊິ່ງອາດມີເລື່ອງຂອງອາລົມ ແລະ ຄວາມຮູ້ສຶກສ່ວນຕົວເຂົ້າປະກອບນຳແຕ່ການອ່ານປະເມີນຄ່າທີ່ດີຕ້ອງປາສະຈາກອາລົມ ແລະ ຄວາມຮູ້ສຶກສ່ວນຕົວ ແລະ ປະເມີນຄ່ານັ້ນຕ້ອງປະເມີນໄປຕາມຄຸນຄ່າຂອງເລື່ອງຈຶ່ງຈະເປັນການອ່ານປະເມີນຄ່າທີ່ດີ.

ການອ່ານທັງ 5 ປະເພດທີ່ກ່າວມາເປັນການອ່ານໃນໃຈເຊິ່ງມີຫຼັກການເຝິກຝົນການອ່ານໃນໃຈດັ່ງຕໍ່ໄປນີ້:

-ການກໍານົດເວລາໃນການອ່ານໜັງສືໄວ້ແນ່ນອນເຊັ່ນວ່າຈະອ່ານ 5 ນາທີເມື່ອຄົບກໍານົດເວລາຈຶ່ງກວດຄືນເບິ່ງວ່າອ່ານໄດ້ຈັກໜ້າ ແລ້ວຈຶ່ງທົດລອງຈັບເວລາໃນການອ່ານຄັ້ງຕໍ່ໄປວ່າຈໍານວນໜ້າທີ່ອ່ານໄດ້ເພີ່ມຂຶ້ນຫຼືບໍ່

- ເຝິກການເຄື່ອນໄຫວຂອງສາຍຕາ ແລະ ເຝິກສາຍຕາໃຫ້ອ່ານໄດ້ວ່ອງໄວ້.

- ການວາງສາຍຕາຈາກຈຸດໜຶ່ງໄປອີກຈຸດໜຶ່ງທີ່ຜູ້ອ່ານຊໍານານໃນ 1 ແຖວຈະລວດສາຍຕາໃຫ້ລະອຽດ ແລະ ອ່ານເນື້ອເລື່ອງຢ່າງຄົບຖ້ວນດ້ວຍເວລາທີ່ວ່ອງໄວ້.

- ການປ່ຽນແຖວຖ້າຫາກຜູ້ອ່ານຊໍານານເມື່ອປ່ຽນແຖວຍ່ອມເປັນໄປຢ່າງໄວວາໂດຍບໍ່ຈໍາເປັນຕ້ອງອາໃສນິ້ວມືຊີ້ ຫຼື ໃຊ້ບັນທັດວາງໄວ້ເມື່ອຈະປ່ຽນແຖວ.

- ທົດສອບຄວາມເຂົ້າໃຈເມື່ອອ່ານຈົບໂດຍອາດທົດສອບເປັນໄລຍະ ຫຼື ອາດຈະທົດສອບເວລາອ່ານຈົດໝົດເລື່ອງກໍໄດ້.

- ສຶກສາເລື່ອງຂອງຄໍາສັບຢູ່ເລື້ອຍໆເພື່ອຄວາມເຂົ້າໃຈໃນເວລາອ່ານຈຶ່ງຈະຄ່ອງແຄ້ວ.

**ຂ. ການອ່ານອອກສຽງ**

ການອ່ານອອກສຽງແມ່ນການອ່ານຂໍ້ຄວາມທີ່ເປັງສຽງອອກມາເພື່ອໃຫ້ຜູ້ອ່ານໄດ້ຮັບຮູ້ຂໍ້ຄວາມນັ້ນດ້ວຍການອ່ານອອກສຽງ ເຊິ່ງໃນນີ້ການອ່ານອອກສຽງແມ່ນມີລັກສະນະຄື: ການອ່ານອອກສຽງປົກກະຕິ: ເປັນການອ່ານອອກສຽງປົກກະຕິທົ່ວໄປອ່ານໄດ້ທັງບົດຮ້ອຍແກ້ວ ແລະ ຮ້ອຍກອງເຊັ່ນ: ອ່ານຂ່າວ, ອ່ານປະກາດ: ອ່ານສາລະຄະດີ, ອ່ານຂໍ້ຄວາມປະກອບພາບ ແລະ ອື່ນໆ.

ຂໍ້ຄວນປະຕິບັດໃນການອ່ານປົກກະຕິ

- ທໍາຄວາມເຂົ້າໃຈກ່ຽວກັບເລື່ອງທີ່ຈະອ່ານກ່ອນການອ່າອອກສຽງດັ່ງ
- ອອກສຽງຊັດເຈນດັ່ງພໍປະມານມີລີລາຈັງຫວະໃນການອ່ານຢ່າງເໝາະສົມ
- ແບ່ງວັກຕອນໃຫ້ຖືກຕ້ອງ
- ອ່ານອອກສຽງຖືກຕາມອັກຂະຫຼະວິທີ ແລະ ຕາມວັກ, ຕາມຕອນ, ຕາມເຄື່ອງໝາຍວັກຕອນ

## 1.6 ວິທີອ່ານຕົວອັກສອນທໍາ

ອັກສອນທໍາ ແມ່ນອັກສອນລາວບູຮານຊະນິດໜຶ່ງ ເຊິ່ງຄົນລາວໄດ້ປະດິດສ້າງຂຶ້ນມາຫຼາຍຮ້ອຍປີຍ້ອນອັກສອນທໍາມີເຄົ້າມາຈາກພາສາອື່ນກໍຄື ອັກສອນພະຣາຫມີ ທີ່ຊາວອິນເດຍບູຮານໄດ້ປະດິດຂຶ້ນກ່ອນຄິດຕະສັງກະຫຼາດ, ຈາກນັ້ນຊົນຊາດມອນ - ພະມ້າໄດ້ດັດແປງມາເປັນອັກສອນຂອງເຂົາເຈົ້າ ແລະ ໃນທີ່ສຸດຕົວໜັງສືດັ່ງກ່າວກໍໄດ້ດັດແປງມາເປັນອັກສອນທໍາໃນປະຈຸບັນ.

ອັກສອນທໍາແມ່ນອັກສອນທີ່ໃຊ້ຈາລຶກພະທໍາຄໍາສອນຂອງພະພຸດທະສາສະໜາ ດັ່ງປະກົດໃນພະໄຕປິດົກ ແລະ ບົດສວດມົນຕ່າງໆ ລ້ວນແຕ່ເປັນອັກສອນທໍາທັງນັ້ນ, ເມື່ອກ່ອນຊາວລາວເຮົາແມ່ນໄດ້ຮັບອິດທິພົນພາສາບາລີ ຈາກພະພຸດທະສາສະໜາ ໄດ້ຈາລຶກພະທໍາຄໍາສອນຕ່າງໆໄວ້ໃນເອກະສານໃບລານ, ວັນນະກໍາເປັນຈໍານວນຫຼວງຫຼາຍທີ່ກ່ຽວຂ້ອງກັບພະພຸດທະສາສະໜາຈຶ່ງມີຄໍາສັບພາສາບາລີປະປົນກັບຄໍາສັບທ້ອງຖິ່ນ. ການຂີດຂຽນອັກສອນທໍານີສ່ວນຫຼາຍແມ່ນໄດ້ອີງໃສ່ການຂີດຂຽນຂອງເຂົາເຈົ້າຄື ຂຽນບໍ່ນໍາໃຊ້ວັນນະຍຸດ, ຂຽນຕາມຄວາມສະດວກ ແລະ ການຈັດວາງ ເຊັ່ນການໃຊ້ຕົວສະກົດ ແລະ ບໍ່ຂຽນໄປຕາມກົດເກນ, ອີກຢ່າງໜຶ່ງຜູ້ຂຽນ ( ຜູ້ຈານ ) ສ່ວນຫຼາຍແມ່ນໄດ້ຂຽນຕາມຮູບແບບສະບັບເດີມ ແລະ ມີການຕື່ມເຂົ້າ ແລະ ຕັດອອກຕາມໃຈມັກຂອງຕົນເອງ. ໂດຍສະເພາະແມ່ນທາງດ້ານອັກຂະຫຼະວິທີທີ່ພວກເຮົາເຫັນວ່າມີການປ່ຽນແປງຫຼາຍຄື ປ່ຽນຮູບສະຫຼະ, ການຂຽນຄໍາຫຍໍ້ ແລະ ການໃຊ້ອັກສອນຄູ່ເຫຼົ່ານີ້ເປັນຕົ້ນ. ທັງນີ້ກໍເນື່ອງມາຈາກຜູ້ຂຽນ ຫຼື ຜູ້ກ່າຍບໍ່ໄດ້ຄໍານຶ່ງເຖິງຫຼັກໄວຍາກອນ ຫຼື ອາດບໍ່ມີຄວາມຮູ້ທາງດ້ານການຂຽນຢ່າງເລິກເຊິ່ງ. ເຊິ່ງໜັງສືໃບລານບາງຜູກອາດແມ່ນນັກປາດອາຈານເປັນຜູ້ຂຽນ ຫຼື ຜູ້ກ່າຍ, ບາງຜູກອາດແມ່ນຄະລືທັດ ຫຼື ແມ່ນຈົວເຖນ, ເນນນ້ອຍ, ດັ່ງນັ້ນ ຈຶ່ງເປັນເຫດໃຫ້ຜູ້ຮຽນອ່ານໄດ້ຮັບຄວາມລໍາບາກ ແລະ

ຍາກທີ່ຈະອ່ານເຂົ້າໃຈເພາະການຂຽນມີລັກສະນະເຫຼືອບໍ່ພໍ ຂຽນປົນເປກັບຕົວໜັງສືອື່ນ. ດັ່ງນັ້ນຜູ້ອ່ານຈະຕ້ອງໄດ້ໃຊ້ຄວາມພະຍາຍາມ. ພິຈາລະນາ ແລະ ວິເຄາະຄຳສັບເຫຼົ່ານັ້ນໃຫ້ເຂົ້າໃຈກ່ອນຈຶ່ງຈະອ່າໃຫ້ຖືກຕ້ອງໄດ້.

ການປະກອບສ້າງຄຳສັບຂອງອັກສອນທຳກໍມີພະຍັນຊະນະ, ສະຫຼະ, ຕົວສະກົດລວມເຂົ້າກັນເປັນຄຳສັບ, ສຳນວນ ຫຼື ປະໂຫຍກຄືກັບກັບຄຳສັບຂອງອັກສອນລາວ, ໃນນີ້ອັກສອນທຳກໍມີວິທີປະສົມແບບດຽວກັບອັກສອນລາວ. ແຕ່ມັນກໍມີສິ່ງແຕກຕ່າງບາງເລັກນ້ອຍຄື: ວິທີການປະສົມອັກສອນທຳແບບບາລີສ່ວນຫຼາຍຈະມີການຊ້ອນຕົວປະສົມ ຫຼື ສັບທີ່ອ່ານສຳນຽງຄວບນັ້ນເພິ່ນມັກຈະປ່ຽນແປງຮູບ ແລະ ບ່ອນໄວ້ຕົວສະກົດໄປຕາມຕົວຈິງແລ້ວແຕ່ສະດວກ ແລະ ເໝາະສົມແກ່ການຊ້ອນຕົວໜັງສື.

ທອງຫຼໍ່ ດວງສະຫວັດ ( 2009 )ການອ່ານຄຳສັບອັກສອນທຳທີ່ປະກອບຄຳສັບຕາມພະຍັນຊະນະ, ສະຫຼະ ແລະ ຕົວສະກົດທີ່ປ່ຽນບ່ອນໄວ້ຕົວສະກົດຕາມຄວາມເໝາະສົມ.

ໃນອັກສອນທຳມີສະຫຼະໂຕໜຶ່ງເປັນສະຫຼະຈົມເພາະວ່າເມື່ອປະກອບກັບພະຍັນຊະນະແລ້ວບໍ່ເຫັນຮູບ,ສະຫຼະໂຕນັ້ນແມ່ນສະຫຼະ ᩋ ( Xະ )ຍ້ອນແນວນັ້ນຫາກວ່າພະຍັນຊະນະໂຕໃດບໍ່ມີສະຫຼະອື່ນ ຫຼື ເຄື່ອງໝາຍອື່ນຢູ່ນຳຕ້ອງໄດ້ອ່ານພະຍັນຊະນະໂຕນັ້ນປະກອບກັບສຽງ Xະ ເຊັ່ນວ່າ: ᨣᨶ(ຄະນະ),ᨾᩉ(ມະຫະ),ᩈᩃ(ສະລະ) ᨵᨲᨶ(ທະຕະນະ), ᩋᨧᨶ (ອະຈະນະ)ເປັນຕົ້ນ.

ຄຳສັບຄຳວ່າ ( ກັງ ) ໃນໜັງສືລາວເພິ່ນຂຽນຮຽງກັນໄປຕາມລຳດັບ ຄື ພະຍັນຊະນະ, ສະຫຼະ ແລະ ຕົວສະກົດແມ່ນຈະຢູ່ໃນແຖວດຽວກັນແຕ່ວ່າອັກສອນທຳແມ່ນຈະແຕ່ກຕ່າງຄື ຖ້າຄຳສັບທີ່ມີພະຍັນຊະນະເຄົ້າເປັນຕົວແກນຕົວສະກົດແມ່ນຈະຫອຍຢູ່ລຸ່ມພະຍັນຊະນະ ຄືຄຳວ່າ ᨶ᩠ᨦ (ນັ່ງ)ວິທີອ່ານແມ່ນເອົາຕົວ ນ ປະກອບກັບໄມ້ອັນ ແລະ ຕົວສະກົດ ງ ອ່ານ ວ່າ ນັ່ງເຊິ່ງໃນນັ້ນວັນນະຍຸດຈະບໍ່ປາກົດຮູບ , ຖ້າຄຳສັບທີ່ເປັນພະຍັນຊະນະປະສົມເປັນຕົວແກນຕົວສະກົດຈະປ່ຽນບ່ອນຢູ່ຕາມຄວາມເໝາະສົມ ເຊັ່ນຄຳວ່າ: ᩉ᩠ᨶᨦ ວິທີການອ່ານກໍແມ່ນອ່ານຄືກັບຄຳສັບພາສາລາວຄືເອົາພະຍັນຊະນະປະກອບກັບສະຫຼະຢູ່ເທິ່ງ ແລະຕົວສະກົດຢູ່ໃນແຖວອ່ານ ວ່າ ໜັງ.

ໃນອັກສອນທຳມີໂຕສະກົດໜຶ່ງຖືວ່າເປັນໂຕສະກົດພິເສດເພາະວ່າໂດຍຫຼັກການແລ້ວເມື່ອພະຍັນຊະນະໂຕໃດໂຕໜຶ່ງເປັນໂຕສະກົດຕ້ອງມີພະຍັນຊະນະໂຕໜຶ່ງຕ້ອງເປັນໂຕຊ້ອນແຕ່ພະຍັນຊະນະໂຕທີ່ເວົ້າເຖິງນີ້ເປັນໂຕສະກົດໄດ້ໂດຍບໍ່ຕ້ອງຊ້ອນພະຍັນຊະນະ, ພະຍັນຊະນະໂຕນີ້ມີຊື່ວ່າ: “ນິຄະຫິດ” ມີຮູບຄືສະຫຼະ ໍ ແຕ່ວ່າເວລາອ່ານເວລາອ່ານພັດອອກສຽງເປັນ ອັງ ອັນພິເສດໄປກວ່ານີ້ກໍ່ຄືວ່າມັນຈະສະກົດແຕ່ສະຫຼະສຽງສັ້ນເທົ່ານັ້ນ ແລະ ຖ້າຢູ່ກັບສະຫຼະອື່ນແມ່ນຈະເປັນຕົວສະກົດ ງ ( ᨦ ) ຕົວຢ່າງ: ᩋᩉᩘ(ອະຫັງ), ᩈᩮᨲᩘ ( ເສຕຸງ )

ໃນກໍລະນີມີໂຕຊ້ອນ, ຫາກມີສະຫຼະ ຫຼື ວ່າເຄື່ອງໝາຍໃດໜຶ່ງຢູ່ນຳໂຕສະກົດ(ເຊິ່ງຢູ່ເທິງໂຕຊ້ອນນັ້ນ)ຕ້ອງໄດ້ອ່ານສະຫຼະຫຼືເຄື່ອງໝາຍນັ້ນຮ່ວມເຂົ້າກັບໂຕຊ້ອນ ແລະ ໂດຍທົ່ວໄປແລ້ວໂຕຊ້ອນມັກຢູ່ກ້ອງໂຕສະກົດຢູ່ສະເໝີ

ສຳລັບຄຳສັບອັກສອນທຳທີ່ເພິ່ນມັກຂຽນຊ້ອນຕົວໜັງສືຄືຕົວໜຶ່ງໄວ້ຂ້າງເທິ່ງ ແລະ ຕົວໜຶ່ງໄວ້ຂ້າງລຸ່ມເຊັ່ນຄຳວ່າ: ᩈᩥ᩠ᨶ᩠ᨵᩥ (ສິນທິ) ການອ່ານແມ່ນຕ້ອງຟ້ອງ ສະຫຼະ ×ິ ທີ່ຢູ່ເທິ່ງຕົວ ᩈ(ສ) ກັບຕົວ ᨶ(ນ) ທີ່ຢູ່ຫຼັງຕົວ ᩈ(ສ ) ວ່າເປັນສະຫຼະ ×ິ᩠ᨶ (ສະຫຼະ ×ິນ) ແລ້ວມາປະກອບໃສ່ຕົວ ᩈ (ສ) ເປັນ ᩈᩥ᩠ᨶ ( ສິນ) , ສ່ວນສະຫຼະ

◌ᩥ ທີ່ຢູ່ເທິ່ງຕົວ ᨶ(ນ) ແມ່ນຟ້ອງໃສ່ກັບຕົວ ᩉ (ຫ) ທີ່ຊ້ອນຢູ່ລຸ່ມຕົວ ᨶ(ນ)ເປັນ ᩉᩥ ຈາກນັ້ນກໍຕໍ່ເຂົ້າກັນຈຶ່ງໄດ້ຄວາມໝາຍວ່າ ᩈᩥᨶ᩠ᩉᩥ (ສິນຫິ)

ການຊ້ອນຕົວໜັງສືນີ້ຄື ຕົວເທິງ( ຕົວທີ່ຢູ່ໃນແຖວ)ເປັນຕົວສະກົດຂອງຕົວໜັງສືທີ່ຢູ່ຂ້າງໜ້າ, ຕົວຢູ່ລຸ່ມ( ຕົວຊ້ອນ) ເປັນຕົວແກນຂອງສັບຫຼັງ. ການຊ້ອນຕົວໜັງສືແບບນີ້ແມ່ນຢູ່ໃນພາສາບາລີ.

ຕົວຢ່າງ

| | | |
|---|---|---|
| ᩅᩥᨬ᩠ᨬᩣ | ອ່ານວ່າ | ວິນຍາ |
| ᨣᨶ᩠ᨲᩩᨠ | ອ່ານວ່າ | ຄັນຕຸກະ |
| ᩏᩃ᩠ᩃᩮᩣᨧ | ອ່ານວ່າ | ອຸນໂລຈະ |
| ᩋᨽᩥᨬ᩠ᨬᩣ | ອ່ານວ່າ | ອະພິນຍາ |
| ᨷᩥᩃ᩠ᩃᨠ | ອ່ານວ່າ | ບິນລະກະ |
| ᩅᨱ᩠ᨱᩅᨶ᩠ᨲᩩ | ອ່ານວ່າ | ວັນນະວັນຕຸ |
| ᨠᩩᨾ᩠ᨾᩣᩁ | ອ່ານວ່າ | ກຸມມານ |
| ᩈᨧ᩠ᨧᩴ | ອ່ານວ່າ | ສັດຈະ |
| ᩋᩣᨴᩥᨧ᩠ᨧᩮᩣ | ອ່ານວ່າ | ອາທິດໂຈ |
| ᩈᩮᨭ᩠ᨮᩦ | ອ່ານວ່າ | ເສດຖີ |

ຈາກແນວຄິດທິດສະດີຂ້າງເທິ່ງສາມາດສະຫຼຸບໄດ້ວ່າ: ການອ່ານຄຳສັບອັກສອນທຳແມ່ນການອ່ານທີ່ຕ້ອງໄດ້ມີການຄົ້ນຄິດພິຈາລະນາ,ຕີຄວາມໝາຍໄປພ້ອມເພາະການຂີດຂຽນສ່ວນຫຼາຍແມ່ນບໍ່ຄ່ອຍສົນໃຈໃນດ້ານອັກຂະຫຼະວິທີໂດຍມີການປ່ຽນແປງສະຫຼະ, ພະຍັນຊະນະ, ມີການຂຽນຄຳຫຍໍ້ ແລະ ການຂຽນກໍມີລັກສະນະເຫຼືອບໍ່ພໍ , ລັກສະນະການຂຽນບໍ່ໃສ່ວັນນະຍຸດ.ດັ່ງນັ້ນການອ່ານຄຳສັບອັກສອນທຳຈຶ່ງມີຄວາມຫຍຸ້ງຍາກ ແລະ ຕ້ອງຟ້ອງສຽງວັນນະຍຸດໃສ່ເພື່ອໃຫ້ໄດ້ຄວາມໝາຍຂອງຄຳສັບ ແລະ ຂອງເນື້ອໃນເລື່ອງທີ່ຕົນໄດ້ອ່ານ.

## ຄວາມໝາຍຂອງອັກຂະຫຼະວິທີ

ອັກຂະຫຼະວິທີ ແມ່ນຫຼັກການວ່າດ້ວຍອັກສອນຄື ພະຍັນຊະນະ, ສະຫຼະ, ວັນນະຍຸດ, ແລະ ຕົວເລກເຊິ່ງປະກອບເຂົ້າກັນໃຫ້ກາຍເປັນຄຳ, ວະລີ ຫຼື ປະໂຫຍກ ເພື່ອບໍ່ໃຫ້ສັບສົນໃນແຕ່ລະພາກສ່ວນ.

ອັກຂະຫຼະວິທີ ແມ່ນວິທີປະກອບຕົວອັນສອນທຳເຂົ້າໃນການເວົ້າ ແລະ ການຂຽນ ຫຼື ເວົ້າງ່າຍໆວ່າແມ່ນວິທີການໃຊ້ອັກສອນທຳປະກອບເຂົ້າກັນ ເພື່ອຂຽນຄຳເວົ້າອັກສອນທຳເປັນໂຕໜັງສື

### 2.1 ຕົວອັກສອນ, ວັນນະຍຸດ

#### 2.1.1 ຕົວອັກສອນທຳ

ຕົວອັກສອນແມ່ນຕົວໜັງສືທີ່ໃຊ້ຂຽນແທນຄຳເວົ້າ. ຕົວອັກສອນທຳທັງໝົດມີ 67 ຕົວ, ແບ່ງເປັນພະຍັນຊະນະ 38 ຕົວ ແລະ ສະຫຼະ 29ຕົວ.

#### 2.1.1 ພະຍັນຊະນະ

ພະຍັນຊະນະ ແມ່ນອັກສອນໝວດໜຶ່ງທີ່ເອົາສຽງຂອງຕົນໄປເປັນພື້ນສຽງຂອງຄຳເວົ້າ. ພະຍັນຊະນະທັງໝົດມີ 38 ຕົວມີຄື: ᨠ ᨡ ᨣ ᨥ ᨦ ᨧ ᨨ ᨩ ᨫ ᨬ ᨭ ᨮ ᨯ ᨰ ᨱ ᨲ ᨳ ᨴ ᨵ ᨶ ᨷ ᨸ ᨹ ᨺ ᨻ ᨼ ᨽ ᨾ ᨿ ᩁ ᩃ ᩅ ᩈ ᩉ ᩊ ᩋ ᨢ ᨪ

ໃນນັ້ນໄດ້ແບ່ງອອກເປັນ 3 ໝູ່ຄື: ພະຍັນຊະນະເຄົ້າ, ພະຍັນຊະນະປະສົມ ແລະ ພະຍັນຊະນະເຟື້ອງ.

**ກ. ພະຍັນຊະນະເຄົ້າ:**

ພະຍັນຊະນະເຄົ້າແມ່ນພະຍັນຊະນະຕົວດຽວ ເຊິ່ງບໍ່ທັນປະສົມກັບຕົວອື່ນ, ພະຍັນຊະນະເຄົ້າມີທັງໝົດ 38 ຕົວ ຄື: ᨠ ᨡ ᨣ ᨥ ᨦ ᨧ ᨨ ᨩ ᨫ ᨬ ᨭ ᨮ ᨯ ᨰ ᨱ ᨲ ᨳ ᨴ ᨵ ᨶ ᨷ ᨸ ᨹ ᨺ ᨻ ᨼ ᨽ ᨾ ᨿ ᩁ ᩃ ᩅ ᩈ ᩉ ᩊ ᩋ ᨢ ᨪ

**ຂ. ພະຍັນຊະນະປະສົມ**

ພະຍັນຊະນະປະສົມ ແມ່ນພະຍັນຊະນະ 2 ຕົວຢູ່ນຳກັນໂດຍອ່ານອອກເປັນສຽງດຽວ. ພະຍັນຊະນະປະສົມທີ່ກ່າວມານີ້ແມ່ນຕັ້ງຕົ້ນດ້ວຍຕົວ ᩉ ທີ່ເປັນອັກສອນສູງ ແລ້ວເອົາອັກສອນຕ່ຳ 6 ຕົວມາປະສົມໃສ່ຄື: ᨦ (ງ) , ᨿ (ຍ), ᨶ (ນ), ᨾ(ມ), ᩃ (ລ), ᩅ (ວ) ເຮັດໃຫ້ຜົນສຽງເປັນອັກສອນສູງ. ດັ່ງນັ້ນພະຍັນຊະນະປະສົມຈຶ່ງມີຢູ່ 6 ຕົວຄື: ᩉ᩠ᨦ (ຫງ) , ᩉ᩠ᨿ (ຫຍ), ᩉ᩠ᨶ (ຫນ), ᩉ᩠ᨾ (ຫມ), ᩉ᩠ᩅ ຫວ ແລະ ᩉ᩠ᩃ ( ຫລ).

**ຄ. ຕົວເຟື້ອງ**

ຕົວເຟື້ອງທີ່ໃຊ້ໃນການອັກສອນທຳ, ຄຳບາລີ ແລະ ຄຳນິໄສ ( ຄຳລາວແທ້ )ເຊິ່ງມີທັງໝົດ 10 ຕົວຄື:

| ຕົວເດີມ | ຕົວເຟື້ອງ | ຄຳອະທິບາຍປະກອບ |
|---|---|---|
| ᨦ | xᩘ | xᩘ ເຟື້ອງໂຕນີ້ແມ່ນໃຊ້ສຳລັບຂຽນໄວ້ເທິງຕົວໜັງສືອື່ນ. ໃຊ້ເປັນຕົວສະກົດ ເຊັ່ນຄຳວ່າ: ᨷᩩᩘ᩵ᨹ᩶ᩣᩃᩣ᩠ᨿᩉ᩠ᨾᩣᩉᩮᩢ᩵ᩣ ( ບຸ່ງຜ້າລາຍໝາເຫົ່າ ) |
|  | x᩠ᨦ | x᩠ᨦ ເຟື້ອງໂຕນີ້ແມ່ນໃຊ້ສຳລັບຂຽນໄວ້ລຸ່ມຕົວໜັງສືອື່ນ. ໃຊ້ເປັນຕົວສະກົດ ເຊັ່ນຄຳວ່າ:ᩉᩥ᩠᩵ᨦᩉ᩠ᨿ (ຫິ່ງຫ້ອຍ ) |
| ᨶ | x᩠ᨶ | x᩠ᨶ ເຟື້ອງໂຕນີ້ແມ່ນໃຊ້ສຳລັບຂຽນໄວ້ລຸ່ມຕົວໜັງສືອື່ນ. ໃຊ້ເປັນຕົວສະກົດເຊັ່ນຄຳວ່າ: ᨠᩥ᩠ᨶᨡᩮᩢ᩶ᩣ ( ກິນເຂົ້າ ) |

| | | |
|---|---|---|
| ບ | xຽ | xຽ ເຟື້ອງໂຕນີ້ແມ່ນໃຊ້ສຳລັບຂຽນແຕ່ລຸ່ມຂຶ້ນໄປເທິ່ງແຖວໃຊ້ເປັນຕົວສະກົດເຊັ່ນຄຳວ່າ: ຫຼຽມີ ( ຕົບມື ) |
| ພ | x຺ | x຺ ເຟື້ອງໂຕນີ້ແມ່ນໃຊ້ສຳລັບຂຽນແຕ່ລຸ່ມຕົວໜັງສືໃຊ້ເປັນຕົວສະກົດເຊັ່ນຄຳວ່າ : ຊຶຕ໌ ( ດື່ມນ້ຳ ) |
| ຣ | ໄx | ໄx ເຟື້ອງໂຕນີ້ແມ່ນໃຊ້ສຳລັບຂຽນໄວ້ທາງໜ້າພະຍັນຊະນະຕົວໃດຕົວໜຶ່ງເຊັ່ນຄຳວ່າ: ໄຊ໌ວເວຸ ( ດູຣາທ່ານ )ພ້ອມນັ້ນຍັງເປັນພະຍັນຊະນະຄວບ ຕົວຢ່າງຄຳວ່າ: ໄດຸໝວວວ (ດູຣອາຈານ ) |
| ຍ | xຽ | xຽ ເຟື້ອງໂຕນີ້ແມ່ນໃຊ້ສຳລັບຂຽນແຕ່ລຸ່ມຂຶ້ນໄປເທິ່ງແຖວໃຊ້ເປັນຕົວສະກົດເຊັ່ນຄຳວ່າ: ດຽຂຽ ( ງ່າຍດາຍ ), ໃຊ້ເປັນສະຫຼະສັນຍາລັກເຊັ່ນຄຳວ່າ ລຽຕ໌ຫາຫຽ ( ລອຍນ້ຳຫາຫອຍ), ໃຊ້ເປັນຕົວຫອຍເຊັ່ນຄຳວ່າ: ຢຽຫ໌ດນີ (ຮຽນໜັງສື ) |
| ໝ | ຸx | ຸx ເຟື້ອງໂຕນີ້ແມ່ນໃຊ້ສຳລັບຂຽນຢູ່ ລຸ່ມແຖວສະເໝີ ໃຊ້ປະກອບກັບຕົວສະກົດ ເຊັ່ນຄຳວ່າ: ດູຣຓເຕ໊ ( ຄອນພະເພັງ ) |
| ມ | ×ມ | × ເຟື້ອງໂຕນີ້ແມ່ນໃຊ້ສຳລັບຂຽນສະກົດກາງຄຳ ແລະ ໃຊ້ຂຽນຄຳຫຍໍ້ |
| ລ | ×ຸ | ເຟື້ອງໂຕນີ້ແມ່ນໃຊ້ສຳລັບຂຽນສະກົດກາງຄຳ ແລະ ໃຊ້ຂຽນຄຳຫຍໍ້ ຫຼຊ (ສະຫຼາດ) |

ໄx ເຟື້ອງໂຕນີ້ຄົນບູຮານເອີ້ນວ່າ : ໄມໂອພະ ເພິ່ນຂຽນໄວ້ທາງໜ້າຕົວໜັງສືໃດຕົວໜຶ່ງທີ່ຕົວ ຣ ເປັນຕົວຕາມ ແຕ່ເວລາອ່ານຕ້ອງຖືວ່າຕົວ ຣ ເຟື້ອງນີ້ຢູ່ຂ້າງຫຼັງສະເໝີ.

ຕົວຢ່າງ: ໄຊ໌ວເວຸຊ໌ຽ ອ່ານວ່າ : ດູຣາທ່ານທັງຫຼາຍ

ໄຕມາຊາ ອ່ານວ່າ: ພຣະສາດສະດາ

ໄຕຽໄຕຕຸເດູຮູບ ອ່ານວ່າ: ກຣາບພຣະພຸດທະຮູບ

ນອກຈາກພະຍັນຊະນະ 3 ໝູ່ທີ່ກ່າວມານັ້ນຍັງມີພະຍັນຊະນະຄວບໂດຍໃຊ້ຕົວ ᩅ (ວ) ເປັນຕົວຄວບ ພະຍັນຊະນະຄວບ ແມ່ນພະຍັນຊະນະສອງຕົວໄປນຳກັນ ແຕ່ອອກສຽງທັງສອງຕົວສະເໝີກັນ.

ພະຍັນຊະນະຄວບນີ້ມີແຕ່ຕົວດຽວຄື: ຕົວ ᩅ (ວ) ເຊິ່ງເພິ່ນໃຊ້ວາງໄວ້ທາງຫຼັງຖັດກັບພະຍັນຊະນະຕົວທີ່ມັນຖືກ ຄວບ ເພື່ອເອົາສຽງຂອງຕົນໄປຄວບກັບພະຍັນຊະນະຕົວນັ້ນໆ.

**ຕົວຢ່າງ:** ᨠ ກັບ ᩅ ຄວບກັນເປັນສຽງ ᨠᩅ ເຊັ່ນ: ᩯᨠ᩠ᩅ᩠ᨦ (ແກວ່ງ) ᨠ᩠ᩅ᩠ᨿᨶ (ກວຽນ), ᨠ᩠ᩅᩣ᩠ᨦ ( ກວາງ)...

ᨡ ກັບ ᩅ ຄວບກັນເປັນສຽງ ᨡᩅ ເຊັ່ນ: ᩱᨡ᩠ᩅ᩵ᨡᩧ᩠ᨶ (ໄຂວ່ຂຶນ) ᨡ᩠ᩅᩣ (ຂວາ), ᩯᨡ᩠ᩅ᩠ᨶ (ແຂວນ), ᩯᨡ᩠ᩅ᩠ᨦ ( ແຂວງ ).

ᨣ ກັບ ᩅ ຄວບກັນເປັນສຽງ ᨣᩅ ເຊັ່ນ: ᨣ᩠ᩅᩣ᩠ᨿ (ຄວາຍ),ᨣ᩠ᩅᩣ᩠ᨾ (ຄວາມ), ᨣ᩠ᩅ᩶ᩣ (ຄວ້າ)...

**ໝາຍເຫດ:** ສ່ວນ ᩉ᩠ᩅ (ຫວ) ນີ້ແມ່ນເປັນໄດ້ທັງສອງແນວຄື: ເປັນພະຍັນຊະນະປະສົມກໍ່ໄດ້ ແລະ ເປັນພະຍັນຊະນະຄວບກໍ່ໄດ້; ແຕ່ມັນຕ່າງກັນຢູ່ບ່ອນວ່າ ເມື່ອໃດມັນເປັນພະຍັນຊະນະປະສົມນັ້ນ ມັນອອກສຽງ ᩅ ສູງ (ເປັນສຽງ ᩉᩅ ) ເຊັ່ນ: ຄຳວ່າ ᩮᨣᩬᩨᩋᩉ᩠ᩅᩣ᩠ᨿ (ເຄືອຫວາຍ) , ແຕ່ເມື່ອມັນອອກສຽງພ້ອມກັນ ແລະ ສະເໝີກັນມັນພັດແມ່ນພະຍັນຊະນະຄວບເຊັ່ນ: ᩉᩦ᩠ᨶᩉ᩠ᩅᩣ᩠ᨿ ( ຫີນຫວາຍ).

**2.2 ໜ້າທີ່ຂອງພະຍັນຊະນະ**

ພະຍັນຊະນະຕົວອັກສອນທຳທັງ 38 ຕົວທີ່ກ່າວມານັ້ນ ເມື່ອອີງໃສ່ຄວາມສາມາດໃນການປະກອບສ້າງຂອງຄຳເວົ້າ ມີຢູ່ 2 ໜ້າທີ່ຄື: ໃຊ້ເປັນຕົວແກນ ແລະ ຕົວສະກົດ.

**ກ. ພະຍັນຊະນະທີ່ໃຊ້ເປັນຕົວແກນ**

ພະຍັນຊະນະທີ່ໃຊ້ເປັນຕົວແກນໝາຍເຖິງພະຍັນຊະນະທີ່ເອົາສຽງຂອງຕົນໄປເປັນແກນສຽງຂອງຄຳເວົ້າ.

ຕົວຢ່າງ: ᨠ (ກ) ໃນຄຳວ່າ ᨠᩥ᩠ᨶ : ( ກິນ)

ᨯ (ດ )ໃນຄຳວ່າ: ᨯᩬ᩠ᨶ (ດອນ)

ᨷ (ບ) ໃນຄຳວ່າ: ᨷᩭ (ບອຍ)

ᩈ ( ສ) ໃນຄຳວ່າ: ᩈᩬ᩠ᨶ (ສອນ)

ᨶ (ນ ) ໃນຄຳວ່າ: ᨶᩢ᩠᩶ᨶ ( ນັ້ນ) ດັ່ງນີ້ເປັນຕົ້ນ.

ໃນພະຍັນຊະນະ 38 ຕົວນັ້ນ ມີຈຳນວນໜຶ່ງເປັນຕົວແກນລ້ວນໆ, ແຕ່ອີກຈຳນວນໜຶ່ງໃຊ້ເປັນທັງຕົວແກນ ແລະ ຕົວສະກົດ.

- ໃຊ້ເປັນຕົວແກນລ້ວນໆ ມີ 30 ຕົວຄື: : ᨡ(ຂ), ᨣ(ຄ), ᨥ (ຄ), ᨧ(ຈ), ᨨ(ສ), ᨩ(ຊ), ᨫ(ຊ), ᨬ(ຍ), ᨭ (ຕ), ᨮ(ຖ), ᨰ(ທ), ᨱ(ນ), ᨲ(ຕ), ᨳ(ຖ), ᨴ( ທ), ᨵ( ທ),ᨸ(ປ), ᨹ(ຜ), ᨻ(ພ), ᨽ (ພ), ᩁ (ຣ), ᩃ(ລ), ᩀ(ຢ), ᩆ (ສ), ᩉ( ຫ), ᩈ(ຣ), ᩌ (ອ), ᨺ (ພ), ᨼ(ຝ), ᩁ(ຮ).

- ໃຊ້ເປັນທັງຕົວແກນ ແລະ ຕົວສະກົດ ມີ 8 ຕົວຄື: ᨠ(ກ), ᨯ (ດ), ᨷ (ບ), ᨦ(ງ), ᨿ (ຍ), ᨶ (ນ), ᨾ(ມ), ᩅ (ວ) .

**ຂ. ພະຍັນຊະນະທີ່ໃຊ້ເປັນຕົວສະກົດ**

ພະຍັນຊະນະທີ່ໃຊ້ເປັນຕົວສະກົດ ແມ່ນພະຍັນຊະນະທີ່ເອົາສຽງຂອງຕົນໄປຜົນສຽງສະຫຼະໃນຄຳເວົ້າໃຫ້ເປັນຄຳຕາມສຽງສຳຜັດຂອງຕົວສະກົດ.

- ᨦ (ງ) ເວລາເປັນຕົວ ສະກົດຕາມຫຼັກການແລ້ວຈະມີຢູ່ 3 ຮູບແບບຄື: ×ᩘ , ×᩠ᨦ , ×ᨦ ເຊິ່ງໃນນັ້ນມີກຳລະນີນຳໃຊ້ທີ່ແຕກຕ່າງກັນ.

- ×ᩘ ເຟື້ອງນີ້ແມ່ນໃຊ້ສຳລັບເປັນຕົວສະກົດແຕ່ຢູ່ເທິງພະຍັນຊະນະ

ຕົວຢ່າງ: ᨦ᩠ᨿᩘ ( ງ້ຽງ ), ᨻᩩᩘ (ພຸງ ), ᨿᩪᩘ ( ຍູງ), ᨴ᩠ᩅᩘ ( ດວງ) , ᩃ᩠ᩅᩘ( ລ່ວງ), ᨶᩣᩘ( ນາງ), ᩉ᩠ᩅ᩠ᨿᩘ (ຫວ່ຽງ).

- ×᩠ᨦ ເຟື້ອງນີ້ແມ່ນໃຊ້ສຳລັບເປັນຕົວສະກົດແຕ່ຢູ່ລຸ່ມພະຍັນຊະນະ

ຕົວຢ່າງ: ᨦ᩠ᨿ (ຊ່ອຍ) ᨯᩢ᩠ᨦ (ດັງ), ᩍ᩠ᨦ (ອິງ), ᨲᩥ᩠ᨦ(ຕິ້ງ), ᨹᩢ᩠ᨦ(ເຜັງ), ᩯᩆ᩠ᨦ ( ແສງ), ᨣᩢ᩠ᨦ (ກັ່ງ), ᨣᩰ᩠ᨦ (ໂຄ້ງ), ᩉᩮᩬᩥ᩠ᨦ( ເຫວືອງ)

- ×ᨦ ຕົວເດີມ (ຕົວເຕັມ) ນີ້ແມ່ນໃຊ້ສຳລັບເປັນຕົວສະກົດເພື່ອໄປປະກອບກັບພະຍັນຊະນະປະສົມແຕ່ຢູ່ໃນແຖວ.

ຕົວຢ່າງ: ᨾᩮᩥ᩠ᨯᨦ (ເມືອງ),ᩉᩮ᩠ᨿᩥᨦ ( ເຫີຍງ),ᩉᩮ᩠ᨶᩢᨦ (ເໜັງ),ᩉ᩠ᨶᩢᨦ (ໜັງ),ᩉ᩠ᨾᩪᨦ (ໝູງ) ᩯᩉ᩠ᩅᨦ (ແຫວງ).

- ຕົວ ᨿ (ຍ) ເວລາເປັນຕົວ ສະກົດຕາມຫຼັກການແລ້ວຈະມີຢູ່ 1 ຮູບແບບຄື: ×ᩭ ເຊິ່ງມີຮູບແບບສະກົດດັ່ງນີ້:

ຕົວຢ່າງ: ᨦ᩠ᩅᩭ (ງ່າຍ), ᩃᩭ (ລອຍ), ᩮᨡ᩠ᨿᩭ (ເຂີຍ), ᩰᨯᩭ (ໂດຍ),ᨸᩮᩬᩥᩭ ( ເປື່ອຍ), ᨠᩭ (ກ້ອຍ) ᩉ᩠ᨶ᩠ᩅᩭ (ຫນ່ວຍ) .

- ຕົວ ᨶ(ນ ) ເວລາເປັນຕົວ ສະກົດຕາມຫຼັກການແລ້ວຈະມີຢູ່ 2 ຮູບແບບການສະກົດຄື: ×᩠ᨶ, ×ᨶ

- ×᩠ᨶ ເຟື້ອງນີ້ແມ່ນໃຊ້ສຳລັບເປັນຕົວສະກົດແຕ່ຢູ່ລຸ່ມພະຍັນຊະນະ

ຕົວຢ່າງ: ᨣᩢ᩠ᨶ(ຄັນ) ,ᨧᩥ᩠ᨶ (ຈິນ), ᨪᩣ᩠ᨶ (ຊານ), ᨸᩥ᩠᩶ᨶ (ປີ້ນ), ᨯᩥ᩠ᨶ (ດິນ), ᨯᩮᩥ᩠᩵ᨶ (ເດີ່ນ), ᨷᩰ᩠ᨶ (ໂພນ).

- ×ᩁ ພະຍັນຊະນະນີ້ແມ່ນໃຊ້ເປັນຕົວ ᨶ ເວລາເປັນຕົວສະກົດ

ຕົວຢ່າງ: ᨷᩩᩁ( ບຸນ), ᩋ᩠ᩅᩁ( ວອນ), ᩉ᩠ᨾᩪᩁ( ໝູນ), ᩮᨯᩨ᩠ᩋᩁ(ເດືອນ ), ᨶ᩠ᩅᩁ( ນອນ ), ᩉ᩠ᩃᩥ᩶ᩁ( ຫຼິ້ນ), ᩮᩉᩢ᩠ᩁ( ເຫັນ ).

- ຕົວ ᨾ (ມ) ເວລາເປັນຕົວ ສະກົດຕາມຫຼັກການແລ້ວຈະມີຢູ່ 2 ຮູບແບບຄື: ◌ᩴ , ×ᨾ ສະກົດຄື:

- ×ᨾ ຕົວເດີມ (ຕົວເຕັມ) ນີ້ແມ່ນໃຊ້ສຳລັບເປັນຕົວສະກົດແຕ່ຢູ່ໃນແຖວ.

ຕົວຢ່າງ: ᨡ᩠ᩅᨾ(ຂອມ), ᨵ᩠ᩅᨾ(ຣອມ), ᩮᩉᩥᨾ (ເຫີມ), ᩉ᩠ᨿᩣ᩠ᨿᨾ (ຫຽມ), ᨠ᩠ᩅᨾ (ກອມ), ᩰᩉ᩠ᨿᨾ (ໂຫຍມ).

- ◌ᩴ ຕົວເຟື້ອງນີ້ເວລາໃຊ້ເປັນເປັນສະກົດແມ່ນຈະຫ້ອຍຢູ່ລຸ່ມພະຍັນຊະນະ.

ຕົວຢ່າງ: ᨦᩣᩴ (ງາມ), ᩈᩥᩴ (ສິມ), ᩰᨧᩴ (ໂຈມ), ᨣᩥᩴ (ຄີມ), ᩃᩨᩴ(ລືມ), ᩮᨲᩢᩴ(ເຕັມ), ᩯᨣᩴ (ແຄມ).

- ຕົວ ᩅ (ວ) ເປັນຕົວສະກົດຕາມຫຼັກການແລ້ວແມ່ນມີຕົວສະກົດພຽງແຕ່ຮູບແບບດຽວຄືຕົວເຕັມ ( ᩅ )ເຊິ່ງໃຊ້ໃນ 2 ລັກສະນະຄື ໃນແຖວ ແລະ ລຸ່ມແຖວ :

ຕົວຢ່າງ: ຕົວສະກົດ (ᩅ ) ທີ່ໃຊ້ໃນແຖວຄື: ᨿᩣ᩠ᩅ (ຍາວ), ᨶᩥ᩠ᩅ(ນິວ), ᩮᩉᩢ᩠ᩅ (ເຫວ), ᩯᩉ᩠ᩃ᩠ᩅ (ແຫລວ), ᨡ᩠ᨿᩅ ( ຂຽວ).

ຕົວຢ່າງ: ຕົວສະກົດ (ᩅ ) ທີ່ໃຊ້ລຸ່ມແຖວຄື: ᨲ᩠ᩅᩡ (ຕົວະ), ᩉ᩠ᩅ (ຫົວ)

- ຕົວ ᨠ (ກ) ເປັນຕົວສະກົດຕາມຫຼັກການແລ້ວແມ່ນມີຕົວສະກົດ ມີ 2 ຮູບແບບ ຄື ຕົວ ᨠ ( ກ ) ຕົວເດີມ ແລະ ໄມ້ອັນ ( ◌᩺ )

- ◌᩺ (ໄມ້ອັນ) ນີ້ແມ່ນໃຊ້ສຳລັບເປັນຕົວສະກົດ ᨠ (ກ) ໃຊ້ໄວ້ເທິງພະຍັນຊະນະ.

ຕົວຢ່າງ: ᨹᩢ᩠ᨠ (ຜັກ), ᩉ᩠ᨾᩣ᩺ (ໝາກ), ᩉ᩠ᩃᩣ᩺ (ຫຼາກ), ᩉ᩠ᩃᩥ᩠ᨠ (ຫຼີກ), ᨴᩩ᩺ (ທຸກ), ᩃᩪ᩺ (ລູກ), ᨯ᩠ᩅ᩺ ( ດອກ), ᨦ᩠ᩅ᩺ (ງວກ), ᨸ᩠ᨿ᩺ (ປຽກ), ᩮᩉᩖᩬ᩺ (ເຫຼືອກ).

- ×ᨠ ຕົວເດີມ ( ຕົວເຕັມ) ແມ່ນໃຊ້ເປັນຕົວສະກົດຢູ່ໃນແຖວ

ຕົວຢ່າງ: ᩉ᩠ᩃᩥ᩠ᨠ (ຫຼີກ), ᨲᩨ᩠ᨠ (ຕຶກ), ᩯᨲ᩠ᨠ (ແຕກ), ᩮᨷᩥ᩠ᨠ (ເບີກ), ᩈᩥ᩠ᨠ (ສິກ), ᨽᩥ᩠ᨠ (ກິກ)

- ຕົວສະກົດ ᨯ (ດ) ຕາມຫຼັກການແລ້ວແມ່ນມີພຽງຕົວສະກົດຮູບແບບດຽວ ຄື ᨯ ຕົວເຕັມ

( ຕົວເດີມ) ເຊິ່ງໃຊ້ໃນສອງກໍລະນີຄືໃນແຖວ ແລະ ລຸ່ມແຖວ.

ຕົວສະກົດ (ᨯ ) ທີ່ໃຊ້ໃນແຖວ

ຕົວຢ່າງ: ᨷᩬᨯ (ປອດ), ᨡ᩠ᨿᨯ (ຂຽດ), ᩃᩬᨯ, (ລອດ), ᩉ᩠ᩅᩢᨯ (ຫວັດ), ᨷᩪᨯ (ບູດ), ᩉᩰ᩠ᨿᨯ (ໂຫຍດ).

ຕົວສະກົດ (ᨯ ) ທີ່ໃຊ້ລຸ່ມພະຍັນຊະນະ

ຕົວຢ່າງ: ᩅᩰᨠ᩠ᨯ (ໂກດ), ᨡᩢ᩠ᨯ (ຂັດ), ᩅᨧᩮᩥ᩠ᨯ ( ເຈີດ), ᨤᩥ᩠ᨯ (ຄີດ), ᩅᩯᨯ᩠ᨯ (ແດດ), ᩅᨧᩮᩢ᩠ᨯ (ເຈັດ)

- ຕົວສະກົດ ᨷ (ບ )ຕາມຫຼັກການແລ້ວແມ່ນມີຕົວສະກົດ 2 ຮູບແບບຄື ຕົວເຕັມ ( ຕົວເດີມ) ແລະ ຕົວເຟື້ອງ ຄື: ◌᩠ᨷ, ◌ᨷ ສະກົດຄື:

- ◌ᨷ ຕົວເດີມ (ຕົວເຕັມ) ນີ້ແມ່ນໃຊ້ສຳລັບເປັນຕົວສະກົດແຕ່ຢູ່ໃນແຖວ.

ຕົວຢ່າງ: ᨡᩬᨷ (ຂອບ), ᩁᩬᨷ (ຮອບ), ᩉᩮᩥᨷ (ເຫີບ), ᩉ᩠ᨿᨷ (ຫຽບ), ᨠᩬᨷ (ກອບ), ᩉᩰ᩠ᨿᨷ (ໂຫຍບ).

- ◌᩠ᨷ ຕົວເຟື້ອງນີ້ເວລາໃຊ້ເປັນເປັນສະກົດແມ່ນຈະຫ້ອຍຢູ່ລຸ່ມພະຍັນຊະນະ.

ຕົວຢ່າງ: ᩃᩢ᩠ᨷ (ລັບ), (ᨯᩣ᩠ᨷ ( ດາບ), ᨲᩮᩥ᩠ᨷ (ເຕີບ), ᨩᩮᩢ᩠ᨷ (ເຊັບ), ᨧᩪ᩠ᨷ (ຈູບ)

**ຄ. ຕົວສະກົດພິເສດ**

ພາສາຕ່າງໆໃນໂລກເຊິ່ງນັບແຕ່ພາສາພາຝຣັ່ງ, ອັງກິດ, ເຢຍລະມັນ, ອິນເດຍ, ລາວ,ໄທ ແລະ ອື່ນໆເຮົາຈະເຫັນບາງສັບທີ່ມີຕົວສະກົດເພິ່ນມັກອາໄສພະຍັນຊະນະຂອງສັບຫຼັງໃຊ້ເປັນຕົວສະກົດແທນ ເຊັ່ນ: ຄຳວ່າ: ສັດຈະ ພາສາລາວພື້ນເມືອງເພິ່ນມັກຈະຂຽນ ສັຈະ ກໍມີ , ໃນໜັງສືທຳທີ່ຂຽນເປັນຄຳບາລີເພິ່ນມັກໃຊ້ພະຍັນຊະນະຕົວອື່ນມາສະກົດແທນພະຍັນຊະນະທີ່ເປັນຕົວສະກົດ ເຊິ່ງມີທັງໝົດ 3 ຕົວຄື:

- ຕົວສະກົດ ᨶ (ນ) ເວລາເປັນຕົວສະກົດຂຽນຄຳບາລີເພິ່ນມັກເອົາຕົວພະຍັນຊະນະ ᨿ (ຍ), ᩃ (ລ) ແລະ ᩁ (ຣ) ແທນ.

ກ. ໃຊ້ ᨿ ສະກົດແທນ ເຊັ່ນ: ᨷᨬ᩠ᨬᩣ (ປັນຍາ), ᨶᨬ᩠ᨬᩢ᩠ᨦ (ນານຍັງ), ᨷᩩᨬ᩠ᨬᩣ (ປຸນຍາ)

ຂ. ໃຊ້ ᩃ ສະກົດແທນເຊັ່ນ: ᨽᩥᩃ᩠ᩃ (ພິນລະ ), ᨧᩩᩃ᩠ᩃ (ຈຸນລະ), ᨻᩃ᩠ᩃᨶ (ພັນລະນາ)

ຄ. ໃຊ້ ᩁ ສະກົດແທນ ເຊັ່ນ: ᩉᩁ᩠ᩉ (ຫັນລະຫະ),ᩅᩥᩁᩩ᩠ᩉ (ວິລຸນລະຫະ), ᨾᩩᩁ᩠ᩉ (ມຸນລະຫະ).

- ຕົວສະກົດ ᨯ (ດ) ເວລາເປັນຕົວສະກົດ ຂຽນຄຳບາລີເພິ່ນມັກເອົາພະຍັນຊະນະ ᨧ (ຈ),ᨩ (ຊ) ᨭ (ຕ),ᨲ (ຕ),ᨳ (ທ),ᩈ (ສ) ແທນ.

ກ. ໃຊ້ ᨧ ສະກົດແທນ ເຊັ່ນ: ᩋᨧ᩠ᨧᩥ (ອັດຈິ), ᨠᩥᨧ᩠ᨧ (ກິດຈະ), ᩈᨧ᩠ᨧ (ສັດຈະ)

ຂ. ໃຊ້ ᨩ ສະກົດແທນ ເຊັ່ນ: ᩅᩥᨩ᩠ᨩᩣ (ວິດຊາ), ᩋᨩ᩠ᨩ (ອັດຊະ), ᩅᩮᨩ᩠ᨩ (ເວດຊະ)

ຄ. ໃຊ້ ᨲ ສະກົດແທນ ເຊັ່ນ: ᨶᩣᨲ᩠ᨲ (ນາດຕະ), ᩋᨲ᩠ᨳᩥ (ອັດຖິ ), ᩈᩮᨲ᩠ᨳᩥ (ເສດຖີ)

ງ. ໃຊ້ ᨲ ສະກົດແທນ ເຊັ່ນ: ᨧᩥᨲ᩠ᨲ (ຈິດຕະ), ᨷᨲ᩠ᨲ (ປັດຕະ), ᩋᨲ᩠ᨲ (ອັດຕະ)

ຈ. ໃຊ້ ᨴ ສະກົດແທນ ເຊັ່ນ: ᨻᩩᨴ᩠ᨵ (ພຸດທະ), ᩈᨴ᩠ᨵᩣ (ສັດທາ), ᩈᩥᨴ᩠ᨵᩥ (ສິດທິ)

ສ. ໃຊ້ ᩈ ສະກົດແທນ ເຊັ່ນ: ᩋᩔ (ອັດສະ),ᩍᩔᩣ (ອິດສາ),ᨾᨶᩩᩔ (ມະນຸດສະ).

- ຕົວສະກົດ ᨷ ເວລາເປັນຕົວສະກົດ ຂຽນຄຳບາລີເພິ່ນມັກເອົາພະຍັນຊະນະ ᨷ (ບ), ᨹ (ຜ), ᨽ (ພ).

ກ. ໃຊ້ຕົວ ᨹ ສະກົດແທນ ເຊັ່ນ: ᨷᩩᨷ᩠ᨹᩘ (ບຸບຜັງ), ᨷᩩᨷ᩠ᨹᩣ (ບຸບຜາ).

ຂ.ໃຊ້ຕົວ ᨽ ສະກົດແທນ ເຊັ່ນ: ᩈᨷ᩠ᨽᩮ (ສັບເພ), ᩈᨷ᩠ᨽ (ສັບພະ), ᨴᩥᨷ᩠ᨽ (ທິບພະ ).

ຄ. ໃຊ້ຕົວ ᨷ ສະກົດແທນ ເຊັ່ນ: ᨠᨷ᩠ᨷ (ກັບປະ), ᩅᨷ᩠ᨷ ( ວັບປະ ), ᩈᩥᨷ᩠ᨷ ( ສິບປະ).

**2.3 ສະຫຼະ**

ສະຫຼະ ແມ່ນຕົວອັກສອນໝວດໜຶ່ງ ທີ່ເຂົ້າໄປຮ່ວມກັບພະຍັນຊະນະໃຫ້ເປັນພະຍາງ ຫຼື ຄຳເວົ້າ ແລ້ວເອົາສຽງຂອງຕົນໄປຜົນສຽງຂອງພະຍາງນັ້ນ.

ສະຫຼະທັງໝົດມີ 29 ຕົວມີຄື:

ສະຫຼະອັກສອນທຳ: ×ᩡ ×ᩣ ×ᩥ ×ᩦ ×ᩧ ×ᩨ ×ᩩ ×ᩪ ᩮ× ᩯ× ᩰ× ×ᩴᩣ ×ᩴ ᩱ× ᩲ×

ᩮ×ᩣ ×ᩢ᩠ᨿ ᩮ×ᩡ ᩯ×ᩡ ᩰ×ᩡ ᩮ×ᩣᩡ ×ᩳᩡ ×ᩳ ᩮ×ᩥ ᩮ×ᩦ ᩮ×ᩧᩬ ᩮ×ᩨᩬ ᩮ×ᩬᩢ᩠ᨿᩡ ᩮ×ᩬᩢ᩠ᨿ

ສະຫຼະອັກສອນລາວ: xະ xາ xິ xີ xຶ xື xຸ xູ ເx ແx ໂx xໍ ໄx ໃx ເxົາ xອຍ

ເxະ ແxະ ໂxະ ເxາະ ເxິ ເxີ ເxັຍ ເxຍ ເxືອ ເxືອ xົວະ xົວ xໍາ

**ກ. ສະຫຼະເຄົ້າ**

ສະຫຼະເຄົ້າ ແມ່ນສະຫຼະທີ່ມີສຽງໃນຕົວມັນເອງ ເຊິ່ງບໍ່ທັນໄດ້ປະສົມກັບສະຫຼະອື່ນ ຫຼື ພະຍັນຊະນະຕົວໃດຕົວໜຶ່ງເທື່ອ. ສະຫຼະເຄົ້າມີ 17 ຕົວຄື: ×ᩡ ×ᩣ ×ᩥ ×ᩦ ×ᩧ ×ᩨ ×ᩩ ×ᩪ ᩮ× ᩯ× ᩰ× ×ᩴᩣ ×ᩴ

ᩱ× ᩲ× ᩮ×ᩣ ×ᩢ᩠ᨿ

ສະຫຼະລາວ: xະ xາ xິ xີ xຶ xື xຸ xູ ເx ແx ໂx xໍ ໄx ໃx xໍາ ເxົາ xອຍ

**ຂ. ສະຫຼະປະສົມ**

ສະຫຼະປະສົມ ແມ່ນສະຫຼະທີ່ໄດ້ຈາກສະຫຼະປະສົມສະຫຼະ ແລະ ພະຍັນຊະນະບາງຕົວ.

- ສະຫຼະເຄົ້າປະສົມກັນເອງຈະໄດ້ສະຫຼະປະສົມດັ່ງນີ້:

ສະຫຼະ ᩮ× + ×ᩡ = ᩮ×ᩡ ( ເx + xະ = ເxະ )

ᩯ× + ×ᩡ = ᩮ×ᩡ ( ແx + xະ = ແxະ )

ໂ× + ×ະ = ໂ×ະ    ໂx + xະ = ໂxະ

ເ× + ×ິ = ເ×ິ    (ເx + xິ = ເxິ)

ເ× + ×ີ = ເ×ີ    (ເx + xີ = ເxີ)

×ໍ + ×າ = ×ໍາ    (xໍ + xາ = xໍາ)

ເ× + ×າ + ×ະ = ເ×າະ    (ເx + xາ + xະ = ເxາະ)

- ເອົາສະຫຼະເຄົ້າປະສົມກັບພະຍັນຊະນະບາງຕົວຈະໄດ້ສະຫຼະປະສົມດັ່ງນີ້:

ສະຫຼະ ເ× + ×ຶ + ×ອ = ເ×ຶອ    ( ເx + xຶ + ອ = ເxຶອ )

ເ× + ×ື + ×ອ = ເ×ືອ    (ເx + xື + ອ = ເxືອ)

ເ× + ×ຍ = ເ×ຍ    ( ເx + ຍ = ເxຍ)

- ເອົາສະຫຼະເຄົ້າປະສົມກັບສະຫຼະປ່ຽນຮູບໄດ້ສະຫຼະປະສົມດັ່ງນີ້:

ເ×+ໂ×ະ ( ປ່ຽນຮູບ ×ົ ) = ເ×ົາ

- ເອົາສະຫຼະເຄົ້າປະສົມກັບສະຫຼະປ່ຽນຮູບ ແລະ ພະຍັນຊະນະບາງຕົວຈະໄດ້ສະຫຼະປະສົມດັ່ງນີ້:

ໂ×ະ ( ປ່ຽນຮູບ ×ົ ) ×ອ + ×ະ = ×ົອະ    ໂxະ (ປ່ຽນຮູບ xົ) + ອ + xະ = xົອະ

ໂ×ະ ( ປ່ຽນຮູບ ×ົ ) ×ອ + ×ະ = ×ົອະ    ໂxະ (ປ່ຽນຮູບ xົ ) + ອ = xົອ

ເ×ະ ( ປ່ຽນຮູບ ເ×ັ ) ×ຍ = ເ×ັຍ    ເxະ (ປ່ຽນຮູບ ເxັ) + ຍ = ເxັຍ

ສະຫຼະໃນອັກສອນທຳປະກອບມີ 2 ສຽງຄື: ສຽງສັ້ນ ແລະ ສຽງຍາວ.

ຕາຕະລາງ 2.1 : ປຽບທຽບສະຫຼະ ສຽງສັ້ນ ແລະ ສະຫຼະສຽງຍາວ

| ສະຫຼະສຽງສັ້ນ | ສະຫຼະສຽງຍາວ |
|---|---|
| ×ະ | ×າ |
| ×ິ | ×ີ |
| ×ຶ | ×ື |
| ×ຸ | ×ູ |
| ເ×ະ | ເເ× |
| ເເ×ະ | ໂ× |
| ໂ× ະ | ເ×ີ |
| ເ×ະ | ×ໍ |
| ເ×ິ | ເ×ືອ |

| | |
|---|---|
| ᩮ×ᩥ<br>ᩮ×ᩬ᩠ᨿ<br>ᩰ×ᩬ: | ᩮ×ᩬ᩠ᨿ<br>ᩰ×ᩬ |

ນອກນັ້ນສະຫຼະໃນອັກສອນທຳຍັງມີຈຸດພິດເສດຄືຈະມີ ສະຫຼະຈົມໃນຕົວ ຄືພະຍັນຊະນະອັກສອນທຳທຸກຕົວຈະມີສຽງສະຫຼະ ×ະ ໃນຕົວ.

ອັກສອນທຳເວລານຳໄປຂຽນຄຳບາລີສ່ວນຫຼາຍເພິ່ນຈະນິຍົມໃຊ້ ສະຫຼະລອຍ ເຊິ່ງສະຫຼະລອຍແມ່ນສະຫຼະທີ່ມາສາດຂຽນຄຳສັບໄດ້ເລີຍໂດຍບໍ່ຈຳເປັນຕ້ອງໄປອາໄສພະຍັນຊະນະປະກອບໂດຍເຮັດໜ້າທີ່ແທນຕົວ ອ ແລະ ສະຫຼະພ້ອມ ເຊິ່ງສະຫຼະລອຍທັງໝົດແມ່ນປະກອບມີ 8 ຮູບ ຄື: ᩋ ᩋᩣ ᩍ ᩎ ᩏ ᩐ ᩑ ᩒ

ສະຫຼະລາວ: ອະ ອາ ອິ ອີ ອຸ ອູ ເອ ໂອ

ຕົວຢ່າງ: ການໃຊ້ສະຫຼະລອຍ: ᩋᨶᩥᨧ᩠ᨧᩣ ( ອະນິດຈາ), ᩋᩣᩈᩱ (ອາໄສ), ᩏᩉᩥ᩠ᨠ (ອຸຫິກ), ᩍᨶ (ອິນະ), ᩒᩅᩣᨴ (ໂອວາດ) .

**ຄ.ສະຫຼະປ່ຽນຮູບ**

ການປະສົມສະຫຼະໃສ່ກັບຕົວສະກົດທັງ 8 ຕົວ, ເມື່ອປະສົມແລ້ວມີສະຫຼະບາງຕົວໄດ້ຜັນປ່ຽນຈາກຮູບເດີມໄປຕາມຮູບໃໝ່ດັ່ງນີ້:

ສະຫຼະ ×ະ ຈະປ່ຽນເປັນຮູບນີ້ ×ັ ຕົວຢ່າງ: ᨯᩢ᩠ᨠ (ດັກ), ᨻᩢ᩠ᨷ (ພັບ), ᨿᩢ᩠ᨦ (ຍັງ).

ສະຫຼະ ເ×: ຈະປ່ຽນເປັນຮູບນີ້ ເ×ັ ຕົວຢ່າງ: ᨯᩮᩢ᩠ᨠ (ເດັກ) , ᨽᩮᩢ᩠ᨷ ( ເກັບ), ᨶᩮᩢ᩠ᨦ (ເນັ່ງ),

ສະຫຼະ ແ×ະ ຈະປ່ຽນເປັນຮູບນີ້ ແ×ັ ຕົວຢ່າງ: ᨡᩯᩢ᩠ᨦ (ແຂ້ງ), ᨠᩯᩢ᩠ᨷ (ແກັບ),ᨸᩯᩢ᩠ᨦ (ແປັງ)...

ສະຫຼະ ໂ× ຈະປ່ຽນເປັນຮູບນີ້ ×ົ ຕົວຢ່າງ: ᨯᩰ᩠ᨠ (ດົກ), ᨠᩰ᩠ᨷ (ກົບ) ...

ສະຫຼະ ×າ ເວລາປະກອບກັບພະຍັນຊະນະຕົວ ᩅ ຈະປ່ຽນຮູບມາເປັນ ×ᩤ ຕົວຢ່າງ: ᩅᩤ

×ᩬ᩠ᨿ ເພື້ອງ ເວລາຂຽນຄຳສັບເມື່ອມີຕົວສະກົດຈະປ່ຽນເປັນ ສະຫຼະ ອຽງ

ຕົວຢ່າງ: ᨠ᩠ᨿᩅ (ກ່ຽວ), ᩈ᩠ᨿᩘ (ສຽງ) .

×ᩬ᩠ᨿ ໃຊ້ແທນສະຫຼະ ×ᩬ᩠ᨿ ອອຍ ສະກົດດ້ວຍຕົວ ᨿ ຕົວຢ່າງ: ᨡ᩠ᨿ (ຂ້ອຍ), ᨣ᩠ᨿ (ຄອຍ), ᨶ᩠ᨿ ( ນ້ອຍ).

ເ×າ ຈະອອກສຽງສະຫຼະ ໂ× ( ໂອ ) ເມື່ອຂຽນຄຳເຄົ້າສັບພາສາບາລີ

ຕົວຢ່າງ: ᨲᩮᩣ (ໂຕ), ᨿᩢ᩠ᨠᨡᩮᩣ (ຍັກໂຂ), ᨻᩩᨴ᩠ᨵᩮᩣ (ພຸດໂທ).

ຈາກສະຫຼະຂ້າງເທິງນັ້ນ ຍັງມີອີກສະຫຼະ ໜຶ່ງໃນອັກສອນທຳທີ່ເພິ່ນໃຊ້ຂຽນສະເພາະຄຳບາລີເທົ່ານັ້ນ ສ່ວນຄຳນິດໄສ ( ຄຳທຳມະດາ ) ໃນພາສາລາວເພິ່ນບໍ່ໃຊ້ຂຽນ ເຊິ່ງເພິ່ນເອີ້ນວ່ານິກຄະຫິດ (◌ໍ) ເຊິ່ງຈະອອກສຽງເປັນ ສະຫຼະ ອັງ ເຊັ່ນ: ᩅᩈᩴ (ວະສັງ), ᨻᩩᨴ᩠ᨵᩴ (ພຸດທັງ), ᩑᩅᩴ (ເອວັງ).

ນິກຄະຫິດ ເມື່ອຂຽນເປັນຄຳບາລີ ຈະອອກສຽງຕົວ ᨦ (ງ) ສະກົດຢູ່ນຳ ເຊັ່ນ: ᨧᨠ᩠ᨡᩩᩴ(ຈັກຂຸງ), ᨽᩥᩴ (ພິງ ).

## 2.3 ວັນນະຍຸດ

ວັນນະຍຸດ ແມ່ນເຄື່ອງໝາຍບອກລະດັບສຽງ ແລະ ໃຊ້ສຳລັບຜັນສຽງ ຫຼື ປ່ຽນສຽງຂຶ້ນລົງຕາມສຳນຽງສຽງເວົ້າໃນພາລາວ.ແຕ່ສຳລັບໃນໜັງສືທຳວັນນະຍຸດແມ່ນມີ 2 ໄມ້ ຄື ໄມ້ເອກ ແລະ ໄມ້ໂທ. ຕາມປົກກະຕິໜັງສືທຳສ່ວນຫຼາຍຈະບໍ່ຂຽນວັນນະຍຸດປະກົດຮູບໃຫ້ເຫັນແຕ່ໃນເວລາອ່ານຜູ້ອ່ານແມ່ນຕ້ອງມີການຜັນສຽງທີ່ມີໄມ້ເອກ ແລະ ໄມ້ໂທ ຕາມຄວາມໝາຍຂອງປະໂຫຍກ ຫຼື ຂໍ້ຄວາມນັ້ນໆ ເປັນເກນໃນການພິຈາລະນາໃຫ້ສອດຄ່ອງກັບຄຳສັບໃນພາສາລາວ, ດັ່ງນັ້ນຈຶ່ງເປັນການຍາກໃນເວລາອ່ານຜູ້ອ່ານຈະຕ້ອງພິຈາລະນາເນື້ອຄວາມໃຫ້ຄັກແນ່ສາກ່ອນຈຶ່ງຈະອ່ານໃຫ້ຖືກຕ້ອງ ເຊັ່ນ: ᨷᩣᨾᩱ(ປ່າໄມ້), ᩁᩬᨦᩉᩱ(ຮ້ອງໄຫ້),ᨡᩮᩢᩣᨠᩴᩣ(ເຂົ້າກ່ຳ), ᨸᩪᨯᩱᨸᩪᨾᩣᨠᩯᨶᩣ (ປູ່ໄດ້ປູມາແຕ່ນາ).

### 2.4ໄມ້ຕ່າງໆ ແລະ ຕົວເລກ

### 2.4.1 ໄມ້ຕ່າງໆ

ໄມ້ຕ່າງໆທີ່ໃຊ້ໃນອັກສອນທຳລາວມີພຽງ 2 ຮູບ ຄື ◌ᩢ ໄມ້ອັນ ແລະ ◌ᩫ ໄມ້ອິງການຂຽນໄມ້ອັນ ແລະ ໄມ້ອິງ ໃນໜັງສືຜູກໃບລານສ່ວນຫຼາຍເພິ່ນຈະບໍ່ຂອດຫົວພຽງແຕ່ຂຽນເປັນຮູບເສັ້ນກົງ ຫຼື ຂີດຂຶ້ນລັກສະນະສະຫຼຽງເທົ່ານັ້ນເຊິ່ງມີການນຳໃຊ້ຫຼາຍຮູບແບບທີ່ແຕກຕ່າງກັນດັ່ງນີ້:

- ◌ᩢ ໄມ້ອັນ ແມ່ນໃຊ້ແທນຕົວ ᨠ (ກ) ເວລາເຮັດໜ້າທີ່ເປັນຕົວສະກົດ ເຊັ່ນ: ᨧᩢ (ຈັກ), ᩉᩣᩢ (ຫາກ).
- ◌ᩢ ໃຊ້ເປັນໄມ້ອັນ ເຊັ່ນ: ᩋᩢ᩠ᨶ (ອັນ) , ᨶᩢ᩠ᨶ (ນັ້ນ).
- ◌ᩢ ໃຊ້ປະກອບກັບຄຳທີ່ປະສົມດ້ວຍ ສະຫຼະ ເອະ, ເອ ເຊັ່ນ: ᨾᩮᩢ᩠ᨿ (ເມຍ), ᨸᩮᩢ᩠ᨶ ( ເປັນ).
- ◌ᩫ ໄມ້ ອິງ ແມ່ນໃຊ້ແທນຂຽນໄມ້ກົງ ເຊັ່ນວ່າ: ᨣᩫ᩠ᨾ( ຄົມ), ᨲᩫ᩠ᨶ (ຕົ້ນ).

### 2.5 ຄຳຫຍໍ້

ຄຳທີ່ຂຽນຫຍໍ້ກໍແມ່ນການຂຽນອີກແບບໜຶ່ງຂອງອັກສອນທຳທີ່ບູຮານເຄີຍໃຊ້ຂຽນ ສ່ວນຫຼາຍມັກເຫັນຢູ່ໜັງສືຜູກໃບລານ ໂດຍທົ່ວໄປຈະມີຮູບຮ່າງແຕກຕ່າງໄປຈາກຄຳເດີມໝາຍຄວາມວ່າຂຽນຢ່າງໜຶ່ງແຕ່ອ່ານອີກຢ່າງໜຶ່ງ ທັງນີ້ອາດເນື່ອງມາຈາກຄົນລາວສະໄໝບູຮານຕ້ອງການຈະປະຫຍັດເວລາ, ແຮງງານຕະຫຼອດເຖິງສຳນວນພ້ອມດ້ວຍຂະໜາດ ແລະ ຂອບເຂດຂອງໃບລານທີ່ໃຊ້ຈານທ່ານຈຶ່ງຄິດປະດິດສັບພິເສດຂຶ້ນໃຊ້. ບາງເທື່ອກໍເພື່ອສະແດງເຖິງພູມປັນຍາຄວາມຮູ້, ຄວາມສາມາດ, ແຕ່ການຂຽນຄຳຫຍໍ້ນັ້ນກໍບໍ່ມີຫຼັກການກຳນົດຢ່າງຕາຍໂຕແລ້ວແຕ່ຄວາມສະດວກຄວາມມັກຂອງຜູ້ຂຽນເທົ່ານັ້ນ

| | | | | |
|---|---|---|---|---|
| ຕົວຢ່າງ: | ᩋᩥ | ອັນວ່າ | ᨣᩣ | ຄາຖາ |
| | ᨴᩪ | ດູຣາ | ᨣᩨ | ຊື່ວ່າ |

| | | | |
|---|---|---|---|
| [illegible] | ແລນາ | [illegible] | ນ້ຳ |
| [illegible] | ເອົາ | [illegible] | ສະເໝີ |
| [illegible] | ກໍມາ | [illegible] | ສະເໝີ |
| [illegible] | ກໍມີ | [illegible] | ຈັກ |
| [illegible] | ບໍ່ມີ | [illegible] | ຄັນວ່າ |
| [illegible] | ແລ | [illegible] | ຖະນີ |
| [illegible] | ກະທຳ | [illegible] | ມັກວ່າ |
| [illegible] | ແມ່ນວ່າ | [illegible] | ເຂົ້າຂອງ |
| [illegible] | ຜະຫຍາ | | |

ໝາຍເຫດ: ຄຳສັບຢູ່ຂ້າງເທິງນີ້ແມ່ນສ່ວນໜຶ່ງຂອງຄຳຫຍໍ້ເຊິ່ງຄຳຫຍໍ້ນີ້ຍັງມີອີກຈຳນວນຫຼວງຫຼາຍ

## ການຈັດການຮຽນ - ການສອນໂດຍໃຊ້ແບບເຝິກ

### 3.1 ຄວາມໝາຍຂອງຂອງແບບເຝິກ

ການທີ່ຈະຮຽນພາສາໃດໜຶ່ງໄດ້ດີນັ້ນສິ່ງທີ່ມີຄວາມສຳຄັນຢ່າງຍິ່ງຄືການເຝິກຝົນຈົນເກີດຄວາມຊຳນານ ແລະ ໃຫ້ຜູ້ຮຽນສາມາດໃຊ້ທັກສະທາງພາສາໄດ້ຄ່ອງແຄ້ວ ແລະ ມີປະສິດທິພາບດັ່ງທີ່ ກະມົນດິດ ກະມົນ (1966) ໄດ້ກ່າວເຖິງວິທີການສອນວິຊາທັກສະໄວ້ວ່າ:ຫົວໃຈຂອງການສອນວິຊາທັກສະຢູ່ທີ່ການເຝິກ (Drill) ເພາະການເຝິກທີ່ຖືກວິທີເທົ່ານັ້ນຈະເຮັດໃຫ້ເກີດຄວາມຊຳນານ.ທັກສະທາງດ້ານພາສາເປັນສິ່ງຈຳເປັນຈະຕ້ອງເຝິກໃຫ້ແກ່ນັກຮຽນເພື່ອໃຫ້ນັກຮຽນມີຄວາມສາມາດໃນການຕິດຕໍ່ສື່ສານເຊິ່ງເປັນຈຸດປະສົງສຳຄັນຂອງການສອນພາສາລຳດັບຂັ້ນຂອງການເຝິກທັກສະມີດັ່ງນີ້:

1. ໃຫ້ນັກຮຽນເຂົ້າໃຈວິທີການກ່ອນເຊັ່ນ:ວິທີອອກສຽງ “ ລ ” “ ດ ” ເປັນຕົ້ນ.
2. ເມື່ອແນ່ໃຈວ່ານັກຮຽນເຂົ້າໃຈວິທີການແລ້ວຈຶ່ງລົງມືເຝິກໂດຍການໃຫ້ເຮັດແບບເຝິກຫັດຫລືກິດຈະກຳເພື່ອເຝິກທັກສະທີ່ຕ້ອງການ.
3. ເຝິກເລື້ອຍໆຢ່າງສະໝ່ຳສະເໝີບໍ່ປະໄລຍະຈົນນັກຮຽນລືມ.
4. ແບບເຝິກ ຫລື ກິດຈະກຳການເຝິກທັກສະຈຳເປັນຕ້ອງເຮັດຊ້ຳໆກັນແຕ່ທັງນີ້ຄູຄວນພັດທະນາແບບເຝິກຫລືກິດຈະກຳໃຫ້ມີຫຼາກຫຼາຍຮູບຕ່າງໆກັນເພື່ອນັກຮຽນຈະໄດ້ບໍ່ເບື່ອໜ່າຍຕໍ່ການເຝິກນັ້ນໆ.
5. ຕິດຕາມຜົນເພື່ອສັງເກດເບິ່ງຄວາມກ້າວໜ້າຂອງນັກຮຽນພາຍຫຼັງການເຝິກໄປແລ້ວໃນໄລຍະເວລາໜຶ່ງການຕິດຕາມຜົນຈະຊ່ວຍໃຫ້ຄູຮູ້ວ່ານັກຮຽນຄົນໃດມີທັກສະເກີດຂຶ້ນຫລາຍນ້ອຍພຽງໃດ ແລະ ຊ່ວຍແກ້ໄຂຂໍ້ບົກຜ່ອງຂອງນັກຮຽນເປັນລາຍບຸກຄົນເຊິ່ງບໍ່ຄືກັນຢ່າປ່ອຍໃຫ້ຂໍ້ບົກຜ່ອງນ້ອຍໆຜ່ານໄປໂດຍຖືວ່າບໍ່ສຳຄັນເພາະນັກຮຽນຈະຕິດເປັນນິດໄສນອກຈາກນີ້ຍັງລວມເຖິງການເອົາໃຈໃສ່ຂອງຄູໃນການຄວບຄຸມການເຝິກຢ່າງໃກ້ຊິດບໍ່ຄວນປ່ອຍໃຫ້ເດັກໄປເຝິກກັນເອງໂດຍຄູບໍ່ກວດແບບເຝິກຫັດ.

ວັນນະພາ ໄຊຍະວັນ (2006) ໄດ້ສະຫລຸບຄວາມໝາຍຂອງແບບເຝິກໄດ້ວ່າ: ແບບເຝິກ ແມ່ນ ແບບເຝິກຫັດ ຫລື ຊຸດເຝິກທີ່ຄູຈັດໃຫ້ນັກຮຽນ ເພື່ອໃຫ້ມີທັກສະເພີ່ມຂຶ້ນຫລັງຈາກທີ່ໄດ້ຮຽນຮູ້ເລື່ອງນັ້ນໆມາແດ່ແລ້ວ ໂດຍແບບເຝິກຕ້ອງມີທິດທາງກົງຕາມຈຸດປະສົງ ປະກອບກິດຈະກຳທີ່ໜ້າສົນໃຈ ແລະ ສະໜຸກສະໜານ.

ຈາກຄວາມໝາຍຂອງແບບເຝິກດັ່ງກ່າວສາມາດສະຫຼຸບໄດ້ວ່າ: ແບບເຝິກໝາຍເຖິງສິ່ງທີ່ສ້າງຂຶ້ນເພື່ອເສີມສ້າງທັກສະໃຫ້ແກ່ນັກຮຽນ, ມີລັກສະນະເປັນແບບເຝິກຫັດໃຫ້ນັກຮຽນໄດ້ເຮັດກິດຈະກຳໂດຍມີຈຸດປະສົງ ແລະ ມີກິດຈະກຳທີ່ຫຼາກຫຼາຍເພື່ອພັດທະນາຄວາມສາມາດຂອງນັກຮຽນໃຫ້ດີຂຶ້ນ.

**3.2. ຄວາມສຳຄັນຂອງແບບເຝິກ**

ແບບເຝິກເປັນສ່ວນເພີ່ມ ຫຼື ເສີມຈາກປຶ້ມຕຳລາໃນການຮຽນ, ເປັນອຸປະກອນການສອນທີ່ຊ່ວຍລົດພາລະຂອງຄູໄດ້ຫຼາຍສົມຄວນເພາະແບບເຝິກເປັນສິ່ງປະດິດຂຶ້ນຢ່າງເປັນລະບົບ, ຊ່ວຍໃຫ້ນັກຮຽນເຝິກທັກສະໃນການໃຊ້ພາສາດີຂຶ້ນ ແລະ ຊ່ວຍເສີມທັກສະທາງພາສາໃຫ້ນັກຮຽນຈື່ຈຳໄດ້ດົນ. ນອກຈາກນີ້ແບບເຝິກຍັງເປັນເຄື່ອງມືວັດຜົນການຮຽນຫຼັງຈາກບົດຮຽນໃນແຕ່ລະຄັ້ງ.

ແບບເຝິກເປັນສື່ການຮຽນຊະນິດໜຶ່ງທີ່ປະດິດຂຶ້ນຢ່າງເປັນລະບົບ, ສາມາດພັດທະນາການຮຽນຂອງນັກຮຽນໄດ້, ເປັນປະໂຫຍດຕໍ່ການຈັດການຮຽນການສອນຄື: ເປັນເຄື່ອງມືທີ່ຊ່ວຍໃຫ້ເກີດການຮຽນຮູ້, ເປັນເຄື່ອງມືວັດຜົນ ແລະ ປະເມີນຜົນການຮຽນ, ຊ່ວຍໃຫ້ຄູຮູ້ຄວາມກ້າວໜ້າ ຫຼື ຂໍ້ບົກພ່ອງຂອງນັກຮຽນ ແລະ ຊ່ວຍໃຫ້ນັກຮຽນປະສົບຜົນສຳເລັດຂອງການຮຽນ.

ແບບເຝິກມີຄວາມສຳຄັນຕໍ່ຜູ້ຮຽນເພາະມັນເຮັດໃຫ້ຜູ້ໄດ້ທົບທວນເນື້ອຫາທີ່ຮຽນຮູ້ມາແລ້ວເພື່ອສ້າງຄວາມເຂົ້າໃຈ ແລະ ຊ່ວຍເພີ່ມທັກສະຄວາມຊຳນານ ແລະ ເຝິກຂະບວນການຄິດໃຫ້ຫຼາຍຂຶ້ນ ເຮັດໃຫ້ຄູຮູ້ຄວາມເຂົ້າໃຈຂອງນັກຮຽນທີ່ມີຕໍ່ບົດຮຽນ ເຝິກໃຫ້ເດັກມີຄວາມເຊື່ອໝັ້ນ ແລະ ສາມາດປະເມີນຜົນຂອງຕົນເອງໄດ້ ທັງຍັງຊ່ວຍຫຼຸດພາລະ ການສອນຂອງຄູ ແລະ ຊ່ວຍພັດທະນາຕາມຄວາມແຕກຕ່າງ.

**3.3. ຫຼັກການສ້າງແບບເຝິກ**

ແບບເຝິກທັກສະເປັນເຄື່ອງມື ແລະ ອຸປະກອນສຳຄັນທີ່ຈະຊ່ວຍໃຫ້ການຮຽນ - ການສອນບັນລຸຕາມຈຸດປະສົງໄດ້ຢ່າງຖືກຕ້ອງ, ວ່ອງໄວ ແລະ ມີປະສິດທິພາບໂດຍສະເພາະຢ່າງຍິ່ງໃນການຮຽນ - ການສອນທີ່ກ່ຽວກັບການເຝິກທັກສະຕ່າງໆການຂຽນເປັນການເຝິກທັກສະທາງພາສາເພາະການຮຽນແຕ່ສະເພາະໃນບົດຮຽນພຽງຢ່າງດຽວຍ່ອມບໍ່ພຽງພໍທີ່ຈະເຮັດໃຫ້ນັກຮຽນເກີດທັກສະທາງການອ່ານຄຳສັບໄດ້ຢ່າງດີຄູຈຶ່ງຕ້ອງສ້າງແລະນຳແບບເຝິກໄປໃຊ້ໃນການຮຽນ - ການສອນ. ດັ່ງນັ້ນ, ຄູຈຶ່ງຈຳເປັນຕ້ອງມີຄວາມຮູ້ຄວາມເຂົ້າໃຈກ່ຽວກັບການສ້າງແບບເຝິກເພື່ອທີ່ຈະສາມາດສ້າງແບບເຝິກທີ່ດີ ແລະ ມີປະສິດທິພາບສູງ ເໝາະສົມກັບລະດັບຄວາມຮູ້ຄວາມສາມາດຂອງນັກຮຽນມີນັກການສຶກສາ ແລະ ຜູ້ຮູ້ກ່າວເຖິງຄວາມສຳຄັນ ແລະ ສະເໜີແນະຫຼັກການສ້າງແບບເຝິກທີ່ດີໄວ້ຫຼາຍປະການສະຫຼູບໄດ້ດັ່ງນີ້:

ກໍ່ສະຫວັດພານິດ (1971 ) ສະເໜີແນວຄິດກ່ຽວກັບການສ້າງແບບເຝິກທັກສະໄວ້ວ່າຄູຜູ້ສອນຕ້ອງຄຳນຶງເຖິງສິ່ງຕ່າງໆດັ່ງຕໍ່ໄປນີ້:

1. ຄູຕ້ອງກຽມແບບເຝິກວ່າຈະໃຊ້ແບບເຝິກແບບໃດ ແລະ ແບບເຝິກນັ້ນໆຈະຊ່ວຍເຝິກທັກສະທາງພາສາຈົນເດັກສາມາດນຳທັກສະທີ່ເຝິກນັ້ນໄປໃຊ້ໃນຊີວິດປະຈຳວັນໄດ້ ຫຼື ບໍ່ຢ່າງໃດ.

2. ໃຊ້ແບບເຝິກສັ້ນແຕ່ຫຼາຍແບບເພື່ອເຝິກທັກສະໃນເລື່ອງດຽວກັນເດັກຈະບໍ່ເບື່ອແຕ່ເກີດຄວາມສະໜຸກສະໜານ ແລະ ມີຄວາມແມ່ນຍຳໃນເລື່ອງທີ່ຈະເຝິກ.

3. ເຝິກສະພາບການທີ່ແຕກຕ່າງກັນເຊັ່ນ: ຈັບຄູ່ຫົວໃຈ,ເກັບໝາກໄມ້ ແລະ ອື່ນໆ.

4. ການປະເມີນຜົນນັ້ນຕ້ອງປະເມີນເພື່ອເບິ່ງຄວາມກ້າວໜ້າຂອງເດັກ ແລະ ເພື່ອປະເມີນຄ່າແບບເຝິກວ່າຈະຊ່ວຍໃຫ້ເດັກກ້າວໜ້າພຽງໃດຖ້າເດັກບໍ່ມີຄວາມກ້າວໜ້າຄູຕ້ອງສົນໃຈທີ່ຈະຄົ້ນຫາສາເຫດວ່າເປັນເພາະຫຍັງ.

5. ການປະເມີນຜົນນັ້ນບໍ່ຄວນນຳເດັກໄປປຽບທຽບກັບກຸ່ມແຕ່ຄວນໃຫ້ເດັກໄດ້ປຽບທຽບກັບຕົນເອງ.

ນິພາເລັກບຳລຸງ (1975) ໄດ້ກ່າວເຖິງຫຼັກການໃຫ້ແບບເຝິກແກ່ນັກຮຽນໄວ້ວ່າຄູຄວນມີຫຼັກໃນການໃຫ້ແບບເຝິກເພື່ອໃຫ້ເກີດປະໂຫຍດແກ່ນັກຮຽນດັ່ງນີ້:

1. ແບບເຝິກຕ້ອງແຈ່ມແຈ້ງ ແລະ ແນ່ນອນຄູຕ້ອງອະທິບາຍວິທີເຮັດຢ່າງຊັດເຈນໃຫ້ນັກຮຽນເຂົ້າໃຈຖືກຕ້ອງ ແລະ ກຳນົດຂອບເຂດໃຫ້ແນ່ນອນບໍ່ກວ້າງຂວາງເກີນໄປ.

2. ໃຊ້ພາສາທີ່ເຂົ້າໃຈງ່າຍເໝາະກັບໄວ ແລະ ພື້ນຖານຄວາມຮູ້ຂອງນັກຮຽນ.

3. ແບບເຝິກຄວນເປັນເລື່ອງທີ່ນັກຮຽນໄດ້ຮຽນມາແລ້ວເພາະຄວາມຮູ້ ຫຼື ປະສົບການເດີມຍ່ອມເປັນຮາກຖານ ຫຼື ປະສົບການທີ່ຊ່ວຍໃຫ້ນັກຮຽນເຂົ້າໃຈໄດ້ງ່າຍແລະສະດວກຂຶ້ນ.

4. ຊີ້ແຈງໃຫ້ນັກຮຽນເຂົ້າໃຈເຖິງຄວາມສຳຄັນຂອງແບບເຝິກເພື່ອໃຫ້ນັກຮຽນເຫັນຄຸນຄ່າອັນເປັນເຄື່ອງດຶງດູດຈິດໃຈໃຫ້ນັກຮຽນເຮັດສຳເລັດລຸລ່ວງໄປດ້ວຍດີ.

5. ຄູຕ້ອງສ້າງຄວາມສົນໃຈຂອງນັກຮຽນໃຫ້ມີຕໍ່ແບບເຝິກທັກສະ.

6. ຄູຄວນເປັນຜູ້ຕັ້ງບັນຫາຂຶ້ນ ແລະ ບັນຫານັ້ນບໍ່ຍາກເກີນຄວາມສົນໃຈຂອງນັກຮຽນແຕ່ກະຕຸ້ນໃຈໃຫ້ຢາກຮູ້ຢາກເຫັນ ແລະ ຍົວະໃຫ້ນັກຮຽນແກ້ບັນຫາ.

7. ການໃຫ້ນັກຮຽນຮູ້ເຄົ້າໂຄງເສຍກ່ອນຈະເປັນເຄື່ອງກະຕຸ້ນໃຈນັກຮຽນໃຫ້ເຮັດຕໍ່ໄປຈົນສຳເລັດ.

8. ເນື່ອງຈາກນັກຮຽນແຕ່ລະຄົນມີຄວາມແຕກຕ່າງກັນແບບເຝິກທັກສະທີ່ກຳນົດສຳລັບນັກຮຽນເກັ່ງນັກຮຽນປານກາງ ແລະ ນັກຮຽນອ່ອນນັ້ນຄວນຍາກງ່າຍຕ່າງກັນແຕ່ຖ້າໃຫ້ແບບເຝິກຢ່າງດຽວກັນກໍຄວນຈະພິຈາລະນາດ້ານຄຸນນະພາບຂອງແບບເຝິກທັກສະໃຫ້ແຕກຕ່າງກັນຫຼືໃຫ້ເດັກທີ່ຮຽນອ່ອນມີເວລາຫລາຍກວ່າ.

### 3.4. ລັກສະນະຂອງແບບເຝິກທີ່ດີ

ໃນການສ້າງແບບເຝິກສຳລັບນັກຮຽນມີອົງປະກອບຫຼາຍປະການ ເຊິ່ງນັກການສຶກສາຫຼາຍທ່ານໄດ້ໃຫ້ຂໍ້ສະເໜີແນະກ່ຽວກັບລັກສະນະຂອງແບບເຝິກທີ່ດີ ໄວ້ດັ່ງນີ້:

ສຸພອນລະນີ ໄຊເທບ ( 2001 ) ໄດ້ກ່າວເຖິ່ງລັກສະນະຂອງແບບເຝິກທີ່ດີໄວ້ຄື:

1. ຕ້ອງມີຄວາມຊັດເຈນທັງຄຳຖາມ, ຄຳຊີ້ແຈງ, ຄຳສັ່ງ ແລະ ງ່າຍຕໍ່ຄວາມເຂົ້າໃຈຂອງນັກຮຽນ.
2. ຖືກຕ້ອງກັບຈຸດປະສົງທີ່ຕ້ອງການວັດ
3. ມີພາສາ ແລະ ຮູບພາບທີ່ດຶງດູດຄວາມສົນໃຈຂອງນັກຮຽນ ແລະ ເໝາະສົມກັບໄວຂອງນັກຮຽນ
4. ແບບເຝິກແຕ່ລະເລື່ອງບໍ່ຄວນຍາວເກີນໄປ
5. ຄວນມີກິດຈະກຳຫຼາຍຮູບແບບເພື່ອບໍ່ເຮັດໃຫ້ນັກຮຽນເບື່ອ.
6. ຄວນຕອບສະໜອງກັບຄວາມສົນໃຈຂອງຜູ້ຮຽນ ເພື່ອສ້າງຄວາມເພີດເພີນໃນຂະນະທີ່ເຮັດແບບເຝິກ.
7. ມີຄຳຕອບທີ່ຊັດເຈນ.
8. ແບບເຝິກທີ່ດີສາມາດປະເມີນຄວາມກ້າວໜ້າ ແລະ ຄວາມຮູ້ຂອງນັກຮຽນໄດ້.

ສະທອນ ສຸດທິແພດ (1975) ໄດ້ສຶກສາພົບວ່າ: ແບບເຝິກທີ່ນັກຮຽນສົນໃຈ ແລະ ກະຕືລືລົ້ນທີ່ຈະເຮັດເປັນແບບເຝິກທີ່ມີລັກສະນະດັ່ງນີ້:

1. ໃຊ້ຫຼັກຈິດວິທະຍາ
2. ໃຊ້ສຳນວນພາສາງ່າຍ
3. ໃຫ້ຄວາມໝາຍຕໍ່ຊີວິດ
4. ຄິດໄດ້ໄວ ແລະ ສະໜຸກ
5. ປຸກຄວາມສົນໃຈ
6. ເໝາະກັບໄວ ແລະ ຄວາມສາມາດ
7. ອາດສຶກສາດ້ວຍຕົນເອງ

ນິຕະຍາ ລິດໂຍທີ (1977) ກ່າວເຖິງລັກສະນະຂອງແບບເຝິກທີ່ດີໄວ້ດັ່ງນີ້:

1. ກ່ຽວຂ້ອງກັບບົດຮຽນທີ່ຮຽນມາແລ້ວ

2. ເໝາະສົມກັບລະດັບໄວຫຼືຄວາມສາມາດຂອງນັກຮຽນ

3. ມີຄຳຊີ້ແຈ້ງສັ້ນໆທີ່ເຮັດໃຫ້ນັກຮຽນເຂົ້າໃຈວິທີເຮັດໄດ້ງ່າຍ

4. ໃຊ້ເວລາເໝາະສົມຄື:ບໍ່ໃຊ້ເວລາດົນ ຫຼື ໄວເກີນໄປ

5. ເປັນສິ່ງທີ່ໜ້າສົນໃຈ ແລະ ທ້າທາຍໃຫ້ສະແດງຄວາມສາມາດ.

ຮານເລດສ໌ (Halress 1992)ໄດ້ກ່າວເຖິງລັກສະນະຂອງແບບເຝິກທີ່ດີໄວ້ວ່າ: ການຂຽນແບບເຝິກຕ້ອງແນ່ນອນໃນພາສາທີ່ໃຊ້ໃຫ້ເໝາະສົມກັບນັກຮຽນ ແລະ ຄວນສ້າງໂດຍໃຊ້ຫຼັກຈິດວິທະຍາໃນການແກ້ ແລະ ສະໜອງຄຳຕອບ ດັ່ງນີ້:

1. ໃຊ້ແບບເຝິກຫຼາຍໆຊະນິດ ເພື່ອກະຕຸ້ນໃຫ້ນັກຮຽນເກີດຄວາມສົນໃຈ.

2. ແບບເຝິກທີ່ຈັດເຮັດຂຶ້ນນັ້ນ ຕ້ອງໃຫ້ນັກຮຽນສາມາດແຍກອອກມາພິຈາລະນາໄດ້ວ່າແຕ່ລະແບບແຕ່ລະຂໍ້ຕ້ອງການເຮັດຫຍັງ.

3. ໃຫ້ນັກຮຽນໄດ້ເຝິກການຕອບແບບເຝິກແຕ່ລະຊະນິດແຕ່ລະຮູບແບບວ່າມີວິທີການຕອບແນວໃດ.

4. ນັກຮຽນໄດ້ມີໂອກາດສະໜອງຕອບຕໍ່ສິ່ງກະຕຸ້ນດ້ວຍການສະແດງອອກທາງຄວາມສາມາດແລະ ຄວາມເຂົ້າໃຈລົງໃນແບບເຝິກ.

5. ນັກຮຽນນຳສິ່ງທີ່ຮຽນຮູ້ຈາກບົດຮຽນ ມາຕອບໃນແບບເຝິກຫັດກົງເປົ້າໝາຍທີ່ສຸດ.

ດວງເດືອນ ອ່ອນນ່ວມ ແລະຄົນອື່ນ ໆ ( 1993) ຍັງໄດ້ສະເໜີແນະລັກສະນະຂອງແບບເຝິກຫັດທີ່ດີດັ່ງນີ້:

1. ແບບເຝິກຫັດທີ່ດີ ຄວນມີຄວາມຊັດເຈນທັງຄຳສັ່ງ ແລະ ວິທີເຮັດ ຄຳສັ່ງ ຫຼື ຕົວຢ່າງບໍ່ຄວນຍາວເກີນໄປເພາະຈະເຮັດໃຫ້ເຂົ້າໃຈຍາກ ຄວນປັບໃຫ້ງ່າຍເໝາະສົມກັບຜູ້ໃຊ້ ທັງນີ້ເພື່ອໃຫ້ນັກຮຽນສາມາດສຶກສາໄດ້ດ້ວຍຕົນເອງຖ້າຕ້ອງການ.

2. ແບບເຝິກຫັດທີ່ດີ ຄວນມີຄວາມໝາຍຕໍ່ຜູ້ຮຽນ ແລະ ກົງຕາມຈຸດປະສົງຂອງການເຝິກ ລົງທຶນນ້ອຍ ໃຊ້ໄດ້ດົນ ແລະ ທັນສະໄໝຢູ່ສະເໝີ.

3. ພາສາ ແລະ ພາບທີ່ໃຊ້ໃນແບບເຝິກຫັດ ຄວນເໝາະສົມກັບໄວ ແລະ ພື້ນຖານຄວາມຮູ້ຂອງຜູ້ຮຽນ.

4. ແບບເຝິກຫັດທີ່ດີ ຄວນແຍກເຝິກເປັນເລື່ອງໆແຕ່ລະເລື່ອງບໍ່ຄວນຍາວເກີນໄປ ແຕ່ຄວນມີກິດຈະກຳຫຼາຍຮູບແບບ ເພື່ອກະຕຸ້ນໃຫ້ນັກຮຽນເກີດຄວາມສົນໃຈ ແລະ ບໍ່ເບື່ອໜ່າຍໃນການເຮັດ ແລະ ເພື່ອເຝິກທັກສະໃດທັກສະໜຶ່ງຈົນເກີດຄວາມຊຳນານ.

5. ແບບເຝິກຫັດທີ່ດີ ຄວນມີທັງທີ່ກຳນົດຄຳຕອບໃຫ້ ແລະ ແບບໃຫ້ຕອບໂດຍເສລີການເລືອກໃຊ້ຄຳຂໍ້ຄວາມ ຫລື ຮູບພາບໃນແບບເຝິກຫັດ ຄວນເປັນສິ່ງທີ່ນັກຮຽນຄຸ້ນເຄີຍ ແລະ ກົງກັບຄວາມສົນໃຈຂອງນັກຮຽນເພາະວ່າແບບເຝິກຫັດທີ່ສ້າງຂຶ້ນຈະໄດ້ກໍ່ໃຫ້ເກີດຄວາມເພີດເພີນ ແລະ ຄວາມພໍໃຈແກ່ຜູ້ໃຊ້ເຊິ່ງກົງກັບຫຼັກການຮຽນຮູ້ທີ່ວ່ານັກຮຽນມັກຈະຮຽນຮູ້ໄດ້ໄວໃນການກະທຳທີ່ກໍ່ໃຫ້ເກີດຄວາມພຶງພໍໃຈ.

6. ແບບເຝິກຫັດທີ່ດີ ຄວນເປີດໂອກາດໃຫ້ຜູ້ຮຽນໄດ້ສຶກສາດ້ວຍຕົນເອງ ໃຫ້ຮູ້ຈັກຄົ້ນຄວ້າລວບລວມສິ່ງທີ່ພົບເຫັນເລື້ອຍໆ ຫຼື ທີ່ຕົວເອງເຄີຍໃຊ້ ຈະເຮັດໃຫ້ນັກຮຽນເຂົ້າໃຈໃນເລື່ອງນັ້ນໆຫລາຍຍິ່ງຂຶ້ນ ແລະຈະຮູ້ຈັກນຳໄປໃຊ້ປະໂຫຍດໃນຊີວິດປະຈຳວັນໄດ້ຢ່າງຖືກຕ້ອງ ມີຫຼັກເກນ ແລະ ເບິ່ງເຫັນວ່າສິ່ງທີ່ພວກເຂົາໄດ້ເຝິກຝົນນັ້ນມີຄວາມຄວາມໝາຍຕໍ່ພວກເຂົາຕະຫຼອດໄປ.

7. ແບບເຝິກຫັດທີ່ດີ ຕ້ອງມີຜົນຕອບສະໜອງຄວາມແຕກຕ່າງລະຫວ່າງບຸກຄົນ ຜູ້ຮຽນແຕ່ລະຄົນມີຄວາມແຕກຕ່າງກັນໃນຫຼາຍໆດ້ານ ສະນັ້ນການເຮັດແບບເຝິກຫັດແຕ່ລະເລື່ອງຄວນຈັດເຮັດໃຫ້ຫຼາຍພໍ ແລະ ມີທຸກລະດັບຕັ້ງແຕ່ງ່າຍ ປານກາງ ຈົນເຖິງລະດັບຄ່ອນຂ້າງຍາກ ເພື່ອເຮັດໃຫ້ທັງເດັກເກັ່ງ, ປານກາງ ແລະ ເດັກອ່ອນ ຈະໄດ້ເຮັດຕາມຄວາມສາມາດ ທັງນີ້ເພື່ອໃຫ້ເດັກທຸກຄົນໄດ້ປະສົບຄວາມສຳເລັດໃນການເຮັດແບບເຝິກຫັດ.

8. ແບບເຝິກຫັດທີ່ດີ ຄວນກະຕຸ້ນຄວາມສົນໃຈຂອງນັກຮຽນຕັ້ງແຕ່ກິດຈະກຳແຮກຈົນເຖິງກິດຈະກຳສຸດທ້າຍ.

9. ແບບເຝິກຫັດທີ່ດີ ຄວນໄດ້ຮັບການປັບປຸງຄວບຄູ່ໄປກັບແບບຮຽນຢູ່ສະເໝີ ແລະ ຄວນໃຊ້ໄດ້ດີທັງໃນ ແລະ ນອກຫ້ອງຮຽນ.

10. ແບບເຝິກຫັດທີ່ດີ ຄວນເປັນແບບເຝິກທີ່ສາມາດປະເມີນ ແລະ ຈຳແນກຄວາມຈະເລີນງອກງາມຂອງເດັກໄດ້ງ່າຍ.

ຈາກແນວຄວາມຄິດທີ່ກ່າວມານັ້ນ ສະຫລຸບໄດ້ວ່າ: ລັກສະນະຂອງແບບເຝິກທີ່ດີ ຄວນເປັນແບບເຝິກທີ່ມີພາບປະກອບ ດຶງດູດຄວາມສົນໃຈຂອງນັກຮຽນຕັ້ງແຕ່ກິດຈະກຳແຮກຈົນເຖິງກິດຈະກຳສຸດທ້າຍ ຕ້ອງມີຄວາມຊັດເຈນທັງຄຳສັ່ງ ແລະ ວິທີເຮັດ ມີຫລາຍຮູບແບບ ລຽງລຳດັບຈາກງ່າຍໄປຫາຍາກ ເຝິກພຽງເລື່ອງດຽວໃນແບບເຝິກນັ້ນໆ ຄວນເປີດໂອກາດໃຫ້ນັກຮຽນໄດ້ສະແດງອອກເຊິ່ງກະບວນການຄິດດ້ວຍຕົນເອງ ສະໜຸກສະໜານເພີດເພີນເຝິກທັກສະຈົນເກີດຄວາມຊຳນານ ແລະ ສາມາດນຳໄປໃຊ້ໄດ້ໃນຫຼາຍໆສະຖານນະການ.

### 3.5. ປະໂຫຍດຂອງແບບເຝິກ

ແບບເຝິກທັກສະມີປະໂຫຍດຕໍ່ການຮຽນວິຊາທັກສະຫຼາຍເພັດຕີ້ (Petty 1963 ) ອ້າງເຖິງໃນ ສຸຕິຕາ ຄົງດ້ວງ 2006) ໄດ້ກ່າວໄວ້ດັ່ງນີ້:

1. ແບບເຝິກທັກສະເປັນສ່ວນທີ່ເພີ່ມຫລືເສີມແບບຮຽນເປັນອຸປະກອນການສອນທີ່ຊ່ວຍຫຼຸດພາລະຂອງຄູໄດ້ຫຼາຍເພາະແບບເຝິກເປັນສິ່ງທີ່ຈັດເຮັດຂຶ້ນຢ່າງເປັນລະບົບລະບຽບ.

1. ແບບເຝິກທັກສະຊ່ວຍເສີມທັກສະການໃຊ້ພາສາເປັນເຄື່ອງມືທີ່ຊ່ວຍໃຫ້ເດັກເຝິກທັກສະການໃຊ້ພາສາໄດ້ດີຂຶ້ນແຕ່ຕ້ອງອາໄສການສົ່ງເສີມ ແລະ ຄວາມເອົາໃຈໃສ່ຈາກຄູຜູ້ສອນ.

3. ຊ່ວຍໃນເລື່ອງຄວາມແຕກຕ່າງລະຫວ່າງບຸກຄົນເນື່ອງຈາກນັກຮຽນມີຄວາມສາມາດທາງພາສາແຕກຕ່າງກັນການໃຫ້ນັກຮຽນເຮັດແບບເຝິກທັກສະທີ່ເໝາະສົມກັບຄວາມສາມາດຂອງພວກເຂົາຈະຊ່ວຍໃຫ້ເດັກປະສົບຜົນສຳເລັດໃນດ້ານຈິດໃຈຫລາຍຂຶ້ນ.

4. ແບບເຝິກທັກສະຊ່ວຍເສີມໃຫ້ທັກສະທາງພາສາຄົງທົນໂດຍກະທຳດັ່ງນີ້:

4.1 ເຝິກທ່ອງທັນພາຍຫຼັງຈາກທີ່ນັກຮຽນໄດ້ຮຽນຮູ້ເລື່ອງນັ້ນໆ

4.2 ເຝິກຊ້ຳຫຼາຍໆເທື່ອ

4.3 ເນັ້ນສະເພາະເລື່ອງທີ່ຕ້ອງການເຝິກ

5. ແບບເຝິກທັກສະທີ່ຈະໃຊ້ເຄື່ອງມືວັດຜົນການຮຽນຫຼັງຈາກຈົບບົດຮຽນໃນແຕ່ລະເທື່ອ.

6. ແບບເຝິກທັກສະທີ່ເຮັດຂຶ້ນເປັນຮູບເຫຼັ້ມນັກຮຽນສາມາດເກັບຮັກສາໄວ້ໃຊ້ເປັນແນວທາງເພື່ອທົບທວນດ້ວຍຕົນເອງໄດ້ຕໍ່ໄປ.

7. ການໃຫ້ເດັກເຮັດແບບເຝິກທັກສະຊ່ວຍເຮັດໃຫ້ຄູເຫັນຈຸດເດັ່ນຫຼືບັນຫາຕ່າງໆຂອງນັກຮຽນໄດ້ຊັດເຈນເຊິ່ງຈະຊ່ວຍໃຫ້ຄູດຳເນີນການປັບປຸງແກ້ໄຂບັນຫານັ້ນໆໄດ້ທັນທີ.

8. ແບບເຝິກທັກສະທີ່ຈັດຂຶ້ນນອກເໜືອຈາກທີ່ຢູ່ໃນໜັງສືແບບຮຽນຈະຊ່ວຍໃຫ້ເດັກໄດ້ເຝິກຝົນຢ່າງເຕັມທີ່.

9. ແບບເຝິກທັກສະທີ່ຈັດພິມໄວ້ຮຽບຮ້ອຍຈະຊ່ວຍໃຫ້ປະຢັດທັງແຮງງານ ແລະ ເວລາໃນການທີ່ຈະຕ້ອງກຽມສ້າງແບບເຝິກທັກສະຢູ່ສະເໝີໃນດ້ານຜູ້ຮຽນກໍບໍ່ຕ້ອງເສຍເວລາລອກແບບເຝິກທັກສະຈາກຕຳລາຮຽນເຮັດໃຫ້ມີໂອກາດໄດ້ເຝິກຝົນທັກສະຕ່າງໆຫຼາຍຂຶ້ນ.

10. ແບບເຝິກທັກສະຊ່ວຍປະຢັດຄ່າໃຊ້ຈ່າຍ ແລະ ຜູ້ຮຽນສາມາດບັນທຶກ ແລະ ເຫັນຄວາມກ້າວໜ້າຂອງຕົນເອງໄດ້ຢ່າງມີລະບົບ ແລະ ເປັນລະບຽບ.

ວິລະ ໄທພານິດ ( 1985 ) ໄດ້ກ່າວເຖິງປະໂຫຍດຂອງການໃຊ້ແບບເຝິກໄວ້ວ່າ: ແບບເຝິກເປັນເຄື່ອງມືທີ່ຈະຊ່ວຍໃຫ້ເກີດການຮຽນຮູ້ ທີ່ເກີດຈາກການກະທຳຈິງເປັນປະສົບການກົງທີ່ຜູ້ຮຽນມີຈຸດມຸ້ງໝາຍທີ່ແນ່ນອນ ເຮັດໃຫ້ນັກຮຽນເຫັນຄຸນຄ່າຂອງສິ່ງທີ່ຮຽນ ສາມາດຮຽນຮູ້ແລະຈົດຈຳສິ່ງທີ່ຮຽນໄດ້ດີ ແລະນຳການຮຽນຮູ້ນັ້ນໄປໃຊ້ໃນສະຖານນະການເຊັ່ນດຽວກັນໄດ້ຈາກຂໍ້ຄວາມທີ່ກ່າວຂ້າງຕົ້ນ ສະຫລຸບໄດ້ວ່າ: ແບບເຝິກມີປະໂຫຍດຕໍ່ນັກຮຽນຢ່າງຍິ່ງ ເປັນເຄື່ອງມືຊ່ວຍໃຫ້ນັກຮຽນເກີດການຮຽນຮູ້ໄດ້ໄວຂຶ້ນ ແລະເຮັດໃຫ້ນັກຮຽນເກີດທັກສະ ມີຄວາມຊຳນານເກີດຄວາມເຊື່ອໝັ້ນ ຄວາມເຂົ້າໃຈ ກໍ່ໃຫ້ເກີດກຳລັງໃຈແລະສິ່ງຜົນໃຫ້ນັກຮຽນມີຄວາມສຳເລັດໃນການຮຽນຮູ້ໄດ້ອີກດ້ວຍ.

ຈາກເອກະສານທີ່ກ່ຽວຂ້ອງກັບແບບເຝິກທັກສະດັ່ງກ່າວສະຫຼຸບໄດ້ວ່າ:ແບບເຝິກເປັນສື່ທີ່ຈຳເປັນຕໍ່ການເຝິກທັກສະການອ່ານຂອງນັກຮຽນ ເພາະວ່າການເຝິກອ່ານເລື້ອຍໆຈະຊ່ວຍໃຫ້ນັກຮຽນມີຄວາມຊຳນິຊຳນານ,ອ່ານໄດ້ຄ່ອງແຄວ ແລະ  ມີການພັດທະນາທາງດ້ານສະຕິປັນຍາ, ອາລົມ, ສັງຄົມ ພ້ອມນັ້ນແບບເຝິກທີ່ດີຍັງມີປະໂຫຍດຕໍ່ການສິດສອນຂອງຄູທີ່ສາມາດປັບປຸງການຈັດກິດຈະກຳການຮຽນ - ການສອນໃຫ້ດີຂຶ້ນ ເຮັດໃຫ້ຜູ້ຮຽນປະສົບຜົນສຳເລັດທາງການຮຽນສູງຂຶ້ນ.

## ການວັດ ແລະ ປະເມີນຜົນ

### 1. ຄວາມໝາຍຂອງການວັດ ແລະ ປະເມີນຜົນ

#### 1.1 ຄວາມໝາຍຂອງການວັດຜົນ

ການວັດຜົນແມ່ນຂະບວນການຊອກຫາປະລິມານ ຫຼື ຈຳນວນຂອງວັດຖຸສິ່ງຂອງ, ເຫດການ, ປະກົດການ ຫຼື ພຶດຕິກຳຕ່າງໆໂດຍໃຊ້ເຄື່ອງມືຢ່າງໃດຢ່າງໜຶ່ງມາວັດ ຜົນຂອງການວັດຜົນມັກຈະອອກມາເປັນຕົວເລກ ສັນຍາລັກ ຫຼື ຂໍ້ມູນເຊັ່ນ:

- ທ້າວ ວັນ  ສູງ 150 ຊມ ( ເຄື່ອງມື ແມ່ນໄມ້ແມັດຫຼືເຄື່ອງວັດແທກລວງສູງ)
- ປູມສອບນີ້ ໜັກ 20 ກິໂລ ( ເຄື່ອງມື ແມ່ນຊິງຕິດຊັ່ງ)
- ທ້າວ ທະນັນໄຊ ສອບເສັງຍ່ອຍໄດ້ 10 ຄະແນນ ( ເຄື່ອງມືວັດແມ່ນແບບທົດສອບ)
- ນາງ ສຸພັດຕາ  ເລືອກຊື້ເສື້ອແຂນຍາວ ( ເຄື່ອງມື ແມ່ນການສັງເກດ)

ຖ້າຄູສອບຖາມນັກຮຽນກ່ຽວກັບຂໍ້ມູນສ່ວນຕົວກໍ່ແມ່ນການວັດຄືກັນເຊິ່ງຮຽກເຄື່ອງມືຊະນິດນີ້ວ່າ : ການສຳພາດ ຫລື ຄູສ້າງແບບຟອມແລ້ວແຈກໃຫ້ນັກຮຽນຕື່ມຂໍ້ມູນຕາມທີ່ຄູຕ້ອງການກໍ່ແມ່ນການວັດຜົນ ເຊິ່ງຮຽກວ່າ: ແບບສອບຖາມ.

ເນື່ອງຈາກເຄື່ອງມືທີ່ໃຊ້ໃນການວັດຜົນມີຫຼາກຫຼາຍຊະນິດ ເພາະຄົນມີຄວາມຢາກຮູ້ຢາກເຫັນໃນສິ່ງຕ່າງໆຫຼາກຫຼາຍບໍ່ຄືກັນ ຈິ່ງໄດ້ຄິດສ້າງເຄື່ອງມືຂຶ້ນມາວັດໃນຮູບແບບຫຼືສະຖານະການຕ່າງໆຕາມທີ່ຕ້ອງການ ບາງຄັ້ງກໍ່ວັດໃນສິ່ງທີ່ມີຮູບຮ່າງ ຕົນໂຕ ບາງຄັ້ງກໍ່ວັດໃນສິ່ງທີ່ເປັນນາມມະທຳ ດັ່ງນັ້ນຈິ່ງແບ່ງການວັດອອກເປັນ 2 ດ້ານຄື :

1. ການວັດດ້ານວິທະຍາສາດ ຫຼື ດ້ານກາຍະພາບ ແມ່ນ ການວັດກ່ຽວກັບຮູບຮ່າງ, ລັກສະນະຂອງວັດຖຸສິ່ງຂອງ,ສິ່ງມີຊີວິດ, ເຫດການ,ປະກົດການຕ່າງໆເຊັ່ນ : ການວັດແທກຄວາມຍາວ, ນ້ຳໜັກ, ລວງສູງ, ອຸນຫະພູມ, ເວລາ ແລະອື່ນໆ

2. ການວັດດ້ານການສຶກສາ ຫຼື ດ້ານຈິດຕະວິທະຍາ ແມ່ນການວັດກ່ຽວກັບສິ່ງທີ່ເປັນນາມມະທຳ ບໍ່ມີໂຕຕົນ ໂດຍວັດກ່ຽວກັບພຶດຕິກຳຂອງຄົນເທົ່ານັ້ນ ໃນດ້ານນີ້ຖ້າຍຶດຫຼັກການຂອງບລູມ (Bloom)ແລະຄະນະ ເຊິ່ງແບ່ງພຶດຕິກຳທີ່ຈະວັດອອກເປັນ 3 ລັກສະນະຄື :

1). ວັດພຶດຕິກຳດ້ານພຸດທິພິໄສ (Cognitive Domain) ແມ່ນວັດກ່ຽວກັບຄວາມຮູ້ ຄວາມຄິດ ( ວັດດ້ານສະໝອງ ).

2). ວັດພຶດຕິກຳດ້ານຈິດພິໄສ (Affective Domain) ແມ່ນການວັດກ່ຽວກັບຄວາມຮູ້ສຶກນຶກຄິດ ( ວັດດ້ານຈິດໃຈ).

3). ວັດພຶດຕິກຳດ້ານທັກສະພິໄສ (Psychomotor Domain) ແມ່ນການວັດກ່ຽວກັບການໃຊ້ກ້າມຊີ້ນ ແລະ ປະສາດສຳພາດສ່ວນຕ່າງໆຂອງຮ່າງກາຍ ( ວັດດ້ານການປະຕິບັດ).

ການວັດຜົນການສຶກສາ ໝາຍເຖິງຂະບວນການຊອກຫາປະລິມານຄວາມສາມາດກ່ຽວກັບພຶດຕິກຳທີ່ຕ້ອງການຈາກການຮຽນການສອນໂດຍໃຊ້ເຄື່ອງມືທາງການສຶກສາຢ່າງໃດຢ່າງໜຶ່ງມາວັດເຊິ່ງຜົນຈະອອກມາເປັນຈຳນວນ(ຄະແນນ) ຫຼືສັນຍາລັກ ຫຼື ຂໍ້ມູນ.

**1.2 ຄວາມໝາຍຂອງການປະເມີນຜົນ**

ການປະເມີນຜົນ ໝາຍເຖິງການຕັດສິນ ຫຼືພິຈາລະນາໄຕ່ຕອງສິ່ງຕ່າງໆ ທີ່ໄດ້ຈາກການວັດຜົນໂດຍປຽບທຽບກັບເກນຢ່າງໃດຢ່າງໜຶ່ງທີ່ກຳນົດໄວ້ ເຊັ່ນ: ຜົນຈາກການວັດລວງສູງຂອງ ທ້າວ ວັນ ໄດ້ 150 ຊມ ກໍ່ອາດຈະປະເມີນວ່າເປັນຄົນບໍ່ສູງປານໃດ.

ການປະເມີນຜົນການສຶກສາ ໝາຍເຖິງການຕັດສິນ ຫຼື ພິຈາລະນາໄຕ່ຕອງສິ່ງຕ່າງໆ ທີ່ໄດ້ຈາກການວັດຜົນການສຶກສາໂດຍປຽບທຽບກັບເກນຢ່າງໃດຢ່າງໜຶ່ງທີ່ກຳນົດໄວ້ ເຊັ່ນ: ຜົນຈາກການວັດຜົນການສຶກສາ ທ້າວ ທະນັນໄຊ ສອບເສັງຍ່ອຍໄດ້ 10 ຄະແນນ ເກນຜ່ານຕ້ອງມີຄະແນນ 7 ຂຶ້ນໄປ ເຮົາສາມາດປະເມີນວ່າ ທ້າວ ທະນັນໄຊ ສອບຜ່ານເກນ.

**ຕາຕະລາງ 2.2: ປຽບທຽບລະຫວ່າງການວັດຜົນແລະການປະເມີນຜົນ**

| ການວັດຜົນ | ການປະເມີນຜົນ |
|---|---|
| 1. ເປັນການກຳນົດລາຍລະອຽດ, ຈຳນວນ ຫຼືປະລິມານ<br>2. ປະຕິບັດຢ່າງລະອຽດແຕ່ລະດ້ານ<br>3. ໃຊ້ເຄື່ອງມືເປັນຫຼັກ<br>4. ຜົນທີ່ໄດ້ເປັນຂໍ້ມູນລາຍລະອຽດ<br>5. ອາໄສວິທີການທາງວິທະສາດ | 1. ເປັນການກຳນົດລະດັບຄຸນຄ່າ ຕັດສິນລົງຂໍ້ສະຫຼຸບ<br>2. ສະຫຼຸບລວມເປັນຂໍ້ຊີ້ຂາດຫຼືຕັດສິນ<br>3. ໃຊ້ຜົນການວັດເປັນຫຼັກໂດຍພິຈາລະນາຕາມເກນທີ່ກຳນົດໄວ້<br>4. ຜົນທີ່ໄດ້ເປັນການຕັດສິນໃຈ<br>5. ອາໄສການພິຈາລະນາໄຕ່ຕອງ |

**2. ການຂຽນຂໍ້ສອບອັດຕະໄນ ແລະ ປາລະໄນ**

**2.1 ການຂຽນຂໍ້ສອບແບບອັດຕະໄນ**

ແບບທົດສອບຂຽນຕອບແບບອັດຕະໄນເປັນແບບທົດສອບທີ່ເປີດໂອກາດໃຫ້ຜູ້ຕອບສາມາດສະແດງອອກໂດຍໃຊ້ພາສາຂອງຕົນເອງ

ແບບທົດສອບຂຽນຕອບແບ່ງອອກເປັນ 2 ຊະນິດຄື:

**2.1.1 ແບບບໍ່ຈຳກັດຄຳຕອບ ( unstricted-response type )**

ແບບທົດສອບລັກສະນະນີ້ເປີດໂອກາດໃຫ້ຜູ້ຕອບໄດ້ສະແດງຄວາມຄິດເຫັນຢ່າງເຕັມທີ່ ເຮັດໃຫ້ຜູ້ສອບເກີດຄວາມຄິດລິເລີ່ມສ້າງສັນ

<u>ຕົວຢ່າງ:</u>

- ຈົ່ງສະແດງຄວາມຄິດເຫັນກ່ຽວກັບບັນຫາການສິ່ງເສບຕິດທີ່ກຳລັງແຜລາມຕໍ່ໄວໜຸ່ມລາວ?
- ການຕັດໄມ້ທຳລາຍປ່າມີຜົນກະທົບແນວໃດຕໍ່ການພັດທະນາເສດຖະກິດສັງຄົມໃນລາວ?

ຂໍ້ດີຂອງຂໍ້ສອບແບບນີ້ແມ່ນ ນັກຮຽນມີໂອກາດສະແດງຄວາມຄິດເຫັນໄດ້ຢ່າງເສລີ ສ່ວນຂໍ້ບົກ ຜ່ອງແມ່ນມີຄວາມເຊື່ອໝັ້ນຕໍ່າ.

### 2.1.2 ແບບຈຳກັດຄຳຕອບ ( Restricted-response type )

ໝາຍເຖິງແບບທົດສອບທີ່ຕ້ອງການຄຳຕອບສະເພາະເຈາະຈົງທີ່ຈັດລະບຽບຂອງຄວາມຄິດ ເປັນຢ່າງດີມີການກຳນົດຂອບເຂດໃນການຕອບໃຫ້.

<u>ຕົວຢ່າງ:</u>

- ວັດທະນະທຳລາວມີປະເພດໃດແດ່?

ຂໍ້ດີຂອງແບບສອບນີ້ຄືງ່າຍໃນການກວດມີຄວາມຍຸດຕິທຳ ແລະມີຄວາມເຊື່ອໝັ້ນສູງກວ່າແບບທົດສອປະເພດບໍ່ຈຳກັດຄຳຕອບ.

**ຂໍ້ແນະນຳໃນການສ້າງແບບທົດສອບຂຽນຕອບແບບອັດຕະໄນ**

1. ຄຳຖາມຄວນຈະຕ້ອງກະຕຸ້ນໃຫ້ນັກຮຽນໄດ້ໃຊ້ຄວາມຄິດເຫັນ, ການຕັ້ງຄຳຖາມບໍ່ໃຊ້ຄຳດັ່ງຕໍ່ໄປນີ້ຂຶ້ນຕົ້ນເຊັ່ນ: " ຈົ່ງບອກ, ຈົ່ງເຫົ່າ, ຈົ່ງສະຫຼຸບ " ແຕ່ຄວນໃຊ້ຄຳປະເພດຕໍ່ໄປນີ້ຂຶ້ນຕົ້ນປະໂຫຍກເຊັ່ນ: " ຈົ່ງອະທິບາຍ, ຈົ່ງວິເຄາະ, ຈົ່ງສົມທຽບ, ຈົ່ງຈຳແນກ, ຈົ່ງບອກຂໍ້ແຕກຕ່າງ ຈົ່ງນຳສະເໜີແນວທາງ, ຈົ່ງສະແດງຄວາມຄິດເຫັນ , ຍ້ອນຫຍັງ, ເປັນຫຍັງ...
2. ພິຈະລະນາໃຫ້ຮອບຄອບວ່າ ຈະສ້າງແບບທົດສອບໃຫ້ຄອບຄຸມເນື້ອໃນຫຍັງແດ່ເຊັ່ນ: ຈະ ສອບສະເພາະເນື້ອໃນທີ່ຄູບັນຍາຍພຽງຢ່າງດຽວ ຫຼື ຈະຄອບຄຸມໄປເຖິງສ່ວນທີ່ນັກຮຽນຮ່ວມອະພິປາຍ, ເຮັດບົດລາຍງານ ຫຼື ອ່ານນອກເວລາ.
3. ການສ້າງແບບທົດສອບຄວນຄຳນຶງເຖິງລະດັບຄວາມສຳຄັນຂອງຈຸດປະສົງເນື້ອໃນບົດຮຽນ ທີ່ຄູກຳນົດໃຫ້.
4. ຂໍ້ຄຳຖາມຄວນເປັນຄຳຖາມທີ່ແປກໆໃໝ່ໆເພື່ອເປີດໂອກາດໃຫ້ນັກຮຽນໄດ້ໃຊ້ຄວາມຄິດເຫັນບໍ່ຄວນເປັນຄຳຖາມທີ່ມີໃນປຶ້ມແບບຮຽນ.
5. ຕ້ອງຕັ້ງຄຳຖາມໃຫ້ຜູ້ຕອບອ່ານແລ້ວເຂົ້າໃຈທິດທາງ ຫຼື ແນວທາງຄຳຕອບ
6. ບໍ່ຄວນຖາມຫາອັນລະອຽດເລັກໆນ້ອຍຫຼາຍເກີນໄປ ໂດຍສະເພາະບໍ່ຄວນຖາມຫາອັນລະ ອຽດທີ່ຈົດຈຳຍາກ ແລະບໍ່ເປັນປະໂຫຍດທີ່ຕໍ່ການຈົດຈຳ.
7. ຖ້າບໍ່ຈຳເປັນບໍ່ຄວນໃຫ້ມີການເລືອກຕອບເປັນບາງຂໍ້ ເພາະອາດມີການໄດ້ປຽບເສຍປຽບ ກັນເນື່ອງຈາກແບບທົດສອບມີຄວາມຍາກງ່າຍບໍ່ເທົ່າກັນຄະແນນທີ່ໄດ້ນຳມາປຽບທຽບກັນບໍ່ໄດ້ ເພາະຕັ້ງຢູ່ບົນພື້ນຖານການວັດບໍ່ເທົ່າກັນ.
8. ພະຍາຍາມກຳນົດຄວາມຍາວຂອງແບບທົດສອບເໝາະສົມກັບເວລາ.
9. ພະຍາຍາມໃຊ້ຄຳຖາມຫຼາຍໆແບບບໍ່ແມ່ນມີແຕ່ຄຳຖາມປະເພດ ໃຜ, ແມ່ນຫຍັງ, ບ່ອນໃດ , ເວລາໃດເທົ່ານັ້ນ ເພາະຄຳຖາມປະເພດນີ້ມີລັກສະນະໄປທາງການວັດຄວາມຈຳຫຼາຍ ກວ່າວັດສະມັດຕະພາບອື່ນ ຄຳຖາມທີ່ໃຊ້ວັດສະມັດຕະພາບທີ່ສູງຂຶ້ນ ຄວນເປັນຄຳຖາມປະເພດ: ເປັນຫຍັງ, ແນວໃດ, ຫຼື ໃຫ້ບັນຍາຍ ອະທິບາຍ ປຽບທຽບຫາຄວາມສຳພັນ ຄວາມຂັດແຍ່ງ, ຕີຄວາມ, ວິເຄາະເຫດຜົນ, ວິຈານ ແລະປະເມີນຜົນເປັນຕົ້ນ.
10. ຖາມບັນຫາທີ່ສະແດງວ່ານັກຮຽນມີຄວາມຮູ້ຈິງສາມາດຕອບບັນຫາໄດ້ ໂດຍພະຍາຍາມນຳ ກົດເກນ ຫຼື ຄວາມຮູ້ໄປໃຊ້ໃນສະຖານະການໃໝ່ໆບໍ່ຄວນເປັນຄຳຖາມທີ່ນັກຮຽນເຄີຍພົບ ຫຼື ເຮັດມາກ່ອນ ເພາະຈະເປັນການວັດຄວາມຈຳ.
11. ຂຽນຄຳຖາມໃຫ້ຊັດເຈນວ່າຕ້ອງການໃຫ້ຕອບແນວໃດ ພະຍາຍາມຂຽນໃຫ້ສະເພາະເຈາະຈົງລົງໄປ ຄຳຖາມປະເພດໃຫ້ສະແດງຄວາມຄິດເຫັນ ເປັນຄຳຖາມທີ່ກວ້າງໄປເຊັ່ນ:

" ຈົ່ງອະທິບາຍເລື່ອງ................................................" ຄວນປ່ຽນເປັນ

" ຈົ່ງອະທິບາຍເລື່ອງ...............................................ໃນແງ່ຕໍ່ໄປນີ້

ກ. ................................................

ຂ. ................................................

12. ໃຊ້ຄຳຖາມທີ່ສາມາດບອກໄດ້ວ່າ ຄຳຕອບໃດດີກວ່າຄຳຕອບໃດ ຄຳຖາມນັ້ນໆເມື່ອນັກຮຽນຕອບແລ້ວ ຄົນທີ່ມີຄວາມຮູ້ທັງຫຼາຍຄວນຈະເຫັນພ້ອມກັນວ່າຄຳຕອບໃດເປັນຄຳຕອບທີ່ດີ.

13. ເມື່ອຂຽນຄຳຖາມແລ້ວຄວນຂຽນຄຳຕອບທີ່ຕ້ອງການໄວ້ເພື່ອເປັນການກວດສອບເບິ່ງ ວ່າຄຳຖາມນັ້ນ ຊັດເຈນແລ້ວຫຼືບໍ່ຄຳຖາມນັ້ນເມື່ອອ່ານແລ້ວຈະຕອບຕາມທີ່ຄິດໄວ້ຫຼືບໍ່ ຫາກຍັງບໍ່ໄດ້ຕາມຕ້ອງການກໍ່ຈະໄດ້ແກ້ໄຂກ່ອນ ນຳໄປໃຊ້

14. ຖ້າເປັນຄຳຖາມທີ່ກ່ຽວກັບປະເດັນຂໍ້ຂັດແຍ່ງທີ່ຍັງຫາຂໍ້ສະຫຼຸບບໍ່ໄດ້ຂໍ້ສອບນັ້ນ ຄວນເລັ່ງໃສ່ຫາຫຼັກຖານ ມາຢັ້ງຢືນ ຫຼື ມາສະໜັບສະໜູນ.

15. ຄວນກຳນົດຄວາມຍາວຂອງແບບທົດສອບ ແລະ ຄວາມສັບຊ້ອນຂອງແບບທົດສອບໃຫ້ພໍ ເໝາະ ກັບຄວາມສາມາດຂອງຜູ້ສອບ.

16. ພະຍາຍາມໃຫ້ຂໍ້ສອບມີຈຳນວນຫຼາຍຂໍ້ ເພື່ອຈະໄດ້ຄວບຄຸມເນື້ອໃນເຊິ່ງກ່ຽວຂ້ອງ ກັບຄ່າຂອງຄວາມ ເຊື່ອໝັ້ນຂອງແບບທົດສອບເຮົາອາດເພີ່ມຂໍ້ສອບໃຫ້ຫຼາຍຂໍ້ໂດຍຈຳກັດ ໃຫ້ຕອບສັ້ນໆ.

17. ຖ້າຂໍ້ສອບມີຫຼາຍຂໍ້ ຄວນຈະຮຽງລຳດັບຈາກງ່າຍຫາໄປຍາກ

18. ບໍ່ຄວນໃຊ້ຂໍ້ສອບທີ່ຖາມໃນເລື່ອງການທ່ອງຈຳພຽງຢ່າງດຽວ

**ລັກສະນະຄຳຖາມຂອງແບບທົດສອບຂຽນຕອບແບບອັດຕະໄນ**

- ໃຊ້ຄຳຖາມປະເພດ ໃຜ, ແມ່ນຫຍັງ, ທີ່ໃດ, ເວລາໃດ, ເມື່ອຕ້ອງການວັດຄວາມຈຳ
- ໃຫ້ນິຍາມຫຼືໃຫ້ຄວາມໝາຍ
- ໃຫ້ຈັດລຳດັບເລື່ອງ ລຳດັບເຫດການ
- ໃຫ້ຈຳແນກສິ່ງຂອງປະເພດຕ່າງໆ
- ໃຫ້ຂຽນບັນຍາຍ ຫຼື ພັນລະນາສິ່ງຂອງຕ່າງໆ ຫຼື ຂະບວນການຕ່າງໆ
- ໃຫ້ບອກຄວາມຄ້າຍຄືກັນ
- ໃຫ້ປຽບທຽບຂອງສອງສິ່ງຂອງໃນແງ່ໃດໜຶ່ງ
- ໃຫ້ອະທິບາຍວິທີການ ຫຼື ຫາເຫດຜົນມາປະກອບ
- ໃຫ້ອະທິບາຍເຫດຜົນຫຍໍ້ໆເພື່ອສະໜັບສະໜູນ ຫຼື ຄັດຄ້ານ
- ໃຫ້ອະພິປາຍຢ່າງກວ້າງຂວາງ
- ໃຫ້ສະຫຼຸບຄວາມໝາຍຂອງເລື່ອງ
- ໃຫ້ບອກສາເຫດ ຫຼື ຄາດຄະເນຜົນທີ່ຈະເກີດຂຶ້ນ
- ສະຫຼຸບຫຼືຫຍໍ້ໃຈຄວາມຈາກປຶ້ມຕຳລາຮຽນ ຫຼື ເລື່ອງທີ່ອ່ານ
- ໃຫ້ຫາຄວາມສຳພັນຂອງສິ່ງຕ່າງໆ
- ໃຫ້ນຳກົດເກນ ຫຼືຫຼັກການໄປໃຊ້ແກ້ບັນຫາໃນສະຖານະການຕ່າງໆ
- ໃຫ້ວິເຄາະວິຈານເພື່ອສະຫຼຸບຫາເຫດຜົນທີ່ຖືກຕ້ອງ
- ໃຫ້ບອກບັນຫາທີ່ຈະເກີດຂຶ້ນໃໝ່

<u>ຕົວຢ່າງຄຳຖາມ</u>

1. ຈົ່ງອະທິບາຍຄຳວ່າ " ພຸດທະ " ?
2. ຍ້ອນຫຍັງຝົນຈຶ່ງຕົກບໍ່ຖືກຕ້ອງຕາມລະດູການ?
3. ຈົ່ງປຽບທຽບຄວາມແຕກຕ່າງລະຫວ່າງວັດທະນະທຳທາງດ້ານວັດຖຸ ແລະ ວັດທະນະທຳທາງດ້ານຈິດໃຈ? ຍົກ ຕົວ ຢ່າງມາປະກອບ
4. ການສູບຢາມີຜົນຮ້າຍຕໍ່ສຸຂະພາບແນວໃດ?
5. ຈົ່ງອະພິປາຍບົດບາດຂອງນັກຮຽນນັກສຶກສາໃນການແກ້ໄຂບັນຫາຫຍໍ້ທໍ້ໃນສັງ ຄົມ?

6. ເປັນຫຍັງຈຶ່ງເກີດມີໄຟນ້ຳຖ້ວມ ?

**ວິທີການໃຫ້ຄະແນນແບບທົດສອບອັດຕະໄນ**

1. ພິຈາລະນາຄຳຕອບແຕ່ລະຂໍ້ຂອງນັກຮຽນແບບລວມໆກ່ອນບໍ່ທັນກວດໃຫ້ຄະແນນໂດຍລະອຽດທັງນີ້ເພື່ອຈະເບິ່ງມາດຕະຖານການຕອບໂດຍທົ່ວໄປ

2. ກວດໃຫ້ຄະແນນເທື່ອລະຂໍ້ຈົນຄົບໝົດທຸກຄົນແລ້ວຈຶ່ງກວດຂໍ້ໃໝ່ບໍ່ແມ່ນກວດໄປເທື່ອລະຄົນ ເພາະວ່າການກວດໄປເທື່ອລະຂໍ້ນີ້ເພື່ອຈະປຽບທຽບ ແຕ່ລະບັນຫາໄດ້ສະດວກຂຶ້ນ

3. ຜູ້ກວດຄວນກຳນົດເກນ ຫຼື ວິທີການໃນການໃຫ້ຄະແນນກັບຂໍ້ສອບແຕ່ລະຂໍ້ໃຫ້ຊັດເຈນໄວ້ລ່ວງໜ້າວ່າຈະໄດ້ຄະແນນເທົ່າໃດ ກ່ອນທີ່ຈະລົງມືກວດ

4. ຜູ້ກວດຈະຕ້ອງຮັກສາສະພາບອາລົມຈິດຂອງຕົນເອງໃຫ້ຄົງທີ່ ແລະ ບໍ່ໃຫ້ມີຜົນກະທົບຕໍ່ ການໃຫ້ຄະແນນຂອງຜູ້ສອບແຕ່ລະຄົນ

5. ບໍ່ຄວນເບິ່ງຊື່ຜູ້ສອບ ເພາະອາດຈະເກີດຄວາມລຳອຽງ

6. ຖ້າເປັນໄປໄດ້ ຄວນມີຜູ້ກວດ 2 ຄົນຂຶ້ນໄປ

7. ເມື່ອກວດຂໍ້ສອບໃດໜຶ່ງຂອງຜູ້ສອບສຳເລັດລົງຄວນລະຫຼັບເຈ້ຍຄຳຕອບໃໝ່ທັງນີ້ເພື່ອປ້ອງກັນບັນຫາຄື: ກໍລະນີທີ່ຄຳຕອບຂອງນັກຮຽນເກັ່ງ ແລະຄຳຕອບຂອງນັກຮຽນອ່ອນ ຢູ່ຕິດກັນອາດມີຜົນກະທົບເຮັດໃຫ້ຄົນຮຽນອ່ອນໄດ້ຄະແນນຕໍ່າກວ່າປົກກະຕິ ເພາະຜູ້ກວດ ຫາກໍຜ່ານການອ່ານຄຳຕອບທີ່ດີມີຄຸນນະພາບຂອງຄົນອື່ນມາກ່ອນ

8. ໃນການກວດໄປເທື່ອລະຂໍ້ ຖ້າຢາກໃຫ້ດີແທ້ ຄວນໄປອ່ານຄຳຕອບຂອງນັກຮຽນທຸກຄົນ ຜ່ານໄປຖ້ຽວໜຶ່ງກ່ອນແລ້ວຈຶ່ງຈັດເຈ້ຍຄຳຕອບເປັນກຸ່ມໃຫຍ່ໆແບ່ງເປັນ5ກຸ່ມຄື: ດີຫຼາຍ ດີ, ປານກາງ, ອ່ອນ, ໃຊ້ບໍ່ໄດ້ການແບ່ງກຸ່ມຕາມເຫດຜົນຄຳຕອບ

- ອ່ານຄຳຕອບໃນແຕ່ລະກຸ່ມຢ່າງລະອຽດແລ້ວຈຶ່ງຈັດຄຸນນະພາບຄຳຕອບຕັ້ງແຕ່ດີທີ່ສຸດຈົນເຖິງຂີ້ຮ້າຍທີ່ສຸດໃນແຕ່ລະກຸ່ມ
- ນຳເຈ້ຍຄຳຕອບທຸກກຸ່ມມາຮວມກັນໂດຍລຽງຕາມລະດັບຕາມຄຸນະພາບທີ່ປະເມີນໄວ້
- ແບ່ງລຳດັບເປັນຄະແນນ

9. ໃຫ້ຄວາມເປັນປາລະໄນໃນການກວດຂໍ້ສອບ ຕັດອະຄະຕິອອກໃຫ້ໝົດ.

**ຕາຕະລາງ 2.3: ຂໍ້ດີ ແລະ ຂໍ້ບົກຜ່ອງຂອງຂໍ້ສອບຂຽນຕອບແບບອັດຕະໄນ**

| ຂໍ້ດີ | ຂໍ້ບົກຜ່ອງ |
|---|---|
| - ສາມາດວັດຄວາມຄິດລິເລີ່ມ ແລະ ການສັງເຄາະຄວາມຮູ້<br>- ສ້າງໄດ້ງ່າຍ ແລະວ່ອງໄວ<br>- ເດົາຄຳຕອບໄດ້ຍາກ<br>- ປະຢັດຄ່າໃຊ້ຈ່າຍໃນການພິມ<br>- ດຳເນີນການສອບ ແລະ ຄຸມການສອບໄດ້ງ່າຍ | - ຖາມໄດ້ພຽງບາງເລື່ອງບໍ່ຄວບຄຸມເນື້ອໃນ ແລະຈຸດປະສົງການສອນ<br>- ການກວດໃຫ້ຄະແນນບໍ່ຄົງທີ່ແນ່ນອນ<br>- ຄຳຕອບແຕ່ລະຂໍ້ນຳໄປວິເຄາະເພື່ອປັບປຸງ ແລະປະເມີນຜົນບໍ່ໄດ້<br>- ເສຍເວລາໃນການກວດຂໍ້ສອບຫຼາຍ |

### 2.2 ການຂຽນຂໍ້ສອບແບບປາລະໄນ

#### 2.2.1 ແບບທົດສອບຂຽນຕອບ

##### 1) ຂໍ້ແນະນຳໃນການສ້າງແບບທົດສອບຂຽນຕອບສັ້ນໆ

1. ຕັ້ງບັນຫາເປັນຮູບຄຳຖາມ ແລະ ຕ້ອງການຄຳຕອບພຽງສັ້ນໆພຽງຄຳດຽວ ຫຼືປະໂຫຍກ ສັ້ນໆ ຫຼື ໃຈຄວາມດຽວ.
2. ຕ້ອງເປັນຄຳຖາມທີ່ມີຄຳຕອບຕາຍຕົວແນ່ນອນ
3. ເນື້ອໃນຄວາມຮູ້ທີ່ຈະນຳມາຂຽນເປັນຂໍ້ຄວາມຕ້ອງເປັນເນື້ອໃນທີ່ສຳຄັນໃນການຈົດຈຳ
4. ຄຳຖາມຕ້ອງບອກທິດທາງ ຫຼືແນວຄຳຕອບຈະເນັ້ນໜັກເຊັ່ນ:

- (ບໍ່ດີ) ເມືອງຄົງເຊໂດນຕັ້ງຢູ່ທິດໃດ?
- (ດີຂຶ້ນ) ເມືອງຄົງເຊໂດນຕັ້ງຢູ່ທິດໃດຂອງແຂວງສາລະວັນ?

5. ຄຳຖາມທີ່ຕ້ອງການຄຳຕອບເປັນມາດຕາວັດຕ່າງໆເຊັ່ນ:ກິໂລກະລາມ, ແມັດ,ຈະຕ້ອງກຳນົດ ມາດຕາວັດໃຫ້ຊັດເຈນຕາຕະລາງ 2.4: ຂໍ້ດີ ແລະ ຂໍ້ບົກຜ່ອງຂອງແບບທົດສອບຂຽນຕອບສັ້ນ

| ຂໍ້ດີ | ຂໍ້ບົກຜ່ອງ |
|---|---|
| - ສ້າງໄດ້ງ່າຍກວ່າຂໍ້ສອບຊະນິດອື່ນໆ<br>- ສາມາດຂຽນຄຳຖາມໄດ້ຫຼາຍຂໍ້ຄວບຄຸມຫຼາຍກວ່າອັດຕະໄນແບບຂຽນບັນຍາຍ<br>- ມີປະສິດຕິພາບໃນການວັດຄວາມຮູ້ຄວາມຈຳ<br>- ຜູ້ຕອບມີໂອກາດເດົາຍາກ<br>- ມີປະໂຫຍດໃນການວັດວິຊາກ່ຽວກັບວິທະຍາສາດ ແລະ ຄະນິດສາດ | - ສາມາດວັດໄດ້ແຕ່ຄວາມຮູ້ຄວາມຈຳ<br>- ກວດກາຄະແນນຍາກກວ່າປາລະໄນແບບກຳນົດຄຳຕອບ<br>- ບໍ່ສາມາດວັດພຶດຕິກຳການວິເຄາະ, ສັງເຄາະ ແລະ ປະເມີນຄ່າ |

**ຂໍ້ແນະນຳໃນການສ້າງແບບທົດສອບຂຽນຕອບແບບຕື່ມຄຳ**

1. ຄຳຖາມ ຫຼື ຂໍ້ຄວາມຕ້ອງຊັດເຈນຮັດກຸມບໍ່ມີລັກສະນະຕອບໄດ້ຫຼາຍຢ່າງ

2.ບໍ່ຄວນກ່າຍເອົາປະໂຫຍກໃດໜຶ່ງຈາກປຶ້ມແບບຮຽນໂດຍຕັດຂໍ້ຄວາມໃດໜຶ່ງອອກເພາະເປັນການສົ່ງເສີມຄວາມຈຳຫຼາຍເກີນໄປ

3. ແຕ່ລະຂໍ້ບໍ່ຄວນຈົ່ງຫວ່າງຫຼາຍບ່ອນເກີນໄປ

4.ຈົ່ງຫວ່າງໃຫ້ຕື່ມຄວນໃຫ້ພໍດີກັບຄຳຕອບ ຖ້າເປັນໄປໄດ້ແຕ່ລະຂໍ້ຄວນຈົ່ງຫວ່າງໃຫ້ເທົ່າກັນເພື່ອບໍ່ເປັນການເສຍປຽບກັນ ແລະ ກັນຂອງແຕ່ລະຂໍ້

5.ການຈົ່ງຫວ່າງຄວນຈົ່ງໄວ້ທ້າຍຂອງປະໂຫຍກດີກວ່າຈົ່ງໄວ້ກາງປະໂຫຍກຫຼືຕົ້ນປະໂຫຍກ

6.ຄຳທີ່ເອົາມາຕື່ມນັ້ນຕ້ອງເປັນຄຳທີ່ສຳຄັນ ແລະ ຈຳເປັນແທ້ໆ

7. ຄວນສ້າງຄຳຖາມໃຫ້ໄດ້ຄຳຕອບທີ່ສັ້ນທີ່ສຸດ

8. ຄະແນນແຕ່ລະຫວ່າງຄວນໃຫ້ເທົ່າກັນ

**ຕາຕະລາງ 2.5: ຂໍ້ດີ ແລະ ຂໍ້ບົກຜ່ອງຂອງແບບທົດສອບຂຽນຕອບແບບຕື່ມຄໍາ**

| ຂໍ້ດີ | ຂໍ້ບົກຜ່ອງ |
|---|---|
| - ສ້າງງ່າຍສະດວກ ແລະ ສ້າງໄດ້ໄວ<br>- ໂອກາດທີ່ຈະຕອບຖືກໂດຍການເດົາແມ່ນມີໜ້ອຍ<br>- ສາມາດສ້າງຄໍາຖາມເນື້ອໃນໜຶ່ງໄດ້ຫຼາຍຂໍ້<br>- ປະຢັດເວລາໃນການຕອບ | - ສ່ວນໃຫຍ່ວັດໄດ້ແຕ່ຄວາມຮູ້ຄວາມຈໍາຖ້າຂຽນປະໂຫຍກບໍ່ດີຈະບໍ່ເປັນຄໍາຖາມປາລະໄນເພາະມີຫຼາຍຄໍາຕອບເຮັດໃຫ້ກວດຍາກ<br>- ກວດຍາກກວ່າປາລະໄນຊະນິດອື່ນ |

<u>ຕົວຢ່າງ</u>

1. ນາຍົກລັດຖະມົນຕີຂອງ ສ ປ ປ ລາວ ຄົນປັດຈຸບັນມີຊື່ແລະນາມສະກຸນວ່າ.... ..... ........ ..
2. ພູທີ່ສູງກວ່າໝູ່ໃນ ສປປລາວແມ່ນ....................
3. $\sqrt{9}$ ມີຄ່າເທົ່າກັບ.............

**2) ແບບທົດສອບແບບມີຕົວເລືອກ**

**ກ.ຂໍ້ສອບແບບຖືກ-ຜິດ** ( true-fale items )

ຂໍ້ສອບແບບຖືກ-ຜິດກໍ່ຄືຂໍ້ສອບແບບມີຕົວເລືອກຕອບ 2 ຕົວເລືອກນັ້ນເອງ ໂດຍມີຂໍ້ຄວາມໃຫ້ແລ້ວໃຫ້ຜູ້ຮຽນເລືອກຕອບວ່າ: ຖືກ ຫຼື ຜິດ, ແມ່ນ ຫຼື ບໍ່ແມ່ນ, ຈິງ ຫຼື ບໍ່ຈິງ, ເຫັນດີ ຫຼື ບໍ່ເຫັນດີເປັນຕົ້ນ. ຄໍາຖາມປະເພດນີ້ແມ່ນຂຽນໃນຮູບປະໂຫຍກບອກເລົ່າທໍາມະດາ.

**ຂໍ້ແນະນໍາໃນການສ້າງແບບທົດສອບແບບຖືກ - ຜິດ**

1. ຂໍ້ຄວາມໃນຂໍ້ສອບຂຽນເປັນປະໂຫຍກບອກເລົ່າ ໂດຍມີຄວາມສໍາຄັນພຽງປະເດັນດຽວ ແລະ ສາມາດຕັດສິນໄດ້ວ່າຖືກ ຫຼື ຜິດແທ້
2. ຫຼີກເວັ້ນການໃຊ້ຄໍາສັບບາງປະເພດທີ່ເປັນການແນະນໍາຄໍາຕອບເຊັ່ນ: ທັງໝົດ, ສະເໝີ, ບໍ່ ມີເລີຍ, ທຸກໆ, ປົກກະຕິ ເຊິ່ງຄໍາສັບປະເພດນີ້ຈະເຮັດໃຫ້ປະໂຫຍກຜິດຫຼາຍກວ່າຖືກ
3. ໃຊ້ຂໍ້ຄວາມປະຕິເສດສະເພາະທີ່ຈໍາເປັນເທົ່ານັ້ນ ແລະ ຖ້າຫາກນໍາໃຊ້ຕ້ອງຂີດກ້ອງ ຫຼື ຂຽນເປັນຕົວເນັ້ນໃຫ້ແຈ້ງໃນຄໍາປະຕິເສດເທົ່ານັ້ນເຊັ່ນ:

- ປະເທດລາວ<u>ບໍ່ເຄີຍ</u>ຕົກເປັນເມືອງຂື້ນຂອງອັງກິດ

4. ຄວນຫຼີກເວັ້ນການໃຊ້ຂໍ້ຄວາມທີ່ເປັນການປະຕິເສດຊ້ອນປະຕິເສດເຊັ່ນ:

( ບໍ່ດີ ) : ການທີ່ຕໍາຫຼວດ<u>ບໍ່</u>ຈັບຜູ້ຮ້າຍ<u>ບໍ່</u>ເຮັດຕາມໜ້າທີ່

( ດີຂຶ້ນ ): ຕໍາຫຼວດມີໜ້າທີ່ຈັບຜູ້ຮ້າຍ

5. ບໍ່ຄວນກ່າຍເອົາຂໍ້ຄວາມສ່ວນໃດໜຶ່ງຈາກປຶ້ມຕໍາລາໂດຍກົງ
6. ບໍ່ຄວນໃຊ້ປະໂຫຍກ ຫຼື ຂໍ້ຄວາມໂດຍຖືກບາງສ່ວນ ແລະ ຜິດບາງສ່ວນເພາະຂໍ້ຄວາມຄໍາຕອບທີ່ບໍ່ແນ່ນອນອາດພິຈະລະນາວ່າຖືກກໍ່ໄດ້ ຜິດກໍ່ໄດ້ ຍາກແກ່ການຕັດສິນໃຈ ແລະ ເປັນບັນຫາໃນການໃຫ້ຄະແນນພາຍຫຼັງເຊັ່ນ:

( ບໍ່ດີ ) ກົບເປັນສັດນໍ້າ

( ດີຂຶ້ນ ) ກົບເປັນສັດເຄິ່ງບົກເຄິ່ງນໍ້າ.

7.ບໍ່ຄວນໃຊ້ຄໍາທີ່ບອກໂດຍປະມານເຊິ່ງບໍ່ອາດກໍານົດໄດ້ຢ່າງແນ່ນອນເຊັ່ນຄໍາວ່າ ຫຼາຍ, ໜ້ອຍ ອາດຈະ , ຂ້ອນຂ້າງ, ເລື້ອຍໆ

8. ພະຍາຍາມຫຼີກເວັ້ນຂໍ້ຄວາມທີ່ເປັນຄໍາສັ່ງເພາະຄໍາສັ່ງບອກບໍ່ໄດ້ວ່າຖືກ ຫຼື ຜິດ
9. ພະຍາຍາມໃຫ້ຂໍ້ສອບແຕ່ລະຂໍ້ເປັນອິດສະຫຼະແກ່ກັນຢ່າໃຫ້ຂໍ້ໃດຂໍ້ໜຶ່ງແນະຄໍາຕອບຂໍ້ອື່ນ ໆເຊັ່ນ:

( ໜ້າທີ່ສຳຄັນຂອງໃບ ຄື ຜະລິດອາຫານໃຫ້ແກ່ພືດ)

( ຄໍລໂລຟີລເຊິ່ງເປັນສ່ວນສີຂຽວເຮັດໜ້າທີ່ຜະລິດອາຫານ)

10. ຂໍ້ຄວາມແຕ່ລະຂໍ້ຄວນມີຄວາມຍາວໃກ້ຄຽງກັນບໍ່ຄວນໃຫ້ຍາວ ຫຼື ສັ້ນກວ່າກັນຫຼາຍ ແລະ ຄວນລຽງລຳດັບຕາມຄວາມຍາວຂອງຂໍ້ສອບ

11. ຄວນໃຫ້ມີຈຳນວນຂໍ້ຖືກຂໍ້ຜິດໃກ້ຄຽງກັນ ອັດຕາສ່ວນປະມານ 40-60%

12. ຂໍ້ຖືກ ແລະ ຂໍ້ຜິດຕ້ອງຢູ່ກະຈາຍກັນອອກໄປບໍ່ຄວນໃຫ້ຢູ່ຮ່ວມກັນເປັນກຸ່ມ ຫຼືຮຽງກັນເປັນລະບົບ

13. ບໍ່ຄວນຖາມກ່ຽວກັບຄວາມຄິດຄວາມເຫັນເພາະຄວາມຄິດຄວາມເຫັນຂອງແຕ່ລະຄົນຕັດສິນໄດ້ຍາກວ່າຖືກ ຫຼືຜິດ

14.ໃນກໍລະນີທີ່ມີຂໍ້ສອບຫຼາຍປະເພດໃນຊຸດດຽວກັນຄວນຈັດຂໍ້ສອບແບບຖືກ-ຜິດໄວ້ກ່ອນເພາະເປັນຂໍ້ສອບທີ່ຂ້ອນຂ້າງງ່າຍ

15. ຖ້າອອກຂໍ້ສອບປະເພດນີ້ຄວນສ້າງຄຳຖາມໃຫ້ຫຼາຍຂໍ້ຢ່າງຕ່ຳບໍ່ໃຫ້ຫຼຸດ 50 ຂໍ້

**ຕາຕະລາງ 2.6: ຂໍ້ດີ ແລະ ຂໍ້ບົກຜ່ອງຂອງຂໍ້ສອບແບບຖືກ-ຜິດ**

| ຂໍ້ດີ | ຂໍ້ບົກຜ່ອງ |
|---|---|
| - ກວດໃຫ້ຄະແນນງ່າຍແນ່ນອນ ແລະໄວ<br>- ສ້າງໄດ້ງ່າຍແລະໄວກວ່າແບບທົດສອບອື່ນໆ<br>- ຂໍ້ສອບແຕ່ລະຂໍ້ໃຊ້ເວລາຕອບໜ້ອຍຈຶ່ງສາມາດ ຖາມຫຼາຍໆຂໍ້ໄດ້<br>- ວິທີການຕອບງ່າຍເພາະມີຕົວເລືອກພຽງສອງ ຕົວເລືອກ<br>- ປະຢັດຄ່າໃຊ້ຈ່າຍໃນໜ້າໜຶ່ງອາດພິມໄດ້30ຂໍ້<br>- ສາມາດສ້າງໄດ້ເກືອບທຸກວິຊາ | - ເປີດໂອກາດຕອບເດົາໄດ້ສູງ 50 %<br>- ມີຄ່າຄວາມເຊື່ອໝັ້ນຕ່ຳດັ່ງນັ້ນຄວນອອກຂໍ້ສອບ 50 ຂໍ້ຂຶ້ນໄປ<br>- ວັດໄດ້ສະເພາະພຶດຕິກຳຄວາມຮູ້ຄວາມຈຳ<br>- ສິ່ງເສີມນິໄສຂອງການຮຽນທີ່ບໍ່ດີແກ່ຜູ້ຮຽນເພາະເປັນການໝາຍ ຖືກ ຫຼື ຜິດເທົ່ານັ້ນ |

**ຂ. ແບບທົດສອບແບບຈັບຄູ່ ( Matching )**

ແບບທົດສອບຈັບຄູ່ເປັນແບບທົດສອບແບບເລືອກຕອບປະເພດກຳນົດຄຳຫຼືຂໍ້ຄວາມເປັນ 2 ແຖວແລ້ວໃຫ້ຜູ້ຕອບເລືອກຄຳ ຫຼື ຂໍ້ຄວາມຈາກແຖວໜຶ່ງໄປໃສ່ໃນຄຳ ຫຼື ຂໍ້ຄວາມອີກແຖວໜຶ່ງທີ່ມີຄວາມສຳພັນ ຫຼື ສອດຄ່ອງກັນ

ແບບທົດສອບປະເພດນີ້ເປັນແບບທົດສອບເລືອກຕອບທີ່ມີຕົວເລືອກບໍ່ແນ່ນອນຕາຍຕົວ ເພາະຕົວເລືອກຈະຫຼຸດລົງເລື້ອຍໆ ເມື່ອຕອບໄປແລ້ວ

**ຂໍ້ແນະນຳໃນການສ້າງແບບທົດສອບແບບຈັບຄູ່**

1. ຂຽນຄຳຊີ້ແຈງໃນການຈັບຄູ່ໃຫ້ຊັດເຈນວ່າຈະຈັບຄູ່ແນວໃດ
2. ລາຍການຄຳຖາມຄວນຢູ່ທາງຊ້າຍມື ແລະ ຄຳຕອບຢູ່ທາງຂວາມືຄວນມີລັກສະນະສັ້ນກະ ທັດຣັດຊັດເຈນ
3. ຄວນມີຄຳຕອບຫຼາຍກວ່າຄຳຖາມຢ່າງໜ້ອຍ 2 ຂໍ້ຂຶ້ນໄປເຊັ່ນ:
    - ຄຳຖາມມີ 5 ຂໍ້ ຄຳຕອບມີ 7-8 ຂໍ້
    - ຄຳຖາມມີ 7 ຂໍ້ ຄຳຕອບມີ 9-10 ຂໍ້
4. ຄຳທີ່ຢູ່ພາກຄຳຖາມ ແລະ ຄຳຕອບຕ້ອງເປັນຊະນິດດຽວ, ພວກດຽວກັນ, ເລື່ອງດຽວກັນ
5. ລາຍການຄຳຖາມ ແລະ ຄຳຕອບທັງໝົດໃນຊຸດໜຶ່ງໆຕ້ອງຢູ່ໃນໜ້າດຽວກັນ
6. ຈຳນວນຄຳຖາມໃນຊຸດໜຶ່ງຕ້ອງມີ 5-12 ຄຳຖາມ
7. ພະຍາຍາມໃຫ້ຄຳຕອບຢູ່ທາງຂວາມືເປັນຂໍ້ຄວາມສັ້ນໆ ແລະ ສັ້ນກວ່າຄຳຖາມທີ່ຢູ່ທາງຊ້າຍມື
8. ຄຳທີ່ເປັນຄູ່ກັນຄວນຈັດສະຫຼັບສັບປົນກັນບໍ່ຄວນຈັດຊື່ກັນຢ່າງເປັນລະບົບ

໑. ຄວນໃຫ້ຄະແນນເທົ່າໆກັນໃນແຕ່ລະຂໍ້

**ລັກສະນະຄໍາ ຫຼື ຂໍ້ຄວາມທີ່ຄວນນໍາມາຈັບຄູ່ກັນ**

- ຊື່ບຸກຄົນສໍາຄັນ ຈັບຄູ່ກັບ ຜົນງານທີ່ເດັ່ນໆ
- ຊື່ນັກປະພັນ ຈັບຄູ່ກັບ ຊື່ປຶ້ມເລື່ອງ
- ຄໍາສັບ ຈັບຄູ່ກັບ ຄວາມໝາຍຂອງຄໍາສັບ
- ກົດເກນ ຈັບຄູ່ກັບ ຕົວຢ່າງ
- ເຫດການ ຈັບຄູ່ກັບ ວັນທີ ເດືອນ ປີ
- ພະຍາດ ຈັບຄູ່ກັບ ອາການຂອງພະຍາດ
- ວັດຖຸ ຈັບຄູ່ກັບ ໜ້າທີ່ຂອງມັນ
- ສັນຍາລັກ ຈັບຄູ່ກັບ ຄວາມໝາຍ
- ຊື່ປະເທດ ຈັບຄູ່ກັບ ນະຄອນຫຼວງ ໆລໆ

ຕົວຢ່າງ:

ຄໍາຊີ້ແຈງ: ໃຫ້ນັກຮຽນຂີດເສັ້ນເຊື່ອມໂຍງກັນລະຫວ່າງຂໍ້ຄວາມເບື້ອງຊ້າຍມືໃສ່ເບື້ອງຂວາມືທີ່ເຫັນວ່າມີຄວາມກ່ຽວພັນກັນ

| **ປະເທດ** | **ຄໍາທັກທາຍ** |
|---|---|
| ຫວຽດນາມ | ສະຫວັດດີ |
| ໄທ | ຊິນຈ່າວ |
| ກໍາປູເຈຍ | ມິງກະລາບາ |
| ມາເລເຊຍ | ຊາລາມັດຊຽງ |
| ອິນໂດເນເຊຍ | ຊາລາມັດຕາຕັງ |
| ຟີລິບປິນ | ຊົວສະເດ |
| ສິງກະໂປ | ໜີຫ່າວ |
| ມຽນມາ | ຊາລາມັດດາຕັງ |

**ຕາຕະລາງ 2.7: ຂໍ້ດີ ແລະ ຂໍ້ບົກຜ່ອງຂອງຂໍ້ສອບແບບຈັບຄູ່**

| ຂໍ້ດີ | ຂໍ້ບົກຜ່ອງ |
|---|---|
| - ສ້າງງ່າຍ ແລະໄວ<br>- ເໝາະສໍາລັບວັດຄວາມຈໍາ<br>- ກວດໃຫ້ຄະແນນງ່າຍ<br>- ເໝາະສໍາລັບການວັດຄວາມສາມາດໃນການຫາຄວາມສໍາພັນລະຫວ່າງສິ່ງຕ່າງໆຫຼືສິ່ງທີ່ສອດຄ່ອງກັນ<br>- ສາມາດພັດທະນາເປັນຂໍ້ສອບແບບເລືອກຕອບໄດ້ | - ວັດພຶດຕິກໍາການຮຽນຮູ້ຂັ້ນສູງໄດ້ໜ້ອຍ<br>- ແຕ່ລະຂໍ້ມີໂອກາດການເດົາບໍ່ເທົ່າກັນເພາະຂໍ້ທໍາອິດໂອກາດເດົາຍາກກວ່າຂໍ້ອື່ນໆ ແລະຂໍ້ຕໍ່ໄປກໍ່ເດົາງ່າຍຂຶ້ນຕາມລະດັບຕົວເລືອກໜ້ອຍລົງ<br>- ເປັນການຍາກທີ່ຈະໃຫ້ເນື້ອໃນທັງໝົດຢູ່ໃນເລື່ອງດຽວໆກັນໃນຫຼາຍຂໍ້ |

**ຄ. ແບບທົດສອບແບບເລືອກຕອບ**( Multiple choice test )

ແບບທົດສອບຊະນິດນີ້ເປັນແບບທົດສອບນິຍົມໃຊ້ກັນຫຼາຍໃນປັດຈຸບັນເພາະເປັນແບບທົດສອບທີ່ສາມາດຈໍາແນກລະດັບຄວາມຮູ້ຕ່າງໆໄດ້ດີກວ່າແບບທົດສອບປະເພດອື່ນໆ ພ້ອມນີ້ກໍ່ສາ ມາດນໍາມາວິເຄາະ ແລະ ສ້າງເປັນຂໍ້ສອບແບບມາດຕະຖານໄດ້ ( standardized test ) ແບບທົດສອບແບບເລືອກຕອບນີ້ມີສ່ວນປະກອບທີ່ສໍາຄັນ 2 ພາກສ່ວນຄື :

1. ສ່ວນຄຳຖາມ ຫຼື ຕົວນຳ ( stem )

2. ສ່ວນຕົວເລືອກ ( choice ຫຼື options ) ແບ່ງເປັນ 2 ປະເພດຄື :

- ຕົວຖືກ ( correct choice )
- ຕົວລວງ ( decoys ຫຼືdistracters )

ແບບທົດສອບແບບເລືອກຕອບທີ່ດີ ຕົວເລືອກທຸກຕົວຈະຕ້ອງມີນ້ຳໜັກພໍໆເທົ່າກັນຖ້າເບິ່ງເຜີນໆ ບໍ່ມີຄວາມຮູ້ໃນຂໍ້ນັ້ນແທ້ຈະເຫັນວ່າຖືກໝົດທຸກຂໍ້ ແລະ ໃນການສອບຕົວເລືອກແຕ່ລະຕົວຈະມີໂອກາດຖືກເລືອກພໍໆກັນ ຖ້າວ່າຂໍ້ສອບແບບນີ້ມີລັກສະນະຖືກ ຫຼື ຜິດຢ່າງຈະແຈ້ງຈະເຮັດໃຫ້ຂໍ້ສອບຂາດຄຸນຄ່າ ແລະຂາດຄຸນລັກສະນະຄວາມເປັນປາລະໄນ.

**ຫຼັກການຂຽນຂໍ້ສອບແບບເລືອກຕອບ**

1. ຂຽນຕົວຄຳຖາມ ຫຼື ຕົວນຳໃຫ້ຢູ່ໃນຮູບປະໂຫຍກຄຳຖາມທີ່ສົມບູນ
2. ເນັ້ນເລື່ອງທີ່ຈະຖາມໃຫ້ຊັດເຈນ ແລະ ຖືກຈຸດ
3. ພາສາທີ່ໃຊ້ຕ້ອງໃຫ້ເໝາະສົມກັບຜູ້ສອບ
4. ພະຍາຍາມຫຼີກລຽງການໃຊ້ຄຳຖາມປະຕິເສດ ຫຼື ປະຕິເສດຊ້ອນເຊັ່ນ:

( ບໍ່ດີ ) ຖ້ານັກຮຽນຟັງຄູສອນບໍ່ເຂົ້າໃຈບໍ່ຄວນປະຕິບັດແນວໃດ?

ກ. ນັ່ງລ້າງ ຄ. ຖາມຄູ

ຂ. ຖາມໝູ່ເພື່ອນ ງ. ອ່ານໜັງສື

( ດີຂຶ້ນ ) ຖ້ານັກຮຽນສົງໃສເລື່ອງທີ່ຄູກຳລັງສອນຄວນເຮັດແນວໃດ?

5. ຄວນຫຼີກລຽງການໃຊ້ຕົວເລືອກປະເພດ" ຖືກທຸກຂໍ້ " ຫຼື " ຜິດທຸກຂໍ້ "
6. ຄວນຖາມພຶດຕິກຳທີ່ພາໃຫ້ເກີດຄວາມຄິດ ແລະ ຄວນຫຼີກເວັ້ນການຖາມຄວາມຈື່ຈຳໃນບົດຮຽນ
7. ຕົວເລືອກຄວນສັ້ນກະທັດຮັດ ແລະມີຄວາມໝາຍ
8. ຕົວເລືອກແຕ່ລະຕົວຄວນມີຄວາມຍາວເທົ່າໆກັນ ຖ້າມີຄວາມຍາວແຕກຕ່າງກັນໃຫ້ລຽງ ລຳດັບແຕ່ສັ້ນຫາຍາວ ຖ້າເປັນວັນທີ ເດືອນ ປີ ຫຼືຈຳນວນໃຫ້ລຽງແຕ່ໜ້ອຍຫາຫຼາຍ
9. ຄຳຖາມຂໍ້ໜຶ່ງຄວນສິ້ນສຸດຢູ່ໃນໜ້າດຽວກັນ
10. ຂຽນຕົວເລືອກໃຫ້ເປັນອິດສະຫຼະຂາດຈາກກັນບໍ່ຄວບຄຸມ ຫຼື ເຫຼື່ອມທັບກັນ
11. ຫຼີກລຽງຄຳຖາມທີ່ແນະນຳຄຳຕອບ
12. ຂໍ້ດຽວຕ້ອງມີຄຳຕອບດຽວ
13. ຄວນກະຈາຍຕົວເລືອກທີ່ເປັນຂໍ້ຖືກຢູ່ໃນຕຳແໜ່ງຕ່າງໆກັນ
14. ຕົວເລືອກຕ້ອງມີການພົວພັນກັນ
15. ຄວນມີຕົວເລືອກລະຫວ່າງ 3-5 ຕົວເລືອກ

**ຕາຕະລາງ 2.8: ຂໍ້ດີ ແລະ ຂໍ້ເສຍຂອງແບບທົດສອບແບບເລືອກຕອບ**

| ຂໍ້ດີ | ຂໍ້ເສຍ |
|---|---|
| - ວັດພຶດຕິກຳໄດ້ຫຼາຍດ້ານ<br>- ຂໍ້ສອບແບບນີ້ມີໂອກາດເດົາຖືກໜ້ອຍ<br>- ຂໍ້ສອບແບບນີ້ຈະອອກໃຫ້ງ່າຍ ຫຼື ຍາກກໍ່ໄດ້<br>- ເໝາະໃນການໃຊ້ເພື່ອວິເຄາະຂໍ້ສອບ ສາມາດວິເຄາະຄວາມຍາກ - ງ່າຍຂອງຂໍ້ສອບ, ຫາປະ ສິດທິພາບຂອງຕົວລວງ ຫາອຳນາດຈຳແນກຂໍ້ສອບ<br>- ສາມາດນຳຜົນຈາກການວິເຄາະມາປັບປຸງ ໃຫ້ຂໍ້ສອບ | - ເປັນຂໍ້ສອບທີ່ສ້າງຍາກ ຖ້າຂຽນຕົວລວງບໍ່ດີ ຈະເປັນຂໍ້ສອບທີ່ງ່າຍ<br>- ເສຍເວລາຫຼາຍໃນການສ້າງຂໍ້ສອບ<br>- ຜູ້ຕອບຂາດທັກສະໃນການຂຽນ<br>- ບໍ່ເໝາະໃນການວັດຄວາມຄິດສ້າງສັນເນື່ອງຈາກກຳນົດຕົວເລືອກໃຫ້<br>- ສິ້ນເປືອງຄ່າໃຊ້ຈ່າຍໃນການສ້າງຂໍ້ |

| | |
|---|---|
| ມີຄຸນນະພາບດີຂຶ້ນ<br>- ມີຄວາມທ່ຽງທຳ ແລະມີຄວາມເປັນປາລະໄນ ການກວດໃຫ້ຄະແນນສາມາດກວດດ້ວຍເຄື່ອງຈັກໄດ້<br>- ສາມາດໃຊ້ແຜນຜັງ,ຮູບພາບກູາເປັນຕົວບັນຫາໄດ້ງ່າຍ<br>- ອອກໄດ້ຫຼາຍຂໍ້ ແລະ ສາມາດຄວບຄຸມເນື້ອໃນໄດ້ | ສອບ |

**3. ຫຼັກການຂຽນຂໍ້ສອບດ້ານພຶດຕິກຳ**

ບລູມ ( bloom ) ແລະ ຄະນະໄດ້ແບ່ງພຶດຕິກຳດ້ານສະຕິປັນຍາອອກເປັນ 6 ດ້ານຄື: ຄວາມຮູ້ຄວາມຈຳ , ຄວາມເຂົ້າໃຈ, ການນຳໃຊ້, ການວິເຄາະ, ການສັງເຄາະ ແລະ ການປະເມີນຜົນ.

**3.1 ການຂຽນຂໍ້ສອບວັດຄວາມຮູ້ຄວາມຈຳ (knowledge )**

ຄວາມຮູ້-ຄວາມຈຳແມ່ນຄວາມສາມາດໃນການສຳນຶກໄດ້ເຖິງເລື່ອງລາວຕ່າງໆທີ່ເຄີຍມີປະສົບການມາທັງໃນຫ້ອງຮຽນ ແລະ ນອກຫ້ອງຮຽນເຊັ່ນ: ຈາກການຮຽນເນື້ອໃນວິຊາຕ່າງໆ, ຈາກການຟັງວິທະຍຸ, ເບິ່ງໂທລະພາບ, ອ່ານໜັງສືພິມ, ການບອກເຫຼົ່າຕໍ່ກັນມາເປັນຕົ້ນ.

**3.1.1 ຄວາມຮູ້ສະເພາະເລື່ອງ (knowledge of specifics )**

- ຄວາມຮູ້ກ່ຽວກັບສັບ ແລະ ນິຍາມ (knowledge of terminology )

ລັກສະນະການຖາມ

- ຖາມແປຄວາມໝາຍຄຳສັບ
- ຖາມຊື່ຮຽກສິ່ງຂອງຕ່າງໆ
- ຖາມຄວາມໝາຍຂອງເຄື່ອງໝາຍ, ຮູບພາບ, ສັນຍາລັກ

ຕົວຢ່າງ:

1. ພຸດທະແປວ່າຫຍັງ?
2. ວັນທີ 8 ເດືອນ 8 ປີ 1997 ແມ່ນວັນສຳຄັນຫຍັງຂອງ ສ.ປ.ປ ລາວ?

- ຄວາມຮູ້ກ່ຽວກັບກົດເກນ ແລະ ຄວາມຈິງສະເພາະເລື່ອງ(knowledge of specific facts)

ລັກສະນະການຖາມມັກຖາມກ່ຽວກັບ

- ສູດ, ກົດເກນ
- ຄຸນສົມບັດຂອງສິ່ງຕ່າງໆ
- ເຫດການທີ່ເກີດຂຶ້ນໃນເນື້ອເລື່ອງເຊັ່ນ: ໃຜ , ເຮັດຫຍັງ, ຢູ່ໃສ, ເວລາໃດ, ແນວໃດ...
- ຂະໜາດ, ເວລາ, ຈຳນວນ ແລະ ສະຖານທີ່
- ຈຸດປະສົງ, ປະໂຫຍດ ແລະໂທດ
- ສາເຫດ ແລະ ຜົນທີ່ເກີດຂຶ້ນ ໆລໆ

ຕົວຢ່າງຄຳຖາມ

1. ຜົນບວກມູມໃນຂອງຮູບສາມແຈມີຈັກອົງສາ? ( 180 ອົງສາ )
2. ແຂວງທີ່ຢູ່ໃຕ້ສຸດຂອງປະເທດລາວແມ່ນແຂວງໃດ?( ແຂວງ ຈຳປາສັກ )
3. ໄຂ່ແດງມີປະໂຫຍດແນວໃດ? ( ບຳລຸງເລືອດ )
4. ໜຶ່ງປີ ມີຈັກເດືອນ? ( 12 ເດືອນ )
5. ປະຈຸບັນນາຍົກລັດຖະມົນຕີຂອງໄທມີຊື່ ນາມສະກຸນວ່າແນວໃດ?(ທ່ານ ປະຍຸດ ຈັນໂອຊາ )

3.1.2 ຄວາມຮູ້ໃນວິທີການດຳເນີນ ( knowledge of ways and means of dealing with Specifies )

- ຄວາມຮູ້ກ່ຽວກັບລະບຽບແບບແຜນ ( knowledge of convention )
  ລັກສະນະການຖາມ
  - ຖາມກ່ຽວກັບລະບຽບປະຕິບັດຕ່າງໆ
  - ຖາມກ່ຽວກັບແບບແຜນ
  - ຖາມເຖິງປະເພນີ ໆລໆ

ຕົວຢ່າງ ຄຳຖາມ

1. ນັກສຶກສາວິທະຍາໄລຄູສາລະວັນໃນວັນຄານຄວນນຸ່ງຊຸດແບບໃດ? ( ຊຸດອີງການຈັດຕັ້ງ )
2. ໃນເວລານັ່ງຟັງຢູ່ຫ້ອງປະຊຸມນັກສຶກສາບໍ່ຄວນເຮັດແນວໃດ ?
3. ເມື່ອເຂົາພົບຜູ້ໃຫຍ່ເຮົາຄວນກ່າວວ່າແນວໃດ?

- ຄວາມຮູ້ກ່ຽວກັບວິທີປະຕິບັດຕາມລະດັບຂັ້ນຕອນ ແລະ ການເບິ່ງເຫັນສິ່ງທີ່ຈະເກີດຂຶ້ນ( knowledge of sequence and fiends )

ລັກສະນະການ ຖາມ

- ຖາມເຫດການວ່າອັນໃດເກີດກ່ອນ-ຫຼັງ
- ຖາມໃຫ້ລະດັບເຫດການຂອງເລື່ອງທີ່ເກີດຂຶ້ນ
- ຖາມໃຫ້ລະດັບຄວາມສຳຄັນຂອງຫຼາຍໆສິ່ງ
- ຖາມເຫດການຕ່າງໆທີ່ເກີດຂຶ້ນໃນອະດີດວ່າມີຄວາມເປັນມາແນວໃດ

ຕົວຢ່າງ

1.ນາຍົກລັດຖະມົນຕີຄົນທຳອິດຂອງປະເທດ ສ. ປ. ປ. ລາວຊື່ວ່າແນວໃດ?
2. ຄອງຂໍ້ທຳອິດເວົ້າເຖິງຫຍັງ?
3. ຄົນທີ່ສູບຢາຫຼາຍມັກຈະເປັນພະຍາດຫຍັງ?

- ຄວາມຮູ້ກ່ຽວກັບຈຳແນກປະເພດ ( knowledge of classification and catteries )
  ລັກສະນະການຖາມ
  - ຖາມໃຫ້ຈັກຊະນິດ, ປະເພດ, ໝວດໝູ່ຂອງຄຳ ຫຼື ຂໍ້ຄວາມທີ່ກຳນົດໃຫ້
  - ຖາມໃຫ້ບອກຊື່ຂອງຄຳ ຫຼື ຂໍ້ຄວາມທີ່ຈັດຢູ່ໃນປະເພດ ຫຼື ໝວດດຽວກັນກັບຄຳທີ່ກຳນົດໃຫ້

ຕົວຢ່າງ

1 .ຄຳວ່າເຈົ້າແມ່ນຄຳລາວປະເພດໃດ ?

ກ. ຄຳກຳມະ ຂ. ຄຳນາມ
ຄ. ຄຳຄຸນນາມ ງ. ຄຳແທນນາມ

2. ສະຫຼະໃດຕໍ່ໄປນີ້ຂໍ້ໃດຈັດໃນໝວດສະຫຼະລອຍ ?

ກ. ຯ ຂ. ×ະ
ຄ. ×ິ ງ. ×ີ

**3.1.3 ຄວາມຮູ້ໃຈຄວາມຂອງເລື່ອງ** (knowledge of the universals and abstractions in a field)

- ຄວາມຮູ້ກ່ຽວກັບຫຼັກວິຊາການ ແລະ ການຂະຫຍາຍ( Know ledge of principles and generalizations )

ລັກສະນະການຖາມ

- ໃຫ້ບອກຄະຕິ ຫຼື ຫົວໃຈບົດເລື່ອງ
- ຖາມໃຫ້ນຳເອົາຫຼັກການນັ້ນໆໄປພົວພັນເລື່ອງອື່ນໆ

ຕົວຢ່າງ

1. ຈຳນວນຂອງຜູ້ແທນລາຊະດອນຢູ່ແຕ່ລະແຂວງຂອງລາວຂຶ້ນກັບອັນໃດ?
2. ທຸກໆສາສະໜາຈະສອນຄົນໃຫ້ເປັນແນວໃດ?
3. ຍີ່ປຸ່ນ, ຟີລິບປິນ ແລະ ອິນໂດເນເຊຍມີສິ່ງໃດແຕກຕ່າງກັບລາວຫຼາຍທີ່ສຸດ? ( ອາຫານ, ສາສະໜາ, ພູມີປະເທດ, ວັດທະນະທຳ )

- ຄວາມຮູ້ກ່ຽວກັບທິດສະດີ ແລະໂຄງສ້າງ (knowledge of theories and structures )

ລັກສະນະການຖາມ

- ຖາມເພື່ອຮູ້ວ່ານັກຮຽນສາມາດລະນຶກ ແລະ ນຳຄວາມສຳພັນຈາກທິດສະດີ ແລະ ຫຼັກວິຊາ ຕ່າງໆມາສະຫຼຸບເປັນເນື້ອໃນໃຫຍ່ດຽວກັນ ຫຼືບໍ່

ຕົວຢ່າງ

1. ຮູບສາມແຈສະເໝີ, ຮູບດອກຈັນ ແລະຮູບຈະຕຸລັດ ມີຄຸນລັກສະນະຄືກັນຄືຂໍ້ໃດ?
   ( ມູມ, ຂ້າງ, ເນື້ອທີ່, ຂະໜາດ )
2. ຕົ້ນເຂົ້າ, ຕົ້ນໄຜ່ ແລະຕົ້ນຫຍ້າເປັນພຶດປະເພດດຽວກັນຍຶດສິ່ງໃດເປັນຫຼັກ? ( ອາຍຸ. ຮາກ, ບ່ອນຢູ່, ຂະໜາດ )

**3.2 ການຂຽນຂໍ້ສອບວັດຄວາມເຂົ້າໃຈ ( comprehension )**

**3.2.1 ການແປຄວາມໝາຍ (translation )**

ລັກສະນະການຖາມ

- ຖາມໃຫ້ແປຄວາມໝາຍຂອງຮູບພາບ ແລະວັດຖຸສິ່ງຂອງ
- ຖາມໃຫ້ແປຄວາມໝາຍຂອງສັນຍາລັກ, ສູດ, ກົດເກນ, ກຼາຟ ແລະຕາຕະລາງຕົວເລກ
- ໃຫ້ແປຄວາມໝາຍຂອງພຶດຕິກຳ ແລະປະກົດການ

ຕົວຢ່າງ

1. ອົ້ມສົ້ມໄວ້ກິນຫວານໝາຍຄວາມວ່າແນວໃດ?

| | |
|---|---|
| ກ. ຄວາມດຸໝັ່ນຂະຫຍັນພຽນ | ຂ. ຄວາມອົດທົນພະຍາມ |
| ຄ. ຄວາມສາມັກຄີປອງດອງ | ງ. ຄວາມຮັກ |

2. ໄປຢຽບໝາ ມາຢຽບຂຽດມີຄວາມໝາຍວ່າແນວໃດ ?

| | |
|---|---|
| ກ. ຕື່ນເດິກລຸກເຊົ້າ | ຄ. ຄວາມດຸໝັ່ນ |
| ຂ. ບໍ່ມີກຽດ | ງ. ຄວາມຮັບຜິດຊອບວຽກງານໜັກ |

4. ເດັກນ້ອຍນັກຮຽນ 2 ຄົນມີເງິນລວມກັນທັງໝົດ 12 ກີບຜູ້ເປັນອ້າຍມີຫຼາຍກວ່ານ້ອງ 2 ເທົ່າ ຈາກຂໍ້ຄວາມນີ້ຂຽນເປັນສົມຜົນໄດ້ແນວໃດ ?

| | |
|---|---|
| ກ. $x + x = 12$ | ຂ. $2x - x = 12$ |
| ຄ. $12 - x = 12$ | ງ. $2x + x = 12$ |

### 3.2.2 ການຕີຄວາມ ( Inter pretation )

ລັກສະນະການຖາມ

- ໃຫ້ຕີຄວາມໝາຍຂອງເລື່ອງລາວທັງໝົດອອກມາໃນແງ່ມູມຕ່າງໆ
- ໃຫ້ຄົ້ນຫາຈຸດປະສົງ, ຄວາມເຊື່ອ ຫຼື ຄະຕິນິຍົມຂອງຜູ້ແຕ່ງ
- ໃຫ້ແປຫຍໍ້ເລື່ອງລາວຕ່າງໆອອກມາເປັນຂໍ້ສະຫຼຸບ

ຕົວຢ່າງ

1. ຈາກຂໍ້ຄວາມ " ຂ້າພະເຈົ້າບໍ່ຮູ້ວ່າຈະຕອບແທນບຸນຄຸນຂອງພວກທ່ານໄດ້ແນວໃດ " ຜູ້ເວົ້າມີຄວາມຮູ້ສຶກຕໍ່ຜູ້ຟັງແນວໃດ?
2. ຄົນຜູ້ນີ້ໄປເຮັດວຽກໃດກໍ່ບໍ່ປະສົບຜົນເລັດສະແດງວ່າຄົນຜູ້ນີ້ເປັນແນວໃດ?

### 3.2.3 ການຂະຫຍາຍຄວາມ ( Extrapolation )

ລັກສະນະການຖາມ

- ການຄາດຄະເນເລື່ອງລາວກ່ອນທີ່ຈະເກີດເລື່ອງນີ້ ຫຼື ຫຼັງເກີດເລື່ອງນີ້
- ຖາມໂດຍສົມມຸດສະຖານະການຂຶ້ນ
- ເຝິກໃຊ້ຂໍ້ແທ້ຈິງສ່ວນຍ່ອຍໄປຄາດຄະເນສ່ວນໃຫຍ່ຢ່າງມີເຫດຜົນ

ຕົວຢ່າງ

1. ຖ້າປະຊາຊົນລາວບໍ່ນັບຖືສາສະໜາພຸດຕໍ່ໄປສາສະໜາພຸດຈະເປັນແນວໃດ ?
2. ຖ້າດວງອາທິດຢູ່ຫ່າງອອກຈາກໂລກອີກ ໂລກເຮົາຈະເປັນແນວໃດ?
3. ເມື່ອອັດຕາເງິນຕ່າງປະເທດແຂງໂຕກິດຈະການປະເພດໃນປະເທດລາວໃດຈະຂຶ້ນລາຄາທັນທີ?

    ກ. ກໍ່ສ້າງ　　　　ຂ. ຄ້າຂາຍຍ່ອຍ

    ຄ. ລົດໂດຍສານ　　　　ງ. ຈັກສານ

4. ເລົ່າເລື່ອງໃຫ້ຟັງແຕ່ບໍ່ຈົບແລ້ວຖາມວ່າ: " ເຫດການຕໍ່ໄປນີ້ຈະເປັນແນວໃດ " ...............
5. " ຊ່ວຍແດ່ ! ຊ່ວຍແດ່ ! ລູກຂ້ອຍຕົກນໍ້າ " ຈາກຂໍ້ຄວາມນີ້ ຜູ້ເວົ້າມີລັກສະນະແນວໃດ?

    ກ. ຕົກໃຈ　　　　ຂ. ເສຍໃຈ

    ຄ. ຕື່ນຕົ້ນໃຈ　　　　ງ. ຕົກຂະໜ່າ

### 3.3 ການຂຽນຂໍ້ສອບວັດການນຳໄປໃຊ້ ( Application )

ລັກສະນະການຖາມ

- ນຳຫຼັກການ, ກົດເກນ, ວິທີດຳເນີນການຂອງເລື່ອງນັ້ນໄປແກ້ບັນຫາໃນທຳນອງດຽວກັນ
- ບັນຫາຕ້ອງໃໝ່ແປກໄປຈາກເດີມທີ່ຄູສອນ
- ແກ້ບັນຫາຂໍ້ໂຈດແບບເຝິກຫັດທາງຫຼາຍທີ່ບໍ່ເຄີຍເຮັດມາກ່ອນ

( ຖ້າເຄີຍເຮັດມາກ່ອນແມ່ນຄຳຖາມທີ່ເນັ້ນຄວາມຮູ້, ຄວາມຈຳ ກ່ຽວກັບວິທີການ )

ຕົວຢ່າງ

1. ການປອກເປືອກໝາກມ່ວງຄວນໃຊ້ມີດຊະນິດໃດ? ( ມີດບາງ )
2. ຖ້ານັກຮຽນຫຼົງທາງຢູ່ໃນປ່າຈະອາໄສສິ່ງໃດໃນການຊອກຫາທິດ?

    ກ. ລົມ　　　　ຄ. ດວງອາທິດ

    ຂ. ເມກ　　　　ງ. ທາງສັດ

3. ຄຳເວົ້າໃດທີ່ມີລັກສະນະປະຊາທິປະໄຕ?

    ກ. ໃຜຈະເຮັດແດ່　　　　ຂ. ຊ່ວຍເຮັດແດ່

ຄ. ຢ່າເຮັດແນວນີ້ ງ. ຫ້າມທຸກຄົນເຮັດ

### 3.4 ການຂຽນຂໍ້ສອບວັດການວິເຄາະ ( Analysis )

#### 3.4.1 ການວິເຄາະຄວາມສຳຄັນ ( analysis of element )

ລັກສະນະການຖາມ

- ໃຫ້ຄົ້ນຫາລັກສະນະທີ່ເດັ່ນ ຫຼື ຫາມູນເຫດຕົ້ນກຳເນີດ , ສາເຫດ, ຜົນລັບ ແລະ ຄວາມສຳຄັນທັງປວງຂອງເລື່ອງຕ່າງໆ
- ຕອນໃດເປັນສົມມຸດຖານ ຫຼື ຕອນໃດເປັນສະຫຼຸບຜົນ ຫຼື ເປັນຄຳອ້າງອີງສະໜັບສະໜູນ

ຕົວຢ່າງ

1. ສາເຫດທີ່ເຮັດໃຫ້ໄວ້ໜຸ່ມມີການພົວພັນກັບສິ່ງເສບຕິດ ?
2. ພູທີ່ສູງທີ່ສຸດໃນລາວແມ່ນພູຫຍັງ?

ກ. ພູພຽງ ຄ. ພູເບ້ຍ

ຂ. ພູກູດ ງ. ພູກະແຕ

3. ອັນໃດແມ່ນສາເຫດສຳຄັນທີ່ສຸດຂອງຄວາມຕຸ້ຍ?

ກ. ການກິນອາຫານ ຄ. ການເຮັດວຽກຜິດປົກກະຕິຂອງຕ່ອມ

ຂ. ການອອກກຳລັງກາຍ ງ. ການນົນເຜົາຜານອາຫານຂອງຮ່າງກາຍ

#### 3.4.2 ວິເຄາະຄວາມສຳພັນ ( analysis of relationship )

ລັກສະນະການຖາມ

- ຄວາມສຳພັນລະຫວ່າງເລື່ອງກັບເລື່ອງ
- ຄວາມສຳພັນລະຫວ່າງຫຼາຍໆຂໍ້ປົກຍ່ອຍກັບເລື່ອງທັງໝົດ
- ຄວາມສຳພັນລະຫວ່າງຂໍ້ປົກຍ່ອຍກັບຂໍ້ປົກຍ່ອຍ

-ຄວາມສຳພັນທາງດຽວກັນ ( ແພດ - ພະຍາບານ )

- ຄວາມສຳພັນທາງກົງກັນຂ້າມ ( ຫຼາຍ- ໜ້ອຍ )

ຕົວຢ່າງ

1. ສອງສິ່ງໃດຕໍ່ໄປນີ້ສຳພັນກັນຫຼາຍທີ່ສຸດ?

ກ. ດິນກັບຄົນ ຄ. ສັດກັບພືດ

ຂ. ຄົນກັນສັດ ງ. ພືດກັບນ້ຳ

2. ສອງສິ່ງໃດບໍ່ມີການພົວພັນກັນ?

ກ. ລັດສະໝີກັບວົງມົນ ຂ. ລັດສະໝີກັບເມັດເຄິ່ງກາງ

ຄ. ລວງຮອບກັບເນື້ອທີ່ຂອງວົງມົນ ງ. ລວງຮອບກັບເສັ້ນຜ່າສູນກາງ

#### 3. 4.3 ການວິເຄາະຫຼັກການ ( analysis of organization principles )

ລັກສະນະການຖາມ

- ຖາມໃຫ້ຈັບເຄົ້າເລື່ອງໃຫ້ໄດ້ວ່າເລື່ອງນັ້ນອີງໃສ່ຫຼັກການໃດ
- ມີລະບຽບວິໄນໃນການຮຽບຮຽງ ແລະມີເຄົ້າໂຄງສ້າງແນວໃດ

ຕົວຢ່າງ

1. ການເຄື່ອນທີ່ຊະນິດໃດໃຊ້ຫຼັກການຜິດກັບຊະນິດອື່ນ?

ກ. ຈະຫຼວດ ຄ. ເຮືອບິນອາຍພົ່ນ

ຂ. ບັ້ງໄຟ ງ. ເຮືອບິນໝາກປິ່ນ

2. ຄຳເວົ້າທີ່ວ່າ " ວິທະຍຸເປັນເຄື່ອງມືສື່ສານທີ່ມີອິດທິພົນຫຼາຍ " ຄຳເວົ້າດັ່ງກ່າວຢຶດຫຼັກການໃດ?

ກ. ເພາະມີຈຳນວນຜູ້ຟັງຫຼາຍ

ຂ. ສາມາດສົ່ງຂ່າວໄດ້ວ່ອງໄວ

ຄ. ສາມາດອອກຂ່າວໄດ້ຕະຫຼອດເວລາ

ງ. ປະຊາຊົນມັກຟັງຫຼາຍກວ່າມັກອ່ານ

3. ການຂາຍເຄື່ອງຂອງໃນປັດຈຸບັນມັກມີຂອງແຖມ ຫຼື ຊິງໂຊກເພາະຢຶດຖືຫຼັກການໃດ?

ກ. ເພາະຂາຍຂອງໄດ້ງ່າຍ

ຂ.ປະຊາຊົນມັກສິ່ງທີ່ເປັນແຮງຈູງໃຈ

ຄ. ສາມາດຂາຍອອກໄດ້ຕະຫຼອດເວລາ

ງ. ປະຊາຊົນມັກຂອງແຖມ

### 3.5 ການຂຽນຂໍ້ສອບວັດການສັງເຄາະ ( synthesis )

#### 3.5.1 ສັງເຄາະຂໍ້ຄວາມ ( production of a unique communication )

ລັກສະນະການຖາມ

- ໃຫ້ສະແດງຄວາມຄິດເຫັນຕໍ່ເລື່ອງລາວທີ່ກຳນົດໃຫ້
- ໃຫ້ສັງເຄາະມາເປັນຮູບພາບ
- ໃຫ້ສັງເຄາະມາເປັນຄຳເວົ້າ
- ໃຫ້ສັງເຄາະໂດຍການຂຽນ
- ໃຫ້ແຕ່ງການກອນ,ໂຄງ,ສານ, ບົດເພງ, ນິທານ ເລື່ອງອື່ນໆ
- ໃຫ້ບັນຍາຍພາບທີ່ກຳນົດໃຫ້
- ໃຫ້ວາດພາບຈາກຈິນຕະນາການ

ຕົວຢ່າງ

1. ຈົ່ງແຕ້ມຮູບກ່ຽວກັບການປົກປັກຮັກສາຊັບພະຍາກອນທຳມະຊາດ?
2. ໃຫ້ແຕ້ມກ່ຽວກັບທຸງຊາດຂອງກຸ່ມອາຊຽນ?
3. ໃຫ້ຕໍ່ຂໍ້ຄວາມຈາກປະໂຫຍກ" ສຳລັບບາງຄົນການສ້າງຄວາມຊົ່ວຍາກກວ່າຄວາມດີຍ້ອນວ່າ..................."
4. ເລື່ອງພະລັກພະລາມເປັນຕົວຢ່າງຂອງຄວາມດີຫຼາຍທີ່ສຸດແມ່ນຂໍ້ໃດ?

ກ. ຄວາມພາກພຽນ ຂ. ຄວາມເສຍສະຫຼະ

ຄ. ຄວາມກະຕັນຍູ ງ. ຄວາມເມດຕາກະລຸນາ

#### 3.5. 2 ການສັງເຄາະແຜນງານ(production of plan or proposed set of operation)

ລັກສະນະການຖາມ

- ໃຫ້ນັກຮຽນສ້າງໂຄງການ ຫຼືວາງແຜນກິດຈະກຳຕ່າງໆຕາມເງື່ອນໄຂທີ່ກຳນົດໃຫ້
- ໃຫ້ສະເໜີວິທີການກວດສອບສົມມຸດຖານ ແລະຂໍ້ຂັດແຍ່ງຕ່າງໆວ່າຈະດຳເນີນແນວໃດ
- ໃຫ້ກຳນົດຂອບເຂດ ຂອງວຽກງານ ຫຼືໂຄງການຕ່າງໆ
- ໃຫ້ວາງແຜນທີ່ຈະຄວບຄຸມ ຫຼືປ້ອງກັນຜົນເສຍທີ່ຈະເກີດຂຶ້ນ

ຕົວຢ່າງ

1. ສົມມຸດວ່ານັກຮຽນຈະໄປທັດສະນະສຶກສາຢູ່ວັດກາງນັກຮຽນຈະກຽມຫຍັງແດ່?

2. ສົມໝາຍຈັບຍູງ 10 ໂຕມາຂັງໄວ້ໃນກັບທີ່ເປັນຕາໜ່າງລອດເປັນເວລາ 2 ວັນປະກົດວ່າຍູງຕາຍໄປ 5 ໂຕ ຖ້າເຂົາຕ້ອງການຮູ້ວ່າຍູງຕາຍເພາະຂາດນໍ້າ ຫຼື ບໍ່ນັ້ນ ເຂົາຄວນເຮັດແນວໃດ?

ກ. ແຊ່ກັບໄວ້ໃນນໍ້າ ຂ. ພົ່ນນໍ້າໃນກັບໃຫ້ຊຸ່ມ

ຄ. ຕັ້ງຖັງນໍ້ານ້ອຍໆໄວ້ໃນກັບ ງ. ພົ່ນລະອອງນໍ້າໃຫ້ຍູງປຽກ

### 3.5.3 ການສັງເຄາະຄວາມສໍາພັນ ( derivation of set of abstract relation )

ລັກສະນະການຖາມ

- ຖາມໃຫ້ຜູ້ສອບລອງສະຫຼຸບເລື່ອງລາວຕ່າງໆ
- ໃຫ້ນັກຮຽນຄົ້ນຫາວ່າປະກົດການໜຶ່ງໆ ຫຼື ໃນການລາຍງານຍ່ອຍຊຸດໜຶ່ງມີເນື້ອໃນແນວໃດແດ່ທີ່ສໍາພັນກັນ
- ກໍານົດເງື່ອນໄຂໃຫ້ແລ້ວສົມມຸດໃຫ້ມີສະຖານະການອື່ນເກີດຂຶ້ນແລ້ວຖາມໃຫ້ສະຫຼຸບຂໍ້ຢຸດຕິຂອງເລື່ອງ

ຕົວຢ່າງ

1. (ກ) ສູງກວ່າ (ຂ )ແຕ່ຕໍ່າກວ່າ (ຄ) ແລະ (ງ) ສູງກວ່າ (ຄ ) ສະນັ້ນໃຜສູງທີ່ສຸດ?
2. ອາກາດຮ້ອນອົບເອົ້າກ່ອນຝົນຈະຕົກແຕ່ອາກາດບໍ່ຮ້ອນອົບເອົ້າສະຫຼຸບໄດ້ແນວໃດ?

ກ. ຈະມີລົມ ຄ. ແດດຈະອອກ

ຂ. ຟ້າຈະເຫຼື້ອມ ງ. ຝົນຈະບໍ່ຕົກ

### 3.6 ການຂຽນຂໍ້ສອບວັດການປະເມີນຄ່າ (Evaluation )

#### 3.6.1 ການປະເມີນຄ່າໂດຍອາໄສເກນພາຍໃນ

ລັກສະນະການຖາມ

- ໃຫ້ວິນິໄສວ່າບົດລາຍງານ, ເລື່ອງລາວ ຫຼື ບົດຄວາມນັ້ນມີຄຸນນະພາບໃນດ້ານຕ່າງໆສູງ-ຕໍ່າພຽງໃດ

ຕົວຢ່າງ

1. ເວລາເປັນໄຂ້ຍູງໄປຊື້ຢາກິນເອງດີ ຫຼືບໍ່?
2. ການປູກເຫັດເຟືອງໃນລະດູຝົນເຮັດໄດ້ ຫຼືບໍ່?

ກ. ໄດ້ເພາະເຫັດເຟືອງມັກນໍ້າ ຄ. ບໍ່ໄດ້ເພາະອາກາດຊຸ່ມເກີນໄປ

ຂ. ໄດ້ແຕ່ຄວນມີຫຼັງຄາກັນຝົນ ງ. ບໍ່ໄດ້ເພາະມີນໍ້າຂັງເຮັດໃຫ້ເຊື້ອເຫັດເນົ່າ

#### 3.6.2 ການປະເມີນຄ່າໂດຍໃຊ້ເກນພາຍນອກ

ລັກສະນະການຖາມ

- ໃຫ້ວິນິໄສພິຈະລະນາ ຫຼື ຕັດສິນ ໂດຍກໍານົດເກນໃຫ້

ຕົວຢ່າງ

1. ການໃຫ້ລາງວັນນັກຮຽນທີ່ຮຽນດີຂຶ້ນມີຜົນດີຕໍ່ນັກຮຽນແນວໃດ?
2. ປະເທດລາວຄວນມີນະໂຍບາຍເລື່ອງການເກີດ ຫຼືບໍ່ເພາະເຫດໃດ?

ກ. ຄວນເພາະທຸກຄົນມີລູກຫຼາຍກວ່າຄົນຮັ່ງມີ

ຂ. ຄວນເພາະປະຊາຊົນໃນເມືອງມີຄວາມໜາແໜ້ນ

ຄ. ບໍ່ຄວນເພາະຍັງມີເນື້ອທີ່ທໍາມາຫາກິນຢ່າງຫຼວງຫຼາຍ

ງ. ບໍ່ຄວນເພາະມັນຂັດຕໍ່ຄວາມຮູ້ສຶກທາງດ້ານສິນລະທໍາ

## ງານວິໄຈທີ່ກ່ຽວຂ້ອງ

ກັນລະຍາ ຊິມຊະອາດ ( 1999: ບົດຄັດຫຍໍ້ ) ໄດ້ສ້າງແບບເຝິກການອ່ານຄຳທີ່ມີຕົວສະກົດຕົງຕາມາດຕາຕົວສະກົດຂອງໄທ ສຳລັບນັກຮຽນຊັ້ນປະຖົມສຶກສາປີທີ 1 ດ້ວຍການນຳຄຳຈາກໜັງສືຮຽນປະຖົມປີທີ 1 ເປັນຄຳທີ່ມີຕົວສະກົດທັງ 9 ມາດຕາຄື ແມ່ກາ , ແມ່ ກົງ , ແມ່ ກົນ , ແມ່ເກີຍ, ແມ່ເກວ, ແມ່ກົກ, ແມ່ກົດ ແລະ ແມ່ກົບ ຈັດເຮັດແບບເຝິກ 9 ຊຸດ ກຸ່ມຕົວຢ່າງເປັນນັກຮຽນວັດສຸກໄພວັນ ຈຳນວນ 30 ຄົນ ເປັນນັກຮຽນທີ່ມີຜົນການຮຽນໃນລະດັບປານກາງ. ຜົນປະກົດວ່ານັກຮຽນທີ່ຮຽນໂດຍໃຊ້ແບບເຝິກສາມາດເຮັດແບບເຝິກທົບທວນທ້າຍແບບເຝິກແຕ່ລະຊຸດຜ່ານເກນທີ່ກຳນົດໄວ້ຄິດເປັນຮ້ອຍລະ 87,40 ແລະ ນັກຮຽນສາມາດເຮັດແບບທົດສອບວັດຜົນການຮຽນດ້ວຍແບບເຝິກຜ່ານເກນທີ່ກຳນົດໄວ້ຄິດເປັນຮ້ອຍລະ 86,66 ເຊິ່ງສູງກວ່າປະສິດທິພາບເກນມາດຕະຖານ 80/80

ກົດຕິຄຸນ ລັດຕະນະເດດກຳຈາຍ ( 1999: ບົດຄັດຫຍໍ້ )ໄດ້ວິໄຈ ຜົນການຮຽນວິຊາ ພາສາໄທ ເລື່ອງມາດຕາຕົວສະກົດຂອງນັກຮຽນຊັ້ນປະຖົມປີທີ 3 ທີ່ສອນໂດຍໃຊ້ແບບເຝິກເສີມທັກສະ ກັບສອນໂດຍວິທີປົກກະຕິ ເຄື່ອງມືທີ່ໃຊ້ໃນການວິໄຈໄດ້ແກ່ແຜນການສອນຂອງກຸ່ມທົດລອງ ແລະ ກຸ່ມຄວບຄຸມ ແບບເຝິກເສີມທັກສະມາດຕາຕົວສະກົດຂອງນັກຮຽນປະຖົມປີທີ 3ແບບທົດສອບວັດຜົນເລື່ອງ ມາດຕາຕົວສະກົດ ແລະ ແບບສອບຖາມຄວາມຄິດເຫັນຂອງວິທີທັງ2 ກຸ່ມຕົວຢ່າງທັງໝົດ 60 ຄົນ. ຜົນການວິໄຈພົບວ່າແບບເຝິກເສີມທັກສະມີປະສິດທິມາດຖານສູງກວ່າເກນທີ່ກຳນົດໄວ້ 80/80 ຄື 92,29/80,17 ຜົນຮຽນການຮຽນພາສາໄທ ເລື່ອງມາດຕາຕົວສະກົດທີ່ສອນໂດຍການໃຊ້ແບບເຝິກທັກສະແມ່ນມີຄວາມແຕກຕ່າງກັນກັບຜົນການຮຽນທີ່ໃຊ້ວິທີສອນປົກກະຕິຢ່າງສິ້ນເຊີງ.

ເບົາວະລັດ ຊື່ນມະນີ ( 1997: ບົດຄັດຫຍໍ້ ) ໄດ້ສຶກສາການພັດທະນາແບບເຝິກທັກສະພາສາໄທ ເລື່ອງ ປັດຫາຍ ສຳລັບນັກຮຽນຊັ້ນປະຖົມປີທີ 2 ໂຮງຮຽນບ້ານ ສາລາພູມ ຈຳນວນ 30 ຄົນ. ໂດຍມີຈຸດມຸ່ງໝາຍເພື່ອພັດທະນາແບບເຝິກທັກສະພາສາໄທສະກົດຄຳຍາກເລື່ອງ ເປັດຫາຍສຳລັບນັກຮຽນປະຖົມປີທີ 2 ໃຫ້ໄດ້ມາດຖານ 80/80 ແລະ ປຽບທຽບຜົນການຮຽນຂອງນັກຮຽນກ່ອນ ແລະ ຫຼັງ ໂດຍໃຊ້ແບບເຝິກທັກສະພາສາໄທສະກົດຄຳເລື່ອງເປັດຫາຍ ມີປະສິດທິພາບ 85,96/81,00 ເຊິ່ງສູງກວ່າເກນມາດຖານທີ່ກຳນົດໄວ້ 80/80 ແລະ ນັກຮຽນທີ່ຮຽນດ້ວຍແບບເຝິກທັກສະສະກົດຄຳຍາກສຳລັບນັກຮຽນປະຖົມປີທີ 2 ແມ່ນຜົນການຮຽນຫຼັງສູງກວ່າກ່ອນການຮຽນ.

ພະນົມວັນ ວໍຣະດົນ (1999: ບົດຄັດຫຍໍ້) ໄດ້ສຶກສາການສ້າງແບບເຝິກຫັດການຂຽນສະກົດຄຳຂອງນັກຮຽນຊັ້ນປະຖົມສຶກສາປີທີ 2 ກຸ່ມຕົວຢ່າງເປັນນັກຮຽນຊັ້ນປະຖົມສຶກສາປີທີ 2 ຈຳນວນ 30 ຄົນໃຊ້ເວລາໃນການທົດລອງ 4 ອາທິດ, ອາທິດລະ 5 ມື້, ມື້ລະ 3 ຄາບ (ຄາບລະ 20 ນາທີ) ຜົນການສຶກສາພົບວ່າ:ແບບເຝິກຫັດການຂຽນສະກົດຄຳທີ່ຜູ້ວິໄຈສ້າງຂຶ້ນເອງມີປະສິດທິພາບຕາມເກນຄວາມສຳພັນລະຫວ່າງກະບວນການ (E1) ແລະຜົນລັບ (E2) ມີຄ່າສະເລ່ຍເທົ່າກັບ 85.74 / 82.11 ເຊິ່ງສູງກວ່າເກນທີ່ຕັ້ງໄວ້ເທົ່າກັບ 80 / 80 ແລະ ຜົນສຳເລັດທາງການຮຽນດ້ານການຂຽນສະກົດຄຳກ່ອນ ແລະ ຫລັງການໃຊ້ແບບເຝິກຫັດຂຽນສະກົດຄຳພົບວ່າ:ຜົນສຳເລັດການຂຽນສະກົດຄຳຫຼັງໄດ້ຮັບການສອນດ້ວຍແບບເຝິກຫັດການຂຽນສະກົດຄຳສູງກວ່າກ່ອນໄດ້ຮັບການສອນດ້ວຍແບບເຝິກຫັດການຂຽນສະກົດຄຳ.

ສົມໃຈ ນາກສີສັງ (2006: ບົດຄັດຫຍໍ້) ໄດ້ສຶກສາຄົ້ນຄວ້າ ເລື່ອງ: ການສ້າງແບບເຝິກການອ່ານແລະ ຂຽນສະກົດຄຳຈາກແຫລ່ງຮຽນຮູ້ໃນທ້ອງຖິ່ນ ຊັ້ນປະຖົມສຶກສາທີປີ 4 ໂຮງຮຽນຕະຫລາດເກາະແລດ ສຳນັກງານເຂດພື້ນທີ່ການສຶກສານະຄອນປະຖົມເຂດ 2 ໃນປີການສຶກສາ 2549 ຈຳນວນ 21 ຄົນ ພົບວ່າ: ຜົນສຳເລັດທາງການຮຽນສູງຂຶ້ນກວ່າເປົ້າໝາຍທີ່ກຳໜົດໄວ້ ແບບເຝິກທັກສະມີປະສິດທິພາບ 83.98/84.46 ແລະ ຜົນການປະເມີນຄວາມເພິ່ງພໍໃຈຂອງນັກຮຽນທີ່ມີຕໍ່ແບບເຝິກທັກສະໂດຍພາບລວມຢູ່ໃນລະດັບ ຫລາຍທີ່ສຸດ.

ຈາກງານວິໄຈດັ່ງກ່າວມາແລ້ວສະຫຼຸບໄດ້ວ່າການໃຊ້ແບບເຝິກການອ່ານຄຳສັບໃນການຮຽນການສອນເລື່ອງການອ່ານຄຳສັບນັ້ນຊ່ວຍໃຫ້ນັກຮຽນມີຄວາມຊຳນິຊຳນານ ແລະ ຄວາມສາມາດໃນການອ່ານຄຳສັບໄດ້ຖືກຕ້ອງຫຼາຍຂຶ້ນ.

# ບົດທີ 3
# ວິທີດຳເນີນການວິໄຈ

ການວິໄຈຄັ້ງນີ້ແມ່ນການວິໄຈໃນຫົວຂໍ້: ການພັດທະນາທັກສະການ ອ່ານຄຳສັບອັກສອນທຳ ໂດຍໃຊ້ແບບເຝິກທັກສະ ສຳລັບນັກສຶກສາ ລະບົບ 12+4 ປີທີ2 ສາຍ ພາສາລາວ ໂດຍມີຂັ້ນຕອນໃນການດຳເນີນດັ່ງນີ້:

1. ລະບຽບວິທີການວິໄຈ
2. ກຳນົດປະຊາກອນ ແລະ ກຸ່ມຕົວຢ່າງ
3. ກຳນົດເຄື່ອງມືທີ່ໃຊ້ໃນການວິໄຈ
4. ການສ້າງ ແລະ ຫາຄຸນນະພາບຂອງເຄື່ອງມື
5. ການເກັບລວບລວມຂໍ້ມູນ
6. ການວິເຄາະຂໍ້ມູນ ແລະ ສະຖິຕິທີ່ໃຊ້

## ລະບຽບວິທີການວິໄຈ

ການວິໄຈຄັ້ງນີ້ເປັນການວິໄຈແບບ One Group Pre-test Post-test Design ໂດຍມີລັກສະນະການວິໄຈດັ່ງຕາຕະລາງທີ 1

ຕາຕະລາງທີ 3.1: ແບບແຜນການວິໄຈແບບ One Group Pre-test Post-test Design

| ກຸ່ມ | Pre-test | Treatment | Post-test |
|---|---|---|---|
| ຕົວຢ່າງ | $T_1$ | X | $T_2$ |

T1 ໝາຍເຖິງການທົດສອບກ່ອນຮຽນ (Pre-test)

X ໝາຍເຖິງ ການຈັດກິດຈະກຳການຮຽນຮູ້ການອ່ານຄຳສັບອັກສອນທຳໂດຍໃຊ້ແບບເຝິກທັກສະ.

T2 ໝາຍເຖິງ ການທົດສອບຫລັງຮຽນ (Post-test)

## ປະຊາກອນ ແລະ ກຸ່ມຕົວຢ່າງ

### 1. ການກຳນົດປະຊາກອນ

ປະຊາກອນທີ່ໃຊ້ໃນການສຶກສາຄັ້ງນີ້ແມ່ນ ນັກສຶກສາສາຍ ພາສາລາວ ປີທີ 2 ພາກຮຽນທີ 1 ສົກປີ 2019ວິທະຍາໄລຄູສາລະວັນ ມີນັກຮຽນທັງໝົດ 26 ຄົນ.

### 2. ການກຳນົດກຸ່ມຕົວຢ່າງ

ກຸ່ມຕົວຢ່າງທີ່ໃຊ້ໃນການສຶກສາຄັ້ງນີ້ແມ່ນ ນັກສຶກສາສາຍ ພາສາລາວ ປີທີ 2 ພາກຮຽນທີ 1 ສົກປີ 2019 ວິທະຍາໄລຄູສາລະວັນຈຳນວນ 26 ຄົນເຊິ່ງໄດ້ຈາກການສຸ່ມເລືອກແບບເຈາະຈົງ (Purposive Sam pling).

## ເຄື່ອງມືທີ່ໃຊ້ໃນການວິໄຈ

### 1. ເຄື່ອງມືທີ່ໃຊ້ໃນການວິໄຈ

ເຄື່ອງມືທີ່ໃຊ້ໃນການວິໄຈປະກອບດ້ວຍ:

1.1 ແບບເຝິກທັກສະການອ່ານຄຳສັບອັກສອນທຳ ຈຳນວນ 5 ຊຸດ

### 2. ເຄື່ອງມືທີ່ໃຊ້ໃນການເກັບລວບລວມຂໍ້ມູນ

2.1 ແບບທົດສອບວັດຜົນສຳເລັດການອ່ານອັກສອນທຳຂອງນັກສຶກສາສາຍ ພາສາລາວ ປີທີ 2 ແບບທົດສອບແບບປາລະໄນຈຳນວນ 10 ຂໍ້.

## ການສ້າງ ແລະ ຫາຄຸນນະພາບຂອງເຄື່ອງມື

### 1. ແບບເຝິກທັກສະການອ່ານຄຳສັບອັກສອນທຳ ຈຳນວນ 5 ຊຸດ.

1.1 ສຶກສາເອກະສານ ແລະ ງານວິໄຈທີ່ກ່ຽວຂ້ອງກັບສ້າງແບບເຝິກທັກສະການອ່ານຄຳສັບ

1.2.ສຶກສາແບບຮຽນ ແລະ ຫຼັກສູດພື່ອອອກແບບຕາມຫຼັກສູດ

1.3 ດຳເນີນການສ້າງແບບເຝິກທັກສະການອ່ານຄຳສັບອັກສອນທຳ

**1.4** ນຳແບບເຝິກທັກສະການອ່ານຄຳສັບອັກສອນທຳສະເໜີຕໍ່ອາຈານທີ່ປຶກສາ

**1.5** 1 ປັບປຸງແກ້ໄຂຕາມຂໍ້ສະເໜີແນະ

**1.6** ນຳແບບເຝິກທັກສະການອ່ານຄຳສັບອັກສອນທຳສະບັບຮ່າງໃຫ້ຜູ້ຊ່ຽວຊານກວດດ້ານເນື້ອໃນຫາຈຳນວນ 3 ທ່ານ ກວດສອບຄວາມທ່ຽງກົງຕາມເນື້ອໃນ (**content validity**) ໂດຍຫາຄ່າດັດນີຄວາມສອດຄ່ອງ (**index of congruence: IOC**) ແລະ ຄວາມເໝາະສົມຂອງພາສາທີ່ໃຊ້ໃນຄຳຖາມ

$$\text{IOC} = \frac{\sum R}{N}$$

IOC = ຄ່າດັດນີຄວາມສອດຄ່ອງລະຫວ່າງຂໍ້ຄຳຖາມກັບຈຸດປະສົງ

$\sum R$ = ຜົນລວມຂອງຄະແນນຄວາມຄິດເຫັນຂອງຜູ້ຊ່ຽວຊານ

$N$ = ຈຳນວນຜູ້ຊຽວຊານ

**1.7** ຄັດເລືອກແບບເຝິກຫຼາຍຂໍ້ທີ່ມີຄ່າດັດນີຄວາມສອດຄ່ອງ (**IOC**) ຢູ່ລະຫວ່າງ 0.60 ຂຶ້ນໄປ ແລະ ປັບປຸງແກ້ໄຂຕາມຂໍ້ສະເໜີແນະຂອງຜູ້ຊ່ຽວຊານດ້ານເນື້ອໃນ

**1.8** ນຳແບບເຝິກທັກສະການອ່ານຄຳສັບອັກສອນທຳໄປໃຊ້ກັບນັກ ຮຽນທີ່ບໍ່ແມ່ນກຸ່ມຕົວຢ່າງຄື: ນັກສຶກສາ ສາຍພາສາລາວ ປີທີ 2 ຫ້ອງ ຂ ຈຳນວນ 15 ຄົນເພື່ອເບິ່ງເວລາທີ່ໃຊ້, ຄວາມເໝາະສົມຂອງແບບເຝິກ, ຄວາມສົນໃຈຂອງຜູ້ຮຽນ ແລະ ຄວາມສອດຄ່ອງກັບເນື້ອຫາ.

1.9 ນຳແບບເຝິກທັກສະການອ່ານຄຳສັບອັກສອນທຳ ໄປໃຊ້ໃນການວິໄຈທີ່ຜ່ານການປັບປຸງແກ້ໄຂແລ້ວໄປນຳໃຊ້ກັບກຸ່ມຕົວຢ່າງຄື: ນັກສຶກສາ ສາຍ ພາສາລາວ ປີທີ 2 ພາກຮຽນທີ 1 ສົກປີ 2019ວິທະຍາໄລຄູສາລະວັນ ຈຳນວນ 26 ຄົນ.

### 2. ການສ້າງແບບທົດສອບວັດຜົນສຳເລັດທາງການຮຽນເລື່ອງ: ການອ່ານຄຳສັບອັກສອນທຳ ໂດຍໃຊ້ແບບເຝິກທັກສະ ຜູ້ວິໄຈຈະໄດ້ດຳເນີນຕາມລຳດັບດັ່ງນີ້ :

2.1 ສຶກສາແນວຄິດ, ທິດສະດີ, ຫຼັກເກນ ແລະ ວິທີສ້າງແບບທົດສອບວັດຜົນສຳເລັດຈາກເອກະສານທີ່ກ່ຽວຂ້ອງ.

2.2 ສຶກສາຫຼັກສູດ, ແບບຮຽນ ແລະ ເອກສານຕ່າງໆກ່ຽວກັບວິຊາ ອັກສອນທຳ.

2.3 ກຳນົດເນື້ອໃນ ແລະ ຈຸດປະສົງການຮຽນຮູ້ໃຫ້ສອດຄ່ອງກັບເນື້ອໃນ.

2.4 ສ້າງແບບທົດສອບວັດຜົນສຳເລັດທາງການຮຽນ ແບບປາລະໄນ ຊະນິດເລືອກຕອບ 3 ຕົວເລືອກຈຳນວນ 1ຂໍ້.

2.5 ນຳແບບທົດສອບທີ່ສ້າງຂຶ້ນ ສະເໜີຜູ້ໃຫ້ຜູ້ຊ່ຽວຊານ 3 ທ່ານ ເພື່ອພິຈາລະນາຄວາມທ່ຽງກົງຕາມເນື້ອຫາ, ຄວາມເໝາະສົມຂອງພາສາທີ່ໃຊ້ ແລະ ຄວາມເໝາະສົມຂອງພາສາທີ່ໃຊ້ໃນຄຳຖາມໂດຍຫາຄ່າດັດນີຄວາມສອດຄ່ອງ (**index of congruence: IOC)**

2.6 ຄັດເລືອກແບບທົດສອບຫຼາຍຂໍ້ທີ່ມີຄ່າດັດນີຄວາມສອດຄ່ອງ (**IOC**) ຢູ່ລະຫວ່າງ0.60 ຂຶ້ນໄປ ແລະ ປັບປຸງແກ້ໄຂຕາມຂໍ້ສະເໜີແນະຂອງຜູ້ຊ່ຽວຊານດ້ານເນື້ອຫາໂດຍຄັດເອົາພຽງແຕ່ 10ຂໍ້ ຈາກ 15 ຂໍ້.

2.8 ນຳແບບທົດສອບທີ່ຜ່ານການປັບປຸງແກ້ໄຂແລ້ວໄປນຳໃຊ້ກັບກຸ່ມຕົວຢ່າງຄື:ນັກສຶກສາ ສາຍພາສາລາວ ລະບົບ 12+4 ປີທີ 2 ຈຳນວນ 26 ຄົນ.

# ການເກັບລວບລວມຂໍ້ມູນ

1.ທົດສອບກ່ອນຮຽນ (Pre-test) ດ້ວຍແບບທົດສອບວັດຜົນສຳເລັດທາງການຮຽນ ເລື່ອງ: ການອ່ານຄຳສັບອັກສອນທຳທີ່ສ້າງຂຶ້ນຈຳນວນ 10 ຂໍ້.

2. ດຳເນີນການຈັດກິດຈະກຳການຮຽນຮູ້ ຕາມແຜນການຈັດການຮຽນຮູ້ ລະຫວ່າງການຈັດກິດຈະກຳການຮຽນ - ການສອນ ມີການບັນທຶກຄະແນນຄະແນນການເຮັດກິດຈະກຳກຸ່ມ ແລະ ການເຮັດແບບເຝິກໄວ້ທຸກຄັ້ງ.

3.ເມື່ອດຳເນີນການສອນຄົບທຸກແຜນແລ້ວເຮັດການທົດສອບວັດຜົນສຳເລັດທາງການຮຽນ ຫຼັງການຮຽນ (Post-test) ກັບນັກຮຽນກຸ່ມຕົວຢ່າງ ໂດຍໃຊ້ແບບທົດສອບຊຸດເດີມກັບກ່ອນຮຽນ.

# ການວິເຄາະຂໍ້ມູນ ແລະ ສະຖິຕິທີ່ໃຊ້

## 1. ການວິເຄາະຂໍ້ມູນ

ໃນການວິເຄາະຂໍ້ມູນຜູ້ວິໄຈຈະໄດ້ດຳເນີນຕາມຂັ້ນຕອນດັ່ງນີ້:

1.1 ວິເຄາະຫາປະສິດທິພາບຂອງແບບເຝິກການອ່ານຄຳສັບອັກສອນທຳໂດຍໃຊ້ແບບເຝິກຕາມເກນ 75/75ເຊິ່ງຈະໄດ້ວິເຄາະຕາມສູດການຫາຄ່າ $E_1$ / $E_2$

1.2 ວິເຄາະປຽບທຽບຜົນຄະແນນຈາກການທົດສອບລະຫວ່າງຮຽນ, ກ່ອນຮຽນກັບຫຼັງຮຽນໂດຍໃຊ້ **t – test** ແບບ**Dependent sample.**

1.3 ວິເຄາະຄ່າດັດຊະນີປະສິດທິຜົນຂອງແບບເຝິກທັກສະການອ່ານຄຳສັບອັກສອນທຳ(EI: The effectivenesss index)

## 2. ສະຖິຕິທີ່ໃຊ້ໃນການວິເຄາະຂໍ້ມູນ

### 2.1 ສະຖິຕິທີ່ໃຊ້ໃນການຫາຄຸນນະພາບຂອງເຄື່ອງມື

ສະຖິຕິທີ່ໃຊ້ໃນການຫາຄຸນນະພາບຂອງເຄື່ອງມືມີດັ່ງນີ້:

2.1.1 ຫາຄວາມທ່ຽງກົງຂອງເຄື່ອງມືໂດຍໃຊ້ສູດດັດນີຄ່າຄວາມສອດຄ່ອງ IOC

### 2.2 ສະຖິຕິທີ່ໃຊ້ໃນການບັນຍາຍຂໍ້ມູນ

ສະຖິຕິທີ່ໃຊ້ໃນການບັນລະຍາຍຂໍ້ມູນໂດຍໃຊ້ໂປແກມສຳເລັດຮູບທາງສະຖິຕິມີດັ່ງນີ້:

2.2.1 ຄ່າສ່ວນຮ້ອຍ (Percentage)

ສູດ $$P = \frac{f}{N} \times 100$$

ເມື່ອ $P$ ແທນ ສ່ວນຮ້ອຍ

$f$ ແທນ ຄວາມຖີ່ທີ່ຕ້ອງການແປງໃຫ້ເປັນສ່ວນຮ້ອຍ

$N$ ແທນ ຈຳນວນຄວາມຖີ່ທັງໝົດ

**2.2 ຄ່າສະເລ່ຍ (Mean)**

ສູດ $$\overline{X} = \frac{\sum X}{N}$$

ເມື່ອ $\overline{X}$ ແທນ ຄ່າສະເລ່ຍ

$\sum X$ ແທນ ຜົນລວມຄະແນນທັງໝົດໃນກຸ່ມ

$N$ ແທນ ຈຳນວນນັກຮຽນ

**2.3 ການຄິດໄລ່ຫາປະສິດທິພາບ**

ການຄິດໄລ່ຫາປະສິດທິພາບຂອງກະບວນການ ($E_1$) ແລະ ປະສິດທິພາບຂອງຜົນລັບ ($E_2$) ມີວິທີການຄິດໄລ່ດັ່ງນີ້:

1. ການຄິດໄລ່ຫາປະສິດທິພາບຂອງກະບວນການ ($E_1$)

$$E_1 = \frac{\frac{\sum X_1}{N}}{A} \times 100$$

ເມື່ອ $E_1$ ແທນ ປະສິດທິພາບຂອງກະບວນການ

$\sum X_1$ ແທນ ຄະແນນລວມຈາກການເຮັດແບບເຝິກຫັດຫລືກິດຈະກຳໃນລະຫວ່າງຮຽນຂອງຜູ້ຮຽນທຸກຄົນ

$N$ ແທນ ຈຳນວນຜູ້ຮຽນ

$A$ ແທນ ຄະແນນເຕັມຂອງແບບເຝິກຫັດຫລືກິດຈະກຳໃນລະຫວ່າງຮຽນ

2. ການຄິດໄລ່ຫາປະສິດທິພາບຂອງຜົນລັບ ($E_2$)

$$E_2 = \frac{\frac{\sum X_2}{N}}{B} \times 100$$

ເມື່ອ $E_2$ ແທນ ປະສິດທິພາບຂອງຜົນລັບ

$\sum X_2$ ແທນຄະແນນລວມຈາກການເຮັດແບບທົດສອບຫລັງຮຽນຂອງຜູ້ຮຽນທຸກຄົນ

$N$ ແທນ ຈຳນວນຜູ້ຮຽນ

$B$ ແທນ ຄະແນນເຕັມຂອງແບບທົດສອບຫລັງຮຽນ

**2.4 ການຫາຄ່າດັດນີປະສິດທິຜົນ (Effectiveness Index : E.I) ມີສູດດັ່ງນີ້**

$$\text{ດັດນີປະສິດທິຜົນ} = \frac{\text{ຜົນລວມຂອງຄະແນນຫລັງຮຽນທຸກຄົນ} - \text{ຜົນລວມຂອງຄະແນນກ່ອນຮຽນທຸກຄົນ}}{(\text{ຈຳນວນນັກຮຽນ x ຄະແນນເຕັມ}) - \text{ຜົນລວມຂອງຄະແນນກ່ອນຮຽນທຸກຄົນ}}$$

ຫຼື $E.I = \frac{p_2 - P_1}{Total - p_1}$

E.I ແທນ ດັດນີປະສິດທິຜົນ

$P_1$ ແທນ ຜົນລວມຂອງຄະແນນກ່ອນຮຽນທຸກຄົນ

$P_2$ ແທນ ຜົນລວມຂອງຄະແນນກ່ອນຮຽນທຸກຄົນ

$Total$ ແທນ ຜົນຄູນຂອງຈຳນວນຜູ້ຮຽນກັບຄະແນນເຕັມ

# ບົດທີ 4
# ຜົນການວິເຄາະຂໍ້ມູນ

ການສຶກສາຄົ້ນຄວ້າ ເລື່ອງ:ການພັດທະນາທັກສະການອ່ານຄໍາສັບອັກສອນທໍາ ສໍາລັບນັກສຶກສາ ສາຍ ພາສາລາວ ປີທີ 2 ວິທະຍາໄລຄູສາລະວັນ. ຜູ້ສຶກສາຄົ້ນຄວ້າໄດ້ດໍາເນີນການວິເຄາະຂໍ້ມູນຕາມຂັ້ນຕອນດັ່ງນີ້:

1. ສັນຍາລັກທີ່ໃຊ້ໃນການສະເໜີຜົນການວິເຄາະຂໍ້ມູນ
2. ລໍາດັບຂັ້ນຕອນໃນການນໍາສະເໜີຜົນການວິເຄາະຂໍ້ມູນ
3. ຜົນການວິເຄາະຂໍ້ມູນ

## ສັນຍາລັກທີ່ໃຊ້ໃນການສະເໜີຜົນການວິເຄາະຂໍ້ມູນ

ຜູ້ລາຍງານການວິໄຈໄດ້ກໍານົດສັນຍາລັກທີ່ໃຊ້

$\overline{X}$ ແທນ ຄ່າສະເລ່ຍ (Mean)

$\sum X$ ແທນ ຜົນລວມຄະແນນທັງໝົດໃນກຸ່ມ

$E_1$ ແທນ ປະສິດທິພາບຂອງກະບວນການ

$E_2$ ແທນ ປະສິດທິພາບຂອງຜົນລັບ

E.I ແທນ ດັດນີປະສິດທິຜົນ

N ແທນ ຈໍານວນກຸ່ມຕົວຢ່າງ (Sample Size)

## ລໍາດັບຂັ້ນຕອນໃນການນໍາສະເໜີຜົນການວິເຄາະຂໍ້ມູນ

ການວິເຄາະຂໍ້ມູນ ຜູ້ສຶກສາຄົ້ນຄວ້າໄດ້ດໍາເນີນການຕາມລໍາດັບຂັ້ນຕອນດັ່ງນີ້ :

**ຕອນທີ 1** : ຜົນການວິເຄາະຫາປະສິດທິພາບຂອງແບບເຝິກທັກສະການອ່ານຄໍາສັບອັກສອນທໍາ ຂອງນັກສຶກສາ ສາຍ ພາສາລາວ ປີທີ 2 ຕາມເກນມາດຕະຖານ 75 / 75.

**ຕອນທີ 2** : ຜົນການປຽບທຽບຜົນການຮຽນດ້ານການອ່ານຄໍາສັບອັກສອນທໍາ ລະຫວ່າງກ່ອນຮຽນ ແລະ ຫຼັງຮຽນ ໂດຍໃຊ້ແບບເຝິກ ສໍາລັບນັກສຶກສາ ສາຍ ພາສາລາວ ປີທີ 2

**ຕອນທີ 3** : ຜົນການວິເຄາະຫາຄ່າດັດສະນີປະສິດທິຜົນຂອງການຮຽນຮູ້ທັກສະການອ່ານຄໍາສັບອັກສອນທໍາ ໂດຍໃຊ້ແບບເຝິກ ສໍາລັບສຶກສາ ສາຍ ພາສາລາວ ປີທີ 2

## ຜົນການວິເຄາະຂໍ້ມູນ

**ຕອນທີ 1** : ຜົນການວິເຄາະຫາປະສິດທິພາບຂອງແບບເຝິກທັກສະການອ່ານຄໍາສັບອັກສອນທໍາ ສໍາລັບນັກສຶກສາ ສາຍ ພາສາລາວ ປີທີ 2 ຕາມເກນມາດຕະຖານ 75 / 75.

